# ການເງິນ

ກະຊວງການເງິນ

ລາຍໄຕມາດ ປີທີ 1 ສະບັບທີ 3 ປະຈຳເດືອນ ກໍລະກົດ-ກັນຍາ ປີ 1996






ພິທີຊຸມນຸມມິດຕິງສະຫຼອງວັນສ້າງຕັ້ງການເງິນຄົບຮອບ 46 ປີ








ຄະນະກຳມະການ

ໃນມື້ອອກຫວຍ

ພັດທະນາ



ວິທີອອກເລກ

ລາງວັນຫວຍ

ພັດທະນາ



ຜູ້ໂຊກດີຖືກ ລາງວັນທີ່ 1 : 3 ລ້ານກີບ :
ທ. ມະນີສອນ ສັນຕິ,ປະຊາຊົນ ບ. ໂພນ
ໄຊ ມ.ສີສັດຕະນາກ ຂ.ກຳແພງນະຄອນ
ງວດ 12 ສາຍ ຄ ອອກວັນທີ 20/6/96
ເລກທີອອກ : 57833 ໄດ້ຮັບລາງວັນ
ເປັນແຊັກ ເພື່ອຄວາມສະດວກສະບາຍ
ແລະປອດໄພ .

## ວາລະສານການເງິນ

**ຫົວໜ້າບັນນາທິການ**

ທ່ານ ຄຳພັນ ທອມສີນບັດ

**ຮອງຫົວໜ້າບັນນາທິການ**

ທ່ານ ສາຍສະໜອນ ໄຊຊຸລຣນ

ທ່ານ ບຸນຊຸມ ສີສະຫວັດ

**ຄະນະບັນນາທິການ**

ທ່ານ ວິໄລສິດ ພິມມະສອນ

ທ່ານ ຄຳປານ ຍົດສີໄຊ

ທ່ານ ສີພັນດອນ ສີຫາວົງ

ທ່ານ ສິດທິສອນ ເທບພາສີ

ທ່ານ ເຕືອນ ບູບຜາສີ

ທ່ານ ນ.ທິບພະກອນ ຈັນທະວົງສາ

ທ່ານ ຄຳຜາຍ ວົງສາຄຳຜູຍ

**ອອກແບບ,ຈັດໜ້າ ແລະຕົບແຕ່ງ**

ທ່ານ ສາຍສະໜອນ ໄຊຊຸລຣນ



**ສຳນັກງານຕັ້ງຢູ່ :**

**ຖະໜົນສາມແສນໄທ113 ,**

**ເຮືອນເລກທີ 034/6 ;**

**ບ້ານ ສີຫອມ**

**ໂທຣ : 213328**


## ວາລະສານການເງິນ

| ບົດ | ໜ້າ |
|---|---|

| ■ ບົດປາໄສ ຂອງລັດຖະມົນຕີ............ | 4 |
| ■ ພາລະບົດບາດຂອງພາສີອາກອນ ໃນເສດຖະກິດແຫ່ງຊາດ ............... | 9 |
| ■ ຄວາມປະຕິຫານຂອງອາຊີຕາເວັນອອກ : ວາງພື້ນຖານໃຫ້ແກ່ການເຕີບໂຕ............. | 14 |
| ■ ການຮ່ວມມືເສດຖະກິດ ລະຫວ່າງ ອິນດູຈີນ ກັບບັນດາປະເທດອາຊຽນ ແລະແງ່ຂະຫຍາຍຕົວຕ່າງໆ............. | 27 |
| ■ ຂໍ້ກຳນົດວ່າດ້ວຍທີ່ຕັ້ງ ພາລະບົດບາດ ໜ້າທີ່ ຂອບເຂດສິດ ແລະໂຄງປະກອບ ການຈັດຕັ້ງຂອງກົມກວດກາການເງິນ.... | 34 |
| ■ ສະພາບການພັດທະນາເສດຖະກິດ - ສັງຄົມ ຂອງຍີ່ປຸ່ນ ໂດຍສັງເຂບ........... | 40 |
| ■ ແລກປ່ຽນຄວາມເຫັນ ບົດຮຽນເມັກຊິກໂກໃນການປ້ອງກັນ ແລະແກ້ໄຂວິກິດການທາງການເງິນ ...... | 48 |
| ■ ກົດໝາຍສ່ວຍສາອາກອນ.......... | 52 |

# *ບົດປາໄສ*

## *ຂອງລັດຖະມົນຕີກະຊວງການເງິນ*

## *ໃນໂອກາດສະຫລອງວັນສ້າງຕັ້ງລະບົບການເງິນຄົບຮອບ 46ປີ*

ມື້ນີ້ ເປັນມື້ຄົບຮອບ 46 ປີ ແຫ່ງການສ້າງຕັ້ງລະບົບການເງິນ,ຊຶ່ງມີຄວາມຫມາຍສຳຄັນຢ່າງຍິ່ງສຳລັບ ຂະແຫນງການເງິນຂອງພວກເຮົາ ເພາະເປັນຄັ້ງຕຳອິດທີ່ພວກເຮົາໄດ້ຈັດຕັ້ງໂຮມຊຸມນຸມມິດຕິງ ສະເຫລີມສະຫລອງວັນສຳຄັນດັ່ງກ່າວ ແລະໃນບັນຍາກາດທີ່ທົ່ວພັກ, ທົ່ວກອງທັບແລະທົ່ວປວງຊົນ ພວມເຊື່ອມຊຶມ ແລະຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ່ 6 ຂອງພັກປະຊາຊົນ ປະຕິວັດລາວ,ພວມກະກຽມສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງສປປລາວ ຄົບຮອບ 5 ປີທີ່ຈະວຽນມາບັນຈົບຄົບຮອບອີກວາລະນຶ່ງໃນໂອກາດອັນມ່ຽງນີ້.

ຫວນຄືນຫລັງໄປ 46 ປີກ່ອນຫນ້ານີ້ຄືວັນທີ 13 ສິງຫາ 1950 ຫນໍ່ແຫນງຂອງລະບົບການເງິນຂອງປະເທດເຮົາໄດ້ຮັບການສ້າງຕັ້ງຂື້ນ ໃນກອງປະຊຸມໃຫຍ່ຜູ້ແທນລາວຕໍ່ຕ້ານຢູ່ເຂດທີ່ຫມັ້ນ ແຂວງຫົວພັນ ໂດຍມີຜູ້ແທນທີ່ເປັນຕົວແທນໃຫ້ແກ່ປະຊາຊົນຫລາຍຊັ້ນຄົນເຂົ້າຮ່ວມ 150 ທ່ານ.ນັບແຕ່ປີນັ້ນມາເຖິງປະຈຸບັນ,ບົນເສັ້ນທາງແຫ່ງການເຕີບໃຫຍ່ຂະຫຍາຍຕົວມາເປັນເວລາ 46 ປີ,ລະບົບການເງິນກໍ່ໄດ້ຜ່ານຜ່າຄວາມຫຍຸ້ງຍາກນາໆປະການ,ຊຶ່ງໃນແຕ່ລະໄລຍະແຫ່ງການກ້າວຂື້ນນັ້ນ ມັນແມ່ນຂະບວນວິວັດ ແຫ່ງການປັບປຸງ ແລະເສີມຂະຫຍາຍນະໂຍບາຍການເງິນໃຫ້ສອດຄ່ອງກັບເງື່ອນໄຂ,ຈຸດພິເສດຂອງຫນ້າທີ່ການເມືອງຂອງພັກຕະຫລອດມາ.ຕະຫລອດໄລຍະແຫ່ງການນຳພາ ຂອງຕົນພັກໄດ້ເອົາໃຈໃສ່ເປັນພິເສດຕໍ່ການນຳພາວຽກງານການເງິນອັນໄດ້ເຮັດໃຫ້ລະບົບການເງິນສາມາດປະກອບສ່ວນຢ່າງໃຫຍ່ຫລວງເຂົ້າໃນພາລະກິດ ປົກປັກຮັກສາແລະສ້າງສາພັດທະນາປະເທດຊາດຂອງພວກເຮົາ ໃຫ້ຂະຫຍາຕົວຢ່າງບໍ່ຢຸດຢັ້ງ.

ໃນໄລຍະແຫ່ງການປະຕິວັດຊາດປະຊາທິປະໄຕ(ແຕ່ປີ 1950-1975)ວຽກງານການເງິນໄດ້ຖືກຫັນໄປຮັບໃຊ້ສະຫນາມລົບ ແລະກົນໄກການເງິນໃນເວລານັ້ນ ກໍ່ແມ່ນກົນໄກການເງິນ "ເບີກຈ່າຍ ບໍລິຫານ",ຊຶ່ງສອດຄ່ອງກັບເງື່ອນໄຂຕົວຈິງທາງປະຫວັດສາດເວລານັ້ນ,ສະນັ້ນຈຶ່ງສາມາດປະກອບສ່ວນຢ່າງສຳຄັນເຂົ້າໃນໄຊຊະນະແຫ່ງການຕໍ່ສູ້ປົດປ່ອຍປະເທດຊາດ ແລະສ້າງຕັ້ງເປັນປະເທດ ສປປລາວ.

ພາຍຫລັງທີ່ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະສະຖາປະນາເປັນປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແລ້ວ,ການປະຕິວັດກໍ່ໄດ້ກ້າວເຂົ້າສູ່ໄລຍະໃໝ່ຄືໄລຍະແຫ່ງການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ,ຊຶ່ງເປັນບາດລ້ຽວທີ່ມີຄວາມໝາຍສຳຄັນທາງປະຫວັດສາດ ຂອງຊາດລາວເຮົາ.ອຳນາດການປົກຄອງໃໝ່ ຊຶ່ງຫາກໍ່ໄດ້ຮັບການສ້າງຕັ້ງແລະຍັງອ່ອນນ້ອຍຢູ່ນັ້ນ ໄດ້ປະເຊີນໜ້າກັບຫລາຍບັນຫາອັນໜັກໜ່ວງທາງດ້ານເສດຖະກິດ ການເງິນ ແລະອີກຫລາຍບັນຫາອັນຮີບດ່ວນທີ່ຈຳເປັນຕ້ອງໄດ້ແກ້ໄຂເນື່ອງຈາກວ່າ ພື້ນຖານເສດຖະກິດການເງິນທີ່ຫລ້າຫລັງຢູ່ແລ້ວ ພັດຖືກສົງຄາມຍືດເຍື້ອຍາວນານ ທຳລາຍຢ່າງໜັກໜ່ວງ,ການຜະລິດສະບຽງໄດ້ພຽງແຕ່ 7-8ແສນໂຕນເທົ່ານັ້ນ,ແຕ່ລະປີກໍຕ້ອງໄດ້ຊື້ເຂົ້າມາເພີ່ມຈຳນວນຫລາຍແສນໂຕນ,ອຸດສາຫະກຳສ່ວນໃຫຍ່ ຍັງຢູ່ໃນລະດັບການຜະລິດແບບຫັດຖະກຳ,ສິນຄ້າໃຊ້ສອຍກໍອີງໃສ່ແຕ່ຕ່າງປະເທດເປັນຕົ້ນຕໍ: ໃນເວລານັ້ນຂາອອກກວມພຽງ7-8% ຂອງຂາເຂົ້າ,ລະບົບຄົມມະນາຄົມຂົນສົ່ງບໍ່ທັນຂະຫຍາຍຕົວ,ຮ້າຍແຮງໄປກ່ວານັ້ນ ໄພທຳມະຊາດກໍ່ເກີດຂື້ນຕິດຕໍ່ກັນ.ເພື່ອແກ້ໄຂບັນຫານີ້ ສູນກາງພັກ ຈຶ່ງໄດ້ຕົກລົງ "ສຸມກຳລັງໃສ່ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ການເງິນ, ເຮັດໃຫ້ພື້ນຖານເສດຖະກິດ ການເງິນຂອງພວກເຮົາກັບເຂົ້າສູ່ຄວາມສະຫງົບເທື່ອລະກ້າວ,ສ້າງເງື່ອນໄຂດັດສ້າງ ແລະກໍ່ສ້າງເສດຖະກິດ,ຂະຫຍາຍວັດທະນະທຳ,ສຶກສາ ສາທາລະນະສຸກທັງແນໃສ່ແກ້ໄຂຄວາມຮຽກຮ້ອງຕ້ອງການອັນຮີບດ່ວນແລະຈຳເປັນຂອງປະຊາຊົນ...

"ບົນພື້ນຖານການຈັດຕັ້ງປະຕິບັດຈິດໃຈຊີ້ນຳດັ່ງກ່າວ ຂະແໜງການເງິນໂດຍໄດ້ສົມທົບແໜ້ນກັບທຸກພາກສ່ວນກ່ຽວຂ້ອງ ກໍ່ໄດ້ປະກອບສ່ວນຢ່າງຫ້າວຫັນເຂົ້າໃນການຟື້ນຟູເສດຖະກິດເຮັດໃຫ້ສະພາບການກັບເຂົ້າສູ່ຄວາມເປັນປົກກະຕິເທື່ອລະກ້າວ ດ້ວຍການນຳໃຊ້ການຊ່ວຍເຫລືອຈາກບັນດາປະເທດສັງຄົມນິຍົມ ແລະປະເທດເພື່ອນມິດ ເປັນແຫລ່ງທຶນເບື້ອງຕົ້ນ ເພື່ອຟື້ນຟູການຜະລິດກະສິກຳ,ຊ່ວຍເຫລືອປະຊາຊົນກັບຄືນບ້ານເດີມ,ຟື້ນຟູການຜະລິດອຸດສາຫະກຳຕອບສະໜອງສິນຄ້າອັນຈຳເປັນຈຳນວນໜຶ່ງໃຫ້ແກ່ສັງຄົມ,ທັງເປັນການແກ້ໄຂບັນຫາວຽກເຮັດງານທຳ.ມາເຖິງທ້າຍຊຸມປີ 70 ສະພາບການໄດ້ກ້າວເຂົ້າສູ່ຄວາມສະຫງົບໃນເບື້ອງຕົ້ນ ຊຶ່ງສະແດງອອກດັ່ງນີ້ : ໃນປີ 1980 ຜົນຜະລິດເຂົ້າບັນລຸໄດ້ 1,053ລ້ານໂຕນ,ຜະລິດພັນອຸດສາຫະກຳເພີ່ມຂື້ນ 2 ເທື່ອ,ຂາອອກເພີ່ມຂື້ນ 1,7 ເທື່ອ, ລາຍຮັບງົບປະມານ ເພີ່ມຂື້ນ 6,5 ເທື່ອທຽບໃສ່ປີ 1976. ໃນໄລຍະແຫ່ງການປະຕິບັດແຜນການ 5 ປີຄັ້ງທີ 1 ວຽກງານການເງິນກໍ່ໄດ້ມີບາດກ້າວຂະຫຍາຍຕົວໃໝ່,ສະພາບການຂາດດຸ່ນງົບປະມານໄດ້ຮັບການແກ້ໄຂໃນທາງທີ່ດີຂື້ນ:ລາຍຮັບພາຍໃນ ຂອງງົບປະມານກວມເອົາ 54% ຂອງ

ລາຍຮັບທັງໝົດໃນປີມ້ອນທ້າຍຂອງແຜນການ ແລະສະພາບຂາດແຄນເງິນສົດຂອງທະນາຄານກໍ່ໄດ້ຮັບການແກ້ໄຂເທື່ອລະກ້າວ .

ລວມຄວາມແລ້ວ ຈາກບ່ອນທີ່ອີງໃສ່ການພິມຈຳນ່າຍ ແລະການຊ່ວຍເຫລືອກູ້ຢືມເປັນແຫຼ່ງລາຍຮັບຕົ້ນຈໍ ງົບປະມານໄດ້ກ້າວຂື້ນອີງໃສ່ພື້ນຖານການຜະລິດພາຍໃນ ເພື່ອເປັນແຫຼ່ງລາຍຮັບທີ່ຮັບປະກັນໃຫ້ແກ່ລາຍຈ່າຍເທື່ອລະກ້າວ.ກົງຈັກການເງິນ ກໍ່ໄດ້ເປັນຮູບເປັນຮ່າງຂື້ນແຕ່ສູນກາງລົງຮອດທ້ອງຖິ່ນ,ຖິ່ນແຖວພະນັກງານກໍ່ໄດ້ເຕີບໃຫຍ່ຂະຫຍາຍຕົວທັງທາງດ້ານປະລິມານແລະຄຸນນະພາບ.ແຕ່ຖ້າມາເບິ່ງທາງດ້ານເສດຖະກິດມະຫາພາກແລ້ວກໍ່ເຫັນໄດ້ວ່າອັດຕາຂະຫຍາຍຕົວເສດຖະກິດຢູ່ໃນລະດັບຕ່ຳ,ຍອດຜະລິດພັນພາຍໃນສະເລັ່ຽຕໍ່ປີເພີ່ມຂື້ນ 4,9% ໃນຄະນະທີ່ອັດຕາເງິນເຟີ້ຢູ່ໃນລະດັບ 50%-60%ຕໍ່ປີ.ໜື່ງໃນສາເຫດທີ່ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຊ້າ ກໍ່ຄືກົນໄກຄຸ້ມຄອງແບບບໍລິຫານເກືອກູນລວມສູນອາດຍາສິດ ລວມທັງກົນໄກຄຸ້ມຄອງການເງິນ ສະນັ້ນພັກເຮົາຈື່ງອອກມະຕິກ່ຽວກັບການດັດແປງກົນໄກຄຸ້ມຄອງເສດຖະກິດ ໃນປີ 1985 ໂດຽຫັນໄປສູ່ກົນໄກໄລ່ລຽງທຸລະກິດບົນພື້ນຖານຫລັກການເປັນເຈົ້າຕົນເອງທາງດ້ານການເງິນຂອງລັດວິສາຫະກິດ ແລະເປັນເຈົ້າການໃນການສ້າງ ແລະປະຕິບັດແຜນການ.ແນວທາງປ່ຽນແປງໃໝ່ຢ່າງມີຫລັກການຂອງພັກໄດ້ຖືກກຳນົດອອກແລະຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຄັ້ງທີ່ 4 ຂອງພັກ.ແລະໃນປີ ນະໂຍບາຍປ່ຽນແປງໃໝ່ທາງດ້ານເສດຖະກິດ ກໍ່ເປັນພາກສ່ວນປະກອບໜື່ງ ເປັນຕົ້ນແມ່ນນະໂຍບາຍໂຄງປະກອບເສດຖະກິດ,ນະໂຍບາຍຫັນໄປສູ່ກົນໄກຕະຫລາດ ໂດຽມີການດັດສົມຂອງລັດ,ນະໂຍບາຍນຳໃຊ້ຫລາຍພາກສ່ວນເສດຖະກິດທີ່ສະເໝີພາບກັນຕໍ່ໜ້າກົດໝາຍ,ນະໂຍບາຍເປີດກ້ວາງການພົວພັນສິນຄ້າເງິນຕາ,ການຄ້າເສລີຖືກກົດໝາຍ. ການປະຕິບັດແນວທາງປ່ຽນແປງໃໝ່ຢ່າງມີຫຼັກການຂອງພັກ ໄດ້ສ້າງຜົນກະທົບຢ່າງຕັ້ງໜ້າໃນຫລາຍດ້ານ ເວົ້າສະເພາະໃນຂົງເຂດງົບປະມານຂອງລັດ ກໍ່ໄດ້ຫລຸດຜ່ອນການເກືອກູນແບບລາມປາມລົງ,ຢຸດຕິການຖົມຊຸມໃຫ້ແກ່ບັນດາລັດວິສາຫະກິດ,ຂະແໜງການແລະທ້ອງຖິ່ນຕ່າງໆ ກໍ່ໄດ້ມີຄວາມຮັບຜິດຊອບໃນການຈັດຕັ້ງງົບປະມານຫລາຍກ່ວາເກົ່າ.

ກອງປະຊຸມການເງິນທົ່ວປະເທດ ໃນປີ 1990ໄດ້ເປັນຂີດໝາຍສຳຄັນແຫ່ງການຫັນປ່ຽນດ້ານການເງິນ,ດ້ານທັດສະນະກ່ຽວກັບວຽກງານການເງິນແລະໄດ້ວາງທິດທາງໜ້າທີ່ລະອຽດຂອງວຽກງານການເງິນໃນຊຸມປີຂ້າງໜ້າ ຊື່ງໄດ້ກຳນົດອອກຢ່າງຊັດເຈນໃນບົດປະກອບຄຳເຫັນຂອງທ່ານ ໄກສອນ ພົມວິຫານ ອະດີດປະທານພັກແລະອະດີດປະທານປະເທດທີ່ເຄົາລົບຮັກ ໂດຽສະເພາະ 6 ທັດສະນະອັນພື້ນຖານທີ່ຕ້ອງກຳແໜ້ນໃນວຽກງານການເງິນເປັນຕົ້ນ

ທັດສະນະກ່ຽວກັບກົນໄກການເງິນ "ເປີດ". ບົນພື້ນຖານການປະຕິບັດມະຕິຕ່າງໆຂອງພັກ ແລະລັດຖະບານ,ມະຕິ ຂອງກອງປະຊຸມການເງິນທົ່ວປະເທດປີ 1990 ແລະຈັດຕັ້ງຜັນຂະຫຍາຍອອກເປັນລະບຽບກົດໝາຍຫລາຍສະບັບ ເປັນຕົ້ນກົດໝາຍງົບປະມານ,ກົດໝາຍພາສີ,ກົດໝາຍສ່ວຍສາອາກອນ ແລະຂໍ້ກຳນົດກົດລະບຽບອີກຫລາຍສະບັບ ເພື່ອເປັນພື້ນຖານທາງດ້ານນິຕິກຳອັນໜັກແໜ້ນ,ການປະຕິບັດວຽກງານການເງິນກໍ່ປະສົບຜົນສຳເລັດໃນຫລາຍດ້ານ ທັງໃນດ້ານລາຍຮັບແລະລາຍຈ່າຍ ອັນທີ່ເດັ່ນຊັດຂື້ນ ກໍ່ຄືນັບແຕ່ປີ 1993ເປັນຕົ້ນມາ ລາຍຮັບງົບປະມານສາມາດກຸ້ມລາຍຈ່າຍບໍລິຫານ ແລະມີສ່ວນເຫລືອສະສົມນັບມື້ນັບຫລາຍຂື້ນ ເພື່ອລົງທືນສົມທົບເຂົ້າໃສ່ການກໍ່ສ້າງພື້ນຖານໂຄງລ່າງຈຳນວນໜື່ງທີ່ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ ສັງຄົມຂອງປະເທດ,ອີກອັນໜື່ງການນຳໃຊ້ນະໂຍບາຍການເງິນເປັນຕົ້ນ ແມ່ນນະໂຍບາຍພາສີອາກອນ(ນະໂຍບາຍໂຄງປະກອບອັດຕາພາສີອາກອນ),ນະໂຍບາຍລາຍຈ່າຍງົບປະມານໃນຖານະເປັນເຄື່ອງມືຄຸ້ມຄອງມະຫາພາກ ກະທົບໃສ່ການລົງທືນ, ການໃຊ້ສອຍ,ການຮັກສາຄວາມໝັ້ນທ່ຽງດ້ານການເງິນ ຄວບຄຸມອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ສົມເຫດສົມຜົນ,ໄພ່ວາງງານຊຶ່ງຈະມີຜົນໃນທາງບວກຕໍ່ຈັງຫວະການຂະຫຍາຍຕົວຂອງເສດຖະກິດ ໃນເງື່ອນໄຂກົນໄກຕະຫລາດເລີ່ມຈະມີການຄ່ອງຕົວຂື້ນ ແລະມີບົດບາດພົ້ນເດັ່ນ ອັນໄດ້ສະແດງອອກໃຫ້ເຫັນໃນການບັນລຸຜົນສຳເລັດທາງດ້ານເສດຖະກິດມະຫາພາກ ໃນຊຸມປີ 1991-95 ຍອດຜະລິດພັນພາຍໃນໄດ້ເພີ່ມຂື້ນໃນອັດຈາສະເລັ່ຽ 6,4%ຕໍ່ປີ ແລະອັດຕາເງິນເຟີ້ ກໍ່ຢູ່ໃນອັດຕາສະເລັ່ຽບໍ່ເກີນ 10%ຕໍ່ປີ,ລາຍໄດ້ແຫ່ງຊາດສະເລັ່ຽຕໍ່ຄົນຕໍ່ປີ ຢູ່ໃນລະດັບ 350 ໂດລາ.ຜົນສຳເລັດທີ່ຍາດມາໄດ້ນີ້ ກໍ່ເນື່ອງຈາກວ່າ ຂະແໜງການເງິນ ຂອງພວກເຮົາໄດ້ຮັບການເອົາໃຈໃສ່ຊີ້ນຳຢ່າງໃກ້ສິດ ຈາກການນຳໃນທຸກຂັ້ນ,ຈາກການຮ່ວມໄມ້ຮ່ວມມື ຂອງຂະແໜງການ,ພາກສ່ວນກ່ຽວຂ້ອງ ຕະຫລອດປະຊາຊົນພໍ່ຄ້າຊາວຂາຍ ບວກກັບຄວາມບຸກບືນສູ້ຊົນທຸ່ມເທເຫື່ອແຮງ ແລະສະຕິປັນຍາ ຂອງພະນັກງານການເງິນຂັ້ນຕ່າງໆ ສະນັ້ນໃນໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຍ້ອງຍໍແດ່ບັນດາທ່ານ ບັນດາສະຫາຍມານະທີນີ້ດ້ວຍ.

ບັນດາທ່ານ ທີ່ຮັກແພງ

ວິວັດທະນາການຂອງໂລກຍຸກປະຈຸບັນນີ້ໄດ້ຖືກພັດທະນາໄປຢ່າງໄວວາທີ່ສຸດ ໂດຽສະເພາະໃນຂົງເຂດວິທະຍາສາດ ແລະເຕັກໂນໂລຊີ ສະພາບການເຄັ່ງຕືງໄດ້ຫລຸດນ້ອຍຖອຍລົງ,ການຮ່ວມກຸ່ມທາງດ້ານເສດຖະກິດ ການເງິນ ການຄ້າຂອງບັນດາປະເທດຕ່າງໆ,ການຫັນເປັນສາກົນທາງດ້ານເສດຖະກິດ ໄດ້ກາຍເປັນທ່າອ່ຽງທີ່ພົ້ນເດັ່ນຂື້ນ ຂອງຍຸກສະໄໝ,ການຜັນແປສະ

ພາບການຂອງໂລກ ຍັງຄົງສືບຕໍ່ດຳເນີນໄປຢ່າງສະລັບຊັບຊ້ອນ ຊຶ່ງມີທັງແງ່ທີ່ເປັນກາລະໂອກາດ ແລະແງ່ທີ່ເປັນສິ່ງທ້າທາຍທົດສອບ ຊຶ່ງເລັ່ງທວງໃຫ້ແຕ່ລະປະເທດຕ້ອງປັບປຸງຍຸດທະສາດໃນການພົວພັນພາຍນອກ,ຍຸດທະສາດໃນການພັດທະນາເສດຖະກິດສັງຄົມຂອງປະເທດຕົນ ເພື່ອເຊື່ອຈານເຂົ້າກັບເສດຖະກິດໂລກ ແລະຍາດແຍ່ງກາລະໂອກາດອັນເອື້ອອຳນວຍ ເພື່ອພັດທະນາປະເທດຂອງຕົນ ກະກຽມກ້າວເຂົ້າສູ່ສັດຕະວັດທີ21 ດ້ວຍທ່ວງທ່າທີ່ໜັກແໜ້ນ .

ການທັນເປັນສາກົນທາງດ້ານເສດຖະກິດ ແລະການເຂົ້າຮ່ວມກຸ່ມເສດຖະກິດ ການຄ້າສຳລັບປະເທດເຮົາ ມັນກໍ່ແມ່ນຄວາມຈຳເປັນພາວະວິໄສ ເພາະວ່າໃນເງື່ອນໄຂປະຈຸບັນນີ້ ບໍ່ວ່າປະເທດໃດໆ ນັບທັງປະເທດນ້ອຍ,ໃຫຍ່,ຮັ່ງມີແລະທຸກຍາກ ບໍ່ສາມາດຈະຂະຫຍາຍຕົວໂດຍປັດສະຈາກການຮ່ວມມື,ແຂ່ງຂັນໃນເງື່ອນໄຂເສດຖະກິດຕະຫລາດໄດ້.ດັ່ງນັ້ນຖ້າອີງໃສ່ຄວາມຈຳເປັນພາວະວິໄສຂອງໜ້າທີ່ການເມືອງໃນໄລຍະໃໝ່ນີ້ ຂະແໜງການເງິນຂອງພວກເຮົາໃນຊຸມປີຕໍ່ໜ້າ ຕ້ອງອອກແຮງໃນການຂຸດຄົ້ນແຫລ່ງລາຍຮັບພາຍໃນປະເທດ ເພື່ອກ້າວຂຶ້ນຮັບປະກັນໃຫ້ແກ່ຄວາມຮຽກຮ້ອງຕ້ອງການທີ່ເພີ່ມຂຶ້ນຂອງການພັດທະນາເສດຖະກິດ ສັງຄົມ,ກ້າວໄປເຖິງແກ້ໄຂບັນຫາຂາດດຸນງົບປະມານໃນຊຸມປີຂ້າງໜ້ານີ້.ສະພາວະດັ່ງກ່າວນີ້ມັນເລັ່ງທວງໃຫ້ພວກເຮົາຕ້ອງໄດ້ສືບຕໍ່ປັບປຸງຕົນເອງໃນຫລາຍດ້ານ,ໃນນັ້ນອັນຮີບດ່ວນກ່ອນໝູ່ ແມ່ນຍົກສູງຄຸນນະພາບຂອງກົງຈັກ,ເພີ່ມປະສິດທິຜົນໃນການເຄື່ອນໄຫວກະກຽມທຸກເງື່ອນໄຂເພື່ອຫັນຂະແໜງການເງິນໃຫ້ກາຍເປັນຂະແໜງການທີ່ທັນສະໄໝຂຶ້ນເທື່ອລະກ້າວ . ອັນຕັດສິນກ່ອນໝູ່ ກໍຍັງແມ່ນການບຳລຸງ,ສ້າງບຸກຄະລາກອນທີ່ເຕັມໄປດ້ວຍຄວາມຈົງຮັກພັກດີ,ມີຄວາມສາມາດສູງທາງດ້ານວິຊາສະເພາະ .

ຄຽງຄູ່ກັບນັ້ນ ຖືສຳຄັນການເພີ່ມທະວີຄວາມສັກສິດ ແລະປະສິດທິຜົນໃນການນຳໃຊ້ນະໂຍບາຍເສດຖະກິດມະຫາພາກ ເຊັ່ນ : ນະໂຍບາຍພາສີອາກອນ,ນະໂຍບາຍລາຍຈ່າຍກະທົບໃສ່ແລະຈຳກັດປະກົດການທີ່ບໍ່ດີ ຂອງເສດຖະກິດຕະຫລາດໄດ້ຢ່າງທັນການ .

ທ້າຍສຸດນີ້ ອີກເທື່ອໜຶ່ງ ໃນໂອກາດວັນສຳຄັນຂອງຂະແໜງການເງິນພວກເຮົານີ້ ຂໍອວຍພອນໃຫ້ບັນດາທ່ານ ບັນດາສະຫາຍ ຈົ່ງມີສຸຂະພາບເຂັ້ມແຂງ ເຮັດລ້ອນພາລະໜ້າທີ່ ທີ່ຖືກມອບໝາຍທຸກປະການ .

# ພາລະບົດບາດພາສີອາກອນ ໃນເສດຖະກິດແຫ່ງຊາດ

ໂດຍ : ບຸນລິດ ເຄນນະວົງ

ໃນການພັດທະນາປະເທດນັ້ນ ທຸກລັດຕ່າງກໍມີຄວາມມຸ້ງຫວັງອັນແນ່ນອນຂອງຕົນ ເພື່ອຄວາມຍືນຍົງຄົງຕົວຂອງປະເທດຊາດ ແຕ່ຄວາມມຸ້ງຫວັງດັ່ງກ່າວມີລັກສະນະແຕກຕ່າງກັນ.ໃນປະເທດທີ່ພັດທະນາແລ້ວ ຄົງເຫນັ້ນຫນັກໃສ່ການປ້ອງກັນພາວະເສດຖະກິດຕົກຕ່ຳ ບໍ່ໃຫ້ເກີດໄພເງິນເຟີ້ ແລະໄພວ່າງງານເປັນອັນຕົ້ນຕໍ.ສ່ວນໃນບັນດາປະເທດທີ່ຍັງບໍ່ທັນພັດທະນາແມ່ນຕ້ອງສຸມໃສ່ການພັດທະນາເສດຖະກິດໃນດ້ານກະສິກຳ ແລະອຸດສາຫະກຳ ເພື່ອມີຜົນຜະລິດປ່ຽນແທນການນຳເຂົ້າ ແນໃສ່ຫລຸດຜ່ອນການຂາດດຸ່ນທາງການຄ້າແລະການຂາດດຸ່ນດ້ານການຊຳລະລົງເທື່ອລະກ້າວ.ໂດຍທົ່ວໄປແລ້ວບັນຫາໃຫຍ່ທີ່ເປັນອຸປະສັກຕໍ່ການພັດທະນາເສດຖະກິດ-ສັງຄົມໃນປະເທດດັ່ງກ່າວ ແມ່ນການຂາດເຂີນທຶນຮອນດ້ານຊັບສິນ ຕະຫຼອດເຖິງບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດ ດ້ານເຕັກນິກວິຊາການ ລວມຄວາມວ່າ ການດຳເນີນນະໂຍບາຍບໍລິຫານປະເທດຊາດຂອງລັດຖະບານທຸກປະເທດໃນໂລກ ຍອມມີເປົ້າຫມາຍບາງຢ່າງທີ່ຄ້າຍຄືກັນ ເປັນຕົ້ນແມ່ນເຮັດໃຫ້ປະຊາຊົນມີຄວາມຢູ່ດີກິນດີ,ມີວຽກເຮັດງານທຳ,ສ້າງສະຖຽນລະພາບທັງໃນດ້ານເສດຖະກິດ ແລະສັງຄົມ.ໃນການພັດທະນາປະເທດ ບໍ່ວ່າຢູ່ໃນລະດັບໃດ ຫລືຂະຫນາດໃດ ເພື່ອບັນລຸຜົນສຳເລັດ ກ່ອນອື່ນຫມົດຕ້ອງມີກົນໄກ ແລະນະໂຍບາຍການເງິນທີ່ສອດຄ່ອງກັບແນວທາງນະໂຍບາຍກໍ່ສ້າງເສດໃນແຕ່ລະໄລຍະ ໃນນັ້ນຄວນຖືເປັນສຳຄັນນະໂຍບາຍລະດົມ ແລະນຳໃຊ້ເງິນທີ່ສະສົມມາໄດ້ .

ເປັນທີ່ຊາບກັນດີຢູ່ແລ້ວວ່າ ການລະດົມແລະການນຳໃຊ້ທຶນຂອງລັດຖະບານມີຜົນກະທົບໃສ່ພາວະເສດຖະກິດ ເນື່ອງຈາກວ່າການລະດົມເງິນພາຍໃຕ້ຮູບການຕ່າງໆ ລວມທັງຮູບການເກັບພາສີອາກອນ ເປັນການດູດເອົາເງິນໄປຈາກພາວະເສດຖະກິດ ແລະໃນທາງກົງກັນຂ້າມ ການຈ່າຍເງິນ ເປັນການເທເງິນລົງໃນພາວະເສດຖະກິດແຫ່ງຊາດ.ການດຶງດູດ ແລະການເທເງິນດັ່ງກ່າວ ຊຶ່ງລ້ວນແຕ່ມີຄວາມຈຳເປັນພາວະວິໄສ ຈະໄດ້ຮັບຜົນດີຫລືບໍ່ນັ້ນ ມັນຂຶ້ນກັບຈຳນວນເງິນ,ຂຶ້ນກັບນະໂຍບາຍ ແລະວິທີການນຳໃຊ້ເງິນເປັນສ່ວນໃຫຍ່. ໃນອາດີດກໍຄືປະຈຸບັນຫລາຍປະເທດໄດ້ນຳໃຊ້ ແລະຍັງສືບຕໍ່ນຳໃຊ້ພາສີອາກອນເປັນເຄື່ອງມືຂອງນະໂຍບາຍການ

➡

ເງິນຂອງລັດ ຫລື" ການເງິນ ສາທາລະນະ" ເພາະຖືວ່າພາສີອາກອນມີພາລະບົດບາດສຳຄັນໃນການລະດົມເງິນ ແລະມີພາລະບົດບາດທີ່ມີຜົນກະທົບໃສ່ເປົ້າຫມາຍທາງເສດຖະກິດ.ຜ່ານມານັກເສດຖະສາດຫລາຍຄົນ ໄດ້ພະຍາຍາມໃຫ້ຄຳນິຍາມແກ່ຄຳວ່າ "ພາສີອາກອນ" ເພື່ອໃຫ້ໄດ້ຄຳຫມາຍທີ່ກວມເອົາຫມົດທຸກປະເພດພາສີອາກອນດັ່ງຕົວຢ່າງຕໍ່ໄປນີ້ :

"ພາສີອາກອນຄືສິ່ງທີ່ລັດຖະບານບັງຄັບເກັບຈາກປະຊາຊົນ ໂດຍບໍ່ມີສິ່ງຕອບແທນແກ່ຜູ້ເສັຽພາສີອາກອນໂດຍກົງ"

"ພາສີອາກອນຫມາຍເຖິງລາຍໄດ້ຫລືຊັບພະຍາກອນທີ່ມີການເຄື່ອນຍ້າຍຈາກພາກສ່ວນເອກກະຊົນໄປສູ່ພາກສ່ວນລັດຖະບານ ແລະບໍ່ກໍ່ໃຫ້ເກີດພາລະໃນການຊຳລະຄືນຂອງລັດຖະບານ"

"ພາສີອາກອນຄືເງິນບໍລິຈາກຈາກບຸກຄົນໂດຍຖືກບັງຄັບໃຫ້ຈ່າຍແກ່ລັດຖະບານ ເພື່ອໃຊ້ຈ່າຍຮ່ວມກັນຂອງປະຊາຊົນ ໂດຍບໍ່ໄດ້ລະບຸວ່າຈະໄດ້ຮັບຜົນປະໂຫຍດຕອບແທນເປັນພິເສດ ຫຼືບໍ່"

ນອກຈາກນີ້ກໍຍັງມີຄຳນິຍາມຫລາຍຢ່າງອື່ນໆອີກ ແຕ່ບັນດາຄຳນິຍາມທີ່ປະກົດອອກມານັ້ນ ຍັງບໍ່ເປັນຫນ້າພໍໃຈແກ່ມະຫາຊົນ.ສິ່ງດັ່ງກ່າວນີ້ສະແດງໃຫ້ເຫັນວ່າ ທັດສະນະຕໍ່ການເກັບພາສີ ແລະນຳໃຊ້ເງິນທີ່ໄດ້ມາຈາກການເກັບພາສີ ມີຄວາມແຕກຕ່າງກັນໄປຕາມຕົ້ນສັງກັດທາງການເມືອງຂອງນັກເສດຖະສາດແຕ່ລະຄົນ.ແນວໃດກໍ່ຕາມ ເມື່ອສັງລວມເນື້ອໃນຂອງຄຳນິຍາມທັງຫມົດເຂົ້າກັນແລ້ວກໍພໍສະຫລຸບໄດ້ວ່າ "ພາສີອາກອນ" ແມ່ນຊັບສິນລວມທັງແຮງງານຊຶ່ງປະຊາຊົນປະກອບສ່ວນເພື່ອພາລະກິດຂອງຊາດໃນລັກສະນະທີ່ແຕກຕ່າງກັນ:ປະເທດໃດທີ່ສັງຄົມຖືກຄອບງຳດ້ວຍອິດທິພົນຂອງກຸ່ມຄົນໃດຫນຶ່ງທີ່ກຳເສດຖະກິດ ການເກັບພາສີອາກອນມີລັກສະນະເກັບເກນເອົາດ້ວຍການບັງຄັບ.ກົງກັນຂ້າມ ສ່ວນໃນປະເທດປະຊາທິປະໄຕປະຊາຊົນນັ້ນ ປະຊາຊົນມີຄວາມຕື່ນຕົວທາງການເມືອງມີສະຕິຊາດສູງ ຍ້ອນກຳແຫນ້ນເຊື່ອມຊຶມແນວທາງນະໂຍບາຍກໍ່ສ້າງເສດຖະກິດສັງຄົມທີ່ວາງອອກໃນນັ້ນເຂົາເຈົ້າເຫັນແຈ້ງຜົນປະໂຫຍດສ່ວນລວມ ແລະຜົນປະໂຫຍດຂອງເຂົາເຈົ້າເອງ ການເສັຽພາສີອາກອນຈຶ່ງກາຍເປັນພັນທະຂອງພົນລະເມືອງທຸກຄົນ ຫມາຍຄວາວ່າການເສັຽພາສີອາກອນດຳເນີນໄປດ້ວຍຄວາມສະມັກໃຈ ໂດຍບໍ່ມີການບັງຄັບແຕ່ປະການໃດ.

ບົດບາດຂອງພາສີອາກອນມີບາງດ້ານຄື:

<u>ບົດບາດລະດົມລາຍຮັບ</u>

ນະໂຍບາຍພາສີອາກອນເປັນນະໂຍບາຍທີ່ຮັບປະກັນຫລັກການຍຸດຕິທຳ:ຜູ້ມີລາຍໄດ້ນ້ອຍກໍປະກອບສ່ວນເຮັດພັນທະຫນ້ອຍ ຜູ້ທີ່ມີລາຍໄດ້ສູງກໍຕ້ອງປະກອບສ່ວນເຮັດພັນທະຫລາຍ.ບົນຫລັກການດັ່ງກ່າວ ເພື່ອໃຫ້ທຸກຄົນໄດ້ເຂົ້າຮ່ວມ

ໃນພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດຕາມຄວາມສາມາດຂອງຕົນນັ້ນ ໃນກິດໝາຍເພິ່ນໄດ້ແບ່ງພາສີອາກອນໃນລະບົບຂອງມັນເປັນສອງປະເພດ : ພາສີທາງກົງ ແລະ ພາສີທາງອ້ອມ.

ພາສີທາງກົງເຊັ່ນ ອາກອນລາຍໄດ້ ແມ່ນການເກັບຈາກກໍາໄລຂອງບໍລິສັດ ແລະລາຍໄດ້ຂອງບຸກຄົນ.ອັດຕາອາກອນປະເພດນີ້ມີລັກສະນະກ້າວໜ້າ,ຈໍານວນລາຍໄດ້ ຫລືກໍາໄລສຸດທີ ຊຶ່ງເປັນພື້ນຖານຂອງການຄິດໄລ່ອາກອນນັ້ນແມ່ນຈັດເປັນຂັ້ນ ແຕ່ລະຂັ້ນຂອງລາຍໄດ້ ມີອັດຕາສະເພາະຂອງໃຜມັນຕາມລໍາດັບແຕ່ຕໍ່າຫາສູງ.

ພາສີທາງອ້ອມ ມີບາງປະເພດພາສີອາກອນເຊັ່ນ: ພາສີຂາເຂົ້າ ເປັນພາສີທີ່ເກັບຈາກການນໍາເຂົ້າສິນຄ້າເຄື່ອງຂອງເພື່ອຈຸດປະສົງທາງການຄ້າ ຫຼືການຊົມໃຊ້ສ່ວນບຸກຄົນ ຫາກວ່າມູນຄ່າສິນຄ້າເຄື່ອງຂອງນັ້ນເກີນມູນຄ່າຜ່ອນຜັນຕາມນະໂຍບາຍທົ່ວໄປ;ອາກອນຕົວເລກທຸລະກິດ ເກັບຈາກການຜະລິດ,ການຄ້າແລະການບໍລິການອື່ນໆ ມີອັດຕາເກັບເປັນສ່ວນຮ້ອຍຕາມລາຄາສິນຄ້າ ແລະຄ່າບໍລິການ ເປັນອັດຕາຕາຍໂຕ.

ປະຈຸບັນນີ້ ຫລາຍປະເທດໄດ້ນໍາໃຊ້ອາກອນມູນຄ່າເພີ່ມມາປ່ຽນແທນອາກອນຕົວເລກທຸລະກິດ ທັງນີ້ກໍເພື່ອຫລີກເວັ້ນການເກັບອາກອນຊໍ້າຊ້ອນກັນຫລາຍເທື່ອ ອັນຈະເຮັດໃຫ້ຜູ້ບໍລິໂພກໄດ້ຊົມໃຊ້ການບໍລິການ ແລະສິນຄ້າໃນລາຄາແພງເກີນຄວນ. ອາກອນທາງອ້ອມປະເພດໜຶ່ງອີກເອີ້ນວ່າ ອາກອນຊົມໃຊ້ ຕັ້ງຂຶ້ນເພື່ອດັດສະເລັ່ຽລາຍໄດ້ໃນສັງຄົມຈາກຜູ້ທີ່ມີເງື່ອນໄຂສູງທາງເສດຖະກິດ ໄປສູ່ເຂດແຄ້ວນ ແລະຊຸມຊົນທີ່ຄວນຈະໄດ້ຮັບການຊ່ວຍເຫຼືອເກື້ອກູນໃນການຟື້ນຟູຖານະຊີວິການເປັນຢູ່ໃຫ້ເປັນປົກກະຕິ.ອາກອນປະເພດນີ້ເກັບຈາກສິນຄ້າຊັ້ນສູງເຊັ່ນ : ເຫລົ້າ,ຢາສູບ,ເຄື່ອງສໍາອາງ,ພາຫະນະບາງປະເພດ,ນໍ້າມັນເຊື້ອໄຟ ແລະອື່ນໆ . ພາສີອາກອນທາງອ້ອມມີອັດຕາແຕກຕ່າງກັນໄປຕາມຄວາມສໍາຄັນຂອງສິນຄ້າ ແລະການບໍລິການ,ຜະລິດຕະພັນແລະການບໍລິການໃດ ທີ່ມີຄວາມຈໍາເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນທົ່ວໄປກໍ່ຖືກອັດຕາຕໍ່າ,ສ່ວນຜະລິດຕະພັນ ແລະການບໍລິການທີ່ຮັບໃຊ້ພຽງແຕ່ກຸ່ມຄົນໃດໜຶ່ງນັ້ນແມ່ນຖືກອັດຕາສູງ . ນອກຈາກນີ້ຍັງມີອາກອນ ແລະຄ່າທໍານຽມປະເພດອື່ນອີກຈໍານວນໜຶ່ງ ແຕ່ວ່າພາສີອາກອນທາງກົງ ແລະທາງອ້ອມດັ່ງກ່າວມານັ້ນ ເປັນພາຫະນະຕົ້ນຕໍ ໃນການສະສົມທຶນຮອນ ຊຶ່ງນໍາລາຍໄດ້ເປັນຈໍານວນຫລວງຫລາຍເຂົ້າຄັງ ແລະກິນອັດຕາສ່ວນໃຫຍ່ໃນຈໍານວນລາຍໄດ້ທັງໝົດຢູ່ພາຍໃນປະເທດ.

ບົນເສັ້ນທາງກໍ່ສ້າງເສດຖະກິດເປັນເອກະລາດ ເປັນເຈົ້າຕົນເອງເທື່ອລະກ້າວນັ້ນ ການຊຸດ

ຄ້ຳລາຍຮັບເປັນບັນຫາສຳຄັນ ເພື່ອຮັບປະກັນລາຍຈ່າຍສາທາລະນະທີ່ມີເປົ້າໝາຍເຮັດໃຫ້ເກີດປະໂຫຍດສູງສຸດຕໍ່ປະຊາຊົນ ເວົ້າລວມແມ່ນຮັບປະກັນຊີວິດ ແລະຊັບສິນສ່ວນລວມ,ຮັກສາສະຖຽນລະພາບທາງການເມືອງ,ຈຳກັດຂໍ້ຂັດແຍ່ງໃນສັງຄົມ,ສ້າງຄວາມອີ່ມໜຳສຳລານໃຫ້ແກ່ທຸກຊັ້ນຄົນ.

***<u>ບົດບາດດ້ານເສດຖະກິດ</u>***

ການເກັບພາສີອາກອນມີ 3 ຈຸດປະສົງຄື :

1. ລະດົມລາຍໄດ້
2. ຄວບຄຸມການປະພຶດຂອງຄົນໃນສັງຄົມ
3. ຮັກສາລະດັບລາຍໄດ້ແຫ່ງຊາດ

ໃນຂະບວນວິວັດແຫ່ງການວິວັດແຫ່ງການເຄື່ອນໄຫວເພື່ອບັນລຸ 3 ຈຸດປະສົງຂ້າງເທິງນີ້ ລ້ວນແຕ່ມີຜົນກະທົບເຖິງເປົ້າໝາຍເສດຖະກິດທັງຊື້ນ ເຊັ່ນ: ການເກັບພາສີຂາເຂົ້າບໍ່ສະເພາະແຕ່ເພື່ອເກັບລາຍໄດ້ເຂົ້າຄັງເງິນເທົ່ານັ້ນ ໃນເວລາດຽວກັນ ພາສີຂາເຂົ້າຍັງໄດ້ເຮັດໜ້າທີ່ປົກປ້ອງການຜະລິດພາຍໃນໄປໃນຕົວ ຄືກັນກັບມາດຕະການກຳນົດໂກຕາການນຳເຂົ້າສຳລັບຜະລິດຕະພັນທີ່ພວກເຮົາຢາກປົກປ້ອງ . ສ່ວນມາດຕະການຂອງພາສີຂາເຂົ້ານີ້ແມ່ນນຳໃຊ້ອັດຕາພາສີເປັນກຳແພງ. ຖ້າພວກເຮົາຫາກສັງເກດດີງ ຈະເຫັນໄດ້ວ່າ ແຕ່ລະປະເພດອາກອນມີໜ້າທີ່ສະເພາະຂອງໃຜມັນຊຶ່ງມີຜົນຕໍ່ເສດຖະກິດ ; ອາກອນຊົມໃຊ້ຕີໃສ່ສິນຄ້າຊັ້ນສູງ ແລະການບໍລິການທີ່ບໍ່ຈຳເປັນຕໍ່ຊີວິດການເປັນຢູ່ປະຈຳວັນ ຂອງທຸກຊັ້ນຄົນ ຕາມຄວາມຈິງແມ່ນມັນເຮັດໜ້າທີ່ຄວບຄຸມການຊົມໃຊ້,ຄວບຄຸມການຊົມໃຊ້ໝາຍເຖິງສ້າງທັດສະນະປະຢັດມັດທະຍັດໃນໝູ່ປະຊາຊົນບໍ່ໃຫ້ດຳລົງຊີວິດເກີນເງື່ອນໄຂ ແລະຄວາມສາມາດດ້ານເສດຖະກິດຂອງຕົນເອງ. ຍິ່ງປະຊາຊົນໃນຊາດປະຢັດໄດ້ຫລາຍເທົ່າໃດກໍຍິ່ງສະສົມໄດ້ທຶນຮອນຫລາຍຂື້ນເທົ່ານັ້ນ ເພື່ອນຳໃຊ້ເຂົ້າໃນການພັດທະນາເສດຖະກິດ.ສະເພາະຊັ້ນຄົນຜູ້ມີເງື່ອນໄຂສູງກໍ່ຊົມໃຊ້ໄດ້ຫລາຍກ່ວາ ພາຍຫຼັງໄດ້ເຮັດພັນທະຢ່າງຖືກຕ້ອງ ແລະຄົບຖ້ວນແລ້ວ. ໃນເວລາຜູ້ກ່ຽວຊົມໃຊ້ສິ່ງຂອງຊັ້ນສູງນັ້ນ ຜູ້ກ່ຽວກໍ່ເຮັດພັນທະເພີ່ມອີກຫລາຍກ່ວາຜູ້ທີ່ບໍ່ໄດ້ຊົມໃຊ້.

ໃນກໍລະນີອາກອນລາຍໄດ້ກໍເຊັ່ນດຽວກັນ ອັດຕາກ້າວໜ້າ ຫລືອັດຕາທະວີຄູນເປັນຂັ້ນນັ້ນເຮັດໜ້າທີ່ດັດສະເລ່ຍລາຍໄດ້ບໍ່ໃຫ້ຖານະຂອງຄົນໃນສັງຄົມຫລຸດໂຕນກັນຫລາຍເກີນໄປ. ເມື່ອມີການປະກອບສ່ວນເຮັດພັນທະເສຍພາສີອາກອນຫລາຍທຽບໃສ່ລວມຍອດຜະລິດຕະພັນພາຍໃນແລ້ວ ລັດກໍຈະສາມາດຮັກສາລະດັບລາຍໄດ້ແຫ່ງຊາດໄວ້ໄດ້. ໃນຖານະທີ່ເປັນເຄື່ອງມືຂອງນະໂຍບາຍການເງິນ ພາສີອາກອນຍິ່ງມີບົດບາດສຳຄັນໃນການແກ້ໄຂພາວະເສດຖະກິດຕົກຕ່ຳໃຫ້ກັບເຂົ້າສູ່ສະພາບປົກກະຕິ ຕົວຢ່າງ : ເມື່ອເກີດມີໄພເງິນເຟີ້ ຫລາຍປະເທດມັກຈະເພີ່ມອັດຕາພາສີອາກອນຂື້ນເພື່ອເກັບເອົາບໍລິມາດເງິນທີ່ຈໍລະຈອນຢູ່ໃນທ້ອງຕະຫລາດຢ່າງຫລວງຫລາຍນັ້ນ

ເຂົ້າຄືນທະນາຄານ ແລະໃນກໍລະນີເກີດໄພເງິນເຟີ້ ມີໄພວ່າງງານ ເພີ່ນກໍຈະເທເງິນອອກສ້າງໂຄງການໃດໜຶ່ງຂຶ້ນເພື່ອໃຫ້ຄົນຜູ້ວ່າງງານມີວຽກເຮັດ ແລະພ້ອມກັນນັ້ນກໍມີມາດຕະການຫຼຸດຜ່ອນອັດຕາພາສີອາກອນລົງ ເຮັດໃຫ້ລາຍໄດ້ ແລະຄວາມສາມາດຊື້ຂອງປະຊາຊົນເພີ່ມຂຶ້ນ.ໃນຍາມເສດຖະກິດຮຸ່ງເຮືອງ,ເພື່ອໃຫ້ປະຊາຊົນປະກອບສ່ວນສ້າງສາພັດທະນາປະເທດຊາດເພີ່ມຂື້ນ ແລະມີຄັງແຮໄວ້ຮັບປະກັນລາຍຈ່າຍບັງເອີນນັ້ນ ລັດຖະບານກໍຈະເພີ່ມອັດຕາອາກອນຕ່າງໆຂື້ນເຊັ່ນດຽວກັນ.ໃນບາງປະເທດ ລັດຖະບານຍັງໃຊ້ພາສີອາກອນເປັນເຄື່ອງມື ເພື່ອເຮັດໃຫ້ເງິນໝູນວຽນເປັນປົກກະຕິໃນສັງຄົມ ບໍ່ໃຫ້ເງິນໄປນອນຢູ່ລ້ານຳວັດຖຸສິ່ງຂອງທີ່ມີຄ່າ.ຜູ້ທີ່ມີເງິນຄຳຫລາຍໄປຊື້ເຄື່ອງເອ້ຢ້ອງ,ເຄື່ອງວັດຖຸໂບຮານຮູບແຕ້ມທີ່ມີຄຸນຄ່າມະຫາສານກໍຈະຕ້ອງໄດ້ເສັຽອາກອນພິເສດປະເພດໜຶ່ງອີກ ເອີ້ນວ່າ "ອາກອນມູນມໍລະດົກ".

ລວມຄວາມວ່າ ທຸກປະເພດພາສີອາກອນມີໜ້າທີ່ຊຸກຍູ້ການຜະລິດ ເຮັດໃຫ້ເສດຖະກິດແຫ່ງຊາດເຕີບໃຫຍ່ຂະຫຍາຍຕົວ ເພື່ອເປັນພື້ນຖານອັນໜັກແໜ້ນໃຫ້ແກ່ການເງິນ. ລັດຖະບານລະດົມໃຫ້ທົ່ວໜ່ວຍຮາກຖານການຜະລິດທຸລະກິດເຮັດພັນທະຈາກຜົນກຳໄລໃນອັດຕາສ່ວນທີ່ສົມເຫດສົມຜົນ ບົນຫລັກການຮັບປະກັນ 3ຜົນປະໂຫຍດໃຫ້ກົມກຽວກັນ. ຖ້າເຮົາເກັບພາສີອາກອນເກີນຄວາມສາມາດຂອງວິສາຫະກິດ ມັນຈະເປັນການເກັບທຶນ ແລະຈະເຮັດໃຫ້ວິສາຫະກິດດຳລົງຄົງຕົວຕໍ່ໄປບໍ່ໄດ້. ໃນທາງກົງກັນຂ້າມຖ້າບໍ່ເກັບພາສີອາກອນ ຫລືເກັບໃນອັດຕາທີ່ຕ່ຳເກີນໄປ ພວກເຮົາກໍຈະບໍ່ສາມາດເຕົ້າໂຮມໄດ້ທຶນຮອນອັນຈະເປັນແກ່ນສານ ໃຫ້ແກ່ການຂະຫຍາຍການຜະລິດ,ບໍ່ເກັບພາສີອາກອນບໍ່ໄດ້ໝາຍຄວາມວ່າຈະເຮັດໃຫ້ປະຊາຊົນໄດ້ຊົມໃຊ້ການບໍລິການແລະສິນຄ້າໃນລາຄາຖືກໄດ້ໂດຽອັດຕະໂນມັດ ຖ້າວ່າການຜະລິດບໍ່ຂະຫຍາຍຕົວ,ການສະໜອງບໍ່ພຽງພໍກັບຄວາມຕ້ອງການ.

---

**ການຮ່ວມມືເສດຖະກິດ** ........(ຕໍ່ຈາກໜ້າ 33 )

...ພື້ນຖານເສດຖະກິດແຜນການລວມສູນ ມາສູ່ພື້ນຖານເສດຖະກິດຕະຫລາດ.ພິເສດຕ້ອງໄດ້ແຈ້ງສິດຄອບຄອງ,ຄວາມຮັບຜິດຊອບທາງດ້ານການເງິນ ແລະການຫັນເປັນເສລີທາງດ້ານການຄ້າ .

ບັນດາປະເທດອິນດູຈີນມີລາຍໄດ້ສະເລັ່ຽຕໍ່ຫົວຄົນຕ່ຳກວ່າລະດັບຕ່ຳສຸດຂອງລາຍໄດ້ສະເລັ່ຽຕໍ່ຫົວຄົນຂອງອາຊຽນ.ການຮ່ວມກຸ່ມ ສາມາດເຮັດໃຫ້ການຜິດໂຕນກັນທາງດ້ານລາຍໄດ້,ລະດັບການພັດທະນາຄ່ອຍໆຫຍັບເຂົ້າໃກ້ກັນ.

# *ຄວາມປະຕິຫານຂອງອາຊີຕາເວັນອອກ: ວາງພື້ນຖານໃຫ້ແກ່ການເຕີບໂຕ*

(ບົດຂຽນໂດຍ **John Page** ສັນຊາດອາເມລິກາ,ເປັນນັກເສດຖະສາດຕົ້ນຕໍ ສຳລັບພາກພື້ນຕາເວັນອອກກາງ ແລະ ອາຟຣິກາເໜືອ ຂອງທະນາຄານໂລກ.ໄດ້ຮັບປະກາດສະນີຍະບັດ ຈາກມະຫາວິທະຍາໄລ Stanford ແລະ Oxford . ເປັນຜູ້ຊີ້ນຳ ການຄົ້ນຄ້ວາ ກ່ຽວກັບການປະຕິຫານ ຂອງອາຊີຕາເວັນອອກ ແລະເປັນຜູ້ຂຽນຕົ້ນຕໍ).

ແປ ແລະຮຽບຮຽງໂດຍ : ບ ສ

***ການເຕີບໂຕອັນໜ້າຕື່ນເຕັ້ນຂອງອາຊີຕາເວັນອອກ ສ່ວນຫຼາຍມາຈາກການສະສົມທຶນດ້ານວັດຖຸແລະທຶນມະນຸດຢ່າງແຮງ.ແຕ່ວ່າ ບັນດາເສດຖະກິດ ຂອງພາກພື້ນນີ້ ຍິ່ງກ່ວາຢູ່ຫຼາຍແຫ່ງອື່ນ ໄດ້ຮູ້ຈັກຈັດສັນຊັບພະຍາກອນ ໃສ່ການລົງທຶນ ທີ່ມີປະສິດທິຜົນ ບັນດາເສດຖະກິດດັ່ງກ່າວ ໄດ້ສືບທົບຫຼາຍນະໂຍບາຍ ລວມທັງການເຂົ້າແຊກແຊງ ຢ່າງມີເປົ້າໝາຍເຈາະຈົງ ແຕ່ກໍລວມມີປັດ***

ຜົນສຳເລັດ - ບາງຄົນກໍ່ເວົ້າວ່າແມ່ນຄວາມປະຕິຫານ - ຂອງບັນດາປະເທດອາຊີຕາເວັນອອກ ໄດ້ພາໃຫ້ເກີດມີການຕົກສະເງີ້ ແລະການຍົກຍ້ອງຈາກຜູ້ສັງເກດການພາຍນອກ , ເພິ່ນບໍ່ເຄີຍເຫັນການຂະຫຍາຍຕົວຢ່າງໄວວາແລະຍືນຍົງຄືແນວນີ້ຈັກເທື່ອ . ແຕ່ປີ 1965 ຫາປີ 1990 ການເຕີບໂຕໄດ້ໄວກ່ວາ 23 ເສດຖະກິດຂອງພາກພື້ນນີ້ ທຽບໃສ່ແຫ່ງອື່ນໃນໂລກ ( ເບິ່ງຮູບສະແດງໝາຍເລກ 1).ພ້ອມດຽວກັນນັ້ນ , ຄວາມບໍ່ສະເໝີພາບດ້ານລາຍໄດ້ ກໍຫຼຸດໜ້ອຍລົງ , ບາງເທື່ອກໍ່ເຫັນໄດ້ທັນຕາ ໃນໄລຍະສັ້ນ.ເປັນຕົ້ນເພີ່ນໄດ້ເຫັນຜົນສຳເລັດອັນພິເສດຂອງ 8 ເສດຖະກິດຄື: ຍີ່ປຸ່ນ,4ມັງກອນ-ສາທາລະນະລັດເກົາຫລີ,ຮົງກົງ,ສິງກະໂປແລະໄຕ້ຫວັນ(ຈີນ);ແລະ 3 ປະເທດທີ່ພວມຫັນເປັນອຸສາຫະກຳໃນອາຊີຕາເວັນອອກ-ອິນໂດເນເຊຍ ,ມາເລເຊຍ ແລະໄທ.

8 ເສດຖະກິດນີ້ ໄດ້ແຕກຕ່າງກັບບັນດາປະເທດພວມພັດທະນາອື່ນ ດ້ວຍ 6 ລັກສະນະດັ່ງຕໍ່ໄປນີ້ :

■ ໃນ ກະສິກຳ ມີການເຕີບໂຕຢ່າງໄວວາ ດ້ານຜົນຜະລິດແລະສະມັດຕະພາບ;

■ ມີການເຕີບໂຕສູງ ໃນການສົ່ງອອກສິນຄ້າອຸດສາຫະກຳ,ໃນການແລກປ່ຽນໃນໂລກ ພູດຂອງເຂົາເຈົ້າໃນຕະຫລາດເພີ່ມຂຶ້ນຈາກ 9% ໃນປີ 1965 ເປັນ 21% ໃນປີ 1990;

■ ອັດຕາ ການ ຈະເລີນພັນຂອງປະຊາກອນໄດ້ມີການຫຼຸດຜ່ອນຢ່າງໄວວາ ແລະດ້ວຍອັດຕາສ່ວນແຮງກ່ວາເກົ່າ;

■ ມີການເຕີບໂຕເລັ່ງຂຶ້ນດ້ານຕົ້ນທຶນເປັນວັດຖຸ,ສະເລ່ຍແຕ່ປີ 1960ຫາ1990,ທີ່ໄດ້ກາຍ 20% ຂອງລວມຍອດຜະລິດພັນພາຍໃນ GDP , ຍ້ອນມີອັດຕາການເກັບ

ອອມພາຍໃນສູງ ( ເບິ່ງຮູບສະແດງພາຍເລກ 2 );

■ ມີທຶນມະນຸດສູງ ແຕ່ທົ່ວທີ, ແລະມີການເຕີບໂຕຢ່າງແຂງແຮງຂອງທຶນດັ່ງກ່າວ;

■ ມີອັດຕາ ການເຕີບໂຕດ້ານຜະລິດຕະພາບສູງໂດຍທົ່ວໄປ.

ມີຫລາຍປະເທດ ທີ່ພວມພັດທະນາອື່ນຢາກເຮັດຄືບັນດາປະເທດອາຊີຕາເວັນອອກ , ອັນນັ້ນໄດ້ພາໃຫ້ມີການຕັ້ງຫຼາຍບັນຫາ.ຈະອະທິບາຍຜົນສຳເລັດໄດ້ແນວໃດ?ບົດບາດຂອງລັດກ່ຽວກັບການເຕີບໂຕມີແນວໃດ?ມີຂົງເຂດໃດແດ່ທີ່ຄວນຮ່ຳຮຽນເອົາ?

ເພື່ອ ຢາກຕອບ ບັນຫາດັ່ງກ່າວ ທະນາຄານໂລກໄດ້ດຳເນີນການຄົ້ນຄ້ວາໂດຍມີການປຽບທຽບກ່ຽວກັບການເຕີບໂຕດ້ານເສດຖະກິດ ແລະບົດບາດຂອງລັດໃນອາຊີຕາເວັນອອກ ແລະໄດ້ເຮັດລາຍງານອອກເປັນປຶ້ມ : "ຄວາມປະຕິຫານຂອງອາຊີຕາເວັນອອກ" .ນຶ່ງໃນບັນດາຂໍ້ສະຫຼຸບຂອງບົດຄົ້ນຄ້ວາດັ່ງກ່າວແມ່ນວ່າ ຜົນສຳເລັດນັ້ນບໍ່ແມ່ນເລື່ອງບັງເອີນ.ສະຖຽນລະພາບທີ່ເປັນໜ້າສັງເກດດ້ານເສດຖະກິດມະຫາພາກ ໄດ້ສົ່ງເສີມໃຫ້ມີການລົງທຶນເອກະຊົນ.ການວາງລະບຽບການ ໃນລະບົບທະນາຄານແລະບັນດາຄວາມສະດວກທັງຫຼາຍໄດ້ອຳນວຍໃຫ້ພວກທີ່ບໍ່ເຄີຍເກັບອອມ ມາແຕ່ກ່ອນ ໄດ້ເຮັດໃຫ້ລະດັບການອອມສູງຂື້ນ. ໃນຂົງເຂດການສຶກສາ ເພິ່ນໄດ້ຈົ່ງໃຈເອື້ອອຳນວຍການສຶກສາຂັ້ນປະຖົມ ແລະມັດທະຍົມເພື່ອຍົກລະດັບຂອງຜູ້ອອກແຮງງານໃຫ້ສູງຂື້ນ .ນະໂຍບາຍກະສິກຳໄດ້ແນໃສ່ເພີ່ມຜະລິດຕະພາບໂດຍບໍ່ເກັບພາສີສູງເກີນຄວນ ຕໍ່ເສດຖະກິດຊົນນະບົດ . ຢູ່ທຸກແຫ່ງການບິດຂເວດ້ານລາຄາ ກໍຢູ່ໃນຂອບເຂດທີ່ພໍຮັບເອົາໄດ້,ບັນດາແນວຄວາມຄິດ ແລະເຕັກໂນໂລຢີຂອງຕ່າງປະເທດໄດ້ຖືກຕ້ອນເອົາເປັນຢ່າງດີ.ດັ່ງນັ້ນ ປະກົດວ່າມັນບໍ່ເປັນ "ຄວາມປະຕິຫານ" ດ້ານເສດຖະກິດ : ຜົນສຳເລັດນັ້ນ ສົມ ກັບ ການອອກເຫື່ອເຫແຮງແທ້ໆ.

ແຕ່ວ່າ ຍັງມີ ອັນອື່ນອີກບັນດາເສດຖະກິດຕາເວັນອອກບໍ່ໃນເວລາໃດກໍເວລານຶ່ງຍັງໄດ້ປະຕິບັດ ນະໂຍບາຍ ລັດເຂົ້າແຊກແຊງ-ຊຶ່ງເປັນແງ່ນຶ່ງຂອງຫຼາຍບັນຫາທີ່ມີການຖົກຖຽງກັນຫຼາຍໃນການດຳເນີນນະໂຍບາຍພັດທະນາ.ບັນດາການແຊກແຊງດັ່ງກ່າວທີ່ມີການເລືອກເຟັ້ນໄດ້ສະແດງອອກພາຍໃຕ້ຫລາຍຮູບການ : ການບີບອັດຕາດອກເບ້ຍໜ່ອຍໜຶ່ງ, ການໃຫ້ສິນເຊື່ອຢ່າງມີການເລືອກເຟັ້ນ, ການສົ່ງເສີມຂະແໜງການຈຳນວນໜຶ່ງແລະນະໂຍບາຍການຄ້າທີ່ເອື້ອອຳນວຍແກ່ການສົ່ງອອກສິນສິນຄ້າອຸດສາຫກຳ.

ການປະຕິບັດບັນດາຫລັກການພື້ນຖານຂອງເສດຖະກິດແລະການເຂົ້າແຊກແຊງຂອງລັດໄດ້ປະກອບສ່ວນຫລາຍສ່ຳໃດຕໍ່ຜົນສຳເລັດຂອງອາຊີຕາເວັນອອກ? ອີງໃສ່ບົດຄົ້ນຄ້ວາດັ່ງກ່າວບັນດາເສດຖະກິດອາຊີຕາເວັນອອກໄດ້ມັ່ງຄັ່ງຂື້ນຍ້ອນວ່າບັນດາລັດຖະບານໄດ້ຮູ້ດຳເນີນການ 2 ດ້ານ ຄື : ປະກອບຕົ້ນທຶນເປັນວັດຖຸ ແລະຊັບພະຍາກອນ

ມະນຸດທີ່ຈຳເປັນ,ຈັດສັນຕົ້ນທຶນດັ່ງກ່າວໃສ່ໂຄງການລົງທຶນທີ່ໃຫ້ຜົນຜະລິດຫຼາຍແທ້,ແລະຍາດແຍງເອົາເຕັກໂນໂລຢີ ແລະນຳໃຊ້ມັນຢ່າງເປັນເຈົ້າການ ,ຈາກນັ້ນ ກໍກະຕຸ້ນໃຫ້ຜະລິດຕະພາບສູງຂື້ນ.

<u>ຍາດແຍງໃຫ້ມີທຶນ</u>

ບັນດາເສດຖະກິດ ອາຊີຕາເວັນອອກໄດ້ສະສົມທຶນເປັນວັດຖຸ ແລະທຶນມະນຸດຢ່າງໄວວາ ແລະເປັນລະບົບກ່ວາຜູ້ອື່ນ. ***ກໍ່ສ້າງທຶນມະນຸດ*** . ສະໄໝການເຕີບໂຕຢ່າງໄວວາໄດ້ເລີ່ມຂື້ນໃນເມື່ອອາຊີຕາເວັນອອກໄດ້ມີຂໍ້ໄດ້ປຽບຢ່າງຊັດເຈນໃນຂົງເຂດການສຶກສາ ທຽບໃສ່ບັນດາປະເທດພວມພັດທະນາອື່ນ,ຂໍ້ໄດ້ປຽບອັນນັ້ນ ອາຊີຍັງຮູ້ຖະໜອມໄວ້ດ້ວຍການລົງທຶນຢ່າງເປັນລະບົບໃສ່ການສຶກສາຂັ້ນປະຖົມ.ຕະຫຼອດຊຸມປີ 1960 , ການສຶກສາຂັ້ນປະຖົມແລະມັດທະຍົມໄດ້ຮັບການຂະຫຍາຍຕົວຫຼາຍກ່ວາໃນບັນດາເສດຖະກິດທີ່ມີລາຍໄດ້ສະເລັ່ຍຕໍ່າ ຫຼືປານກາງ . ຕົວຢ່າງໃນກາງຊຸມປີ 80 ສາທາລະນະລັດເກົາຫຼີ,ອິນໂດເນເຊຍແລະໄທໄດ້ສຸມລາຍຈ່າຍງົບປະມານສຳລັບການສຶກສາ 80% ໃສ່ການສຶກສາຂັ້ນປະຖົມ . ຍ້ອນອັດຕາການຈະເລີນພັນຫຼຸດລົງແລະເສດຖະກິດໄດ້ເຕີບໂຕຂື້ນຢ່າງໄວວານັ້ນ ,ເຖິງວ່າເຂົາໄດ້ຮັກສາອັດຕາສ່ວນການລົງທຶນໃສ່ການສຶກສາເທົ່າເດີມທຽບໃສ່ GDP ກໍຕາມ ແຕ່ຊັບພະຍາກອນ ທີ່ສະໜອງໃຫ້ການສຶກສາ ສຳລັບເດັກນ້ອຍແຕ່ລະຄົນໃນອາຊີຕາເວັນອອກ ກໍຍັງຫຼາຍກ່ວາຢູ່ໃນພາກພື້ນອື່ນທີ່ພວມພັດທະນາຄືກັນ.

ສ່ວນເຫລືອຂອງງົບປະມານສຳລັບການສຶກສາໄດ້ຖືກນຳໃຊ້ເຂົ້າໃນການສຶກສາດ້ານວິທະຍາສາດແລະເຕັກນິກເໜືອມັດທະຍົມ (ລວມທັງການສ້າງວິສາວະກອນ),ສ່ວນການສຶກສາດ້ານອັກສອນສາດແລະວິທະຍາສາດສັງຄົມນັ້ນ ແມ່ນປະໃຫ້ໂຮງຮຽນເອກະຊົນເປັນຜູ້ດູແລ.ບາງເສດຖະກິດໄດ້ນຳເຂົ້າການບໍລິການ ການສຶກສາ ເປັນຕົ້ນຂະແໜງວິຊາສະເພາະພິເສດ ເປັນຈຳນວນຫລວງຫລາຍ.

***ສ້າງລະບົບການເງິນທີ່ມີປະສິດທິພາບ ແລະຮັບປະກັນ*** : ນະໂຍບາຍການເງິນ ແມ່ນແນໃສ່ລະດົມການເກັບອອມແລະປ້ອງເງິນໄປສູ່ກິດຈະກຳທີ່ມີປະສິດທິພາບດ້ານສັງຄົມສູງ.

***ເພີ່ມການອອມ*** . ເຂົາລະດົມການອອມໂດຍປະຕິບັດອັດຕາດອກເບັ້ຍຄ່າຕອບແທນການອອມດ້ວຍອັດຕາທີ່ເປັນບວກແລະໂດຍການສ້າງລະບຽບການປ້ອງກັນຢ່າງເຂັ້ມງວດ,ດ້ວຍມີການກວດກາດູແລບັນດາສະຖາບັນການເງິນແລະດ້ວຍການປະຕິຮູບດ້ານສະຖາບັນ,ດ້ວຍລະບົບການເງິນທີ່ຮັບປະກັນ ອີງໃສ່ບັນດາທະນາຄານເພື່ອດູດດຶງຜູ້ອອມຂະໜາດນ້ອຍ,ຍູ່ຢີ່ປຸ່ນແລະໄຕ້ຫວັນ ເຂົາໄດ້ສ້າງຕ່າໜ່າງໜ່ວຍຜາກປະຢັດຢູ່ຫ້ອງການໄປສະນີ ບ່ອນມີຄວາມປອດໄພສູງ,ເອົາຄ່າສິ້ນເປືອງທຸລະການຕໍ່າທຽບໃສ່ພາກເອກະຊົນ ອັນໄດ້ເຕົ້າໂຮມຊັບພະຍາກອນມາໃຫ້ລັດນຳໃຊ້ເປັນຈຳນວນຫລາຍ.

➡

ລັດຖະບານຈຳນວນໜຶ່ງ ຍັງມີນະໂຍບາຍຕັ້ງໜ້າກ່ວາອີກ ເພື່ອສົ່ງເສີມການເກັບອອມ. ປະເທດ ມາເລເຊຍ ແລະສິງກະໂປ ໄດ້ບັງຄັບໃຫ້ມີການຈ່າຍເງິນປະກອບສ່ວນເຂົ້າໃນຄັງປ້ອງກັນໄພ.ຢູ່ເກົາຫຼີ,ຍີ່ປຸ່ນແລະໄຕ້ຫວັນ ເພິ່ນໄດ້ຍົກອັດຕາດອກເບັ້ຽເງິນກູ້ເພື່ອການຊົມໃຊ້ໃຫ້ສູງແລະໄດ້ຕີພາສີໜັກໃສ່ການຊົມໃຊ້ຊັ້ນສູງທີ່ມີລັກສະນະຟຸມເຟືອຍ.

***ເພີ່ມການລົງທຶນ*** . ເພິ່ນໃຊ້ຫຼາຍວິທີການ.ບັນດາເສດຖະກິດອາຊີຕາເວັນອອກ ໄດ້ຮັບຜົນດີກ່ວາຫຼາຍປະເທດພວມພັດທະນາໃນການສ້າງໂຄງລ່າງເສີມ ຂອງການລົງທຶນເອກະຊົນ.ຫລັງຈາກນັ້ນ ເຂົາເຈົ້າໄດ້ສ້າງບັນຍາກາດທີ່ອຳນວຍແກ່ການລົງທຶນ ໂດຍຮັກສາລາຄາເຄື່ອງຈັກແລະເຄື່ອງປະກອບໃຫ້ຢູ່ໃນລະດັບຕ່ຳ ໂດຍທຽບຖານ ,ໂດຍສະເພາະ ເກັບພາສີຂາເຂົ້າຕ່ຳສຳລັບເຄື່ອງຈັກທີ່ນຳເຂົ້າມາ. ສິ່ງດັ່ງກ່າວ ໄດ້ສົ່ງຜົນກະທົບທີ່ສຳຄັນໃສ່ການລົງທຶນເອກະຊົນ.ສຸດທ້າຍ ສິ່ງທີ່ເປັນອັນໂຕ້ຖຽງກັນຫລາຍກ່ວາໝູ່ ແມ່ນວ່າ ບັນດາເສດຖະກິດດັ່ງກ່າວໄດ້ຮັກສາອັດຕາດອກເບັ້ຽເງິນກູ້ ແລະເງິນຝາກຕ່ຳກ່ວາອັດຕາຕະຫລາດ,ເພິ່ນເຄີຍເອີ້ນວິທີການນີ້ວ່າເປັນການປາບປາມດ້ານການເງິນ.

ຢູ່ເກົາຫລີ , ຍີ່ປຸ່ນ ,ມາເລເຊຍ,ໄຕ້ຫວັນ ແລະໄທ ໄດ້ມີໄລຍາວນານທີ່ເພິ່ນໃຊ້ມາດຕະການປາບປາມດ້ານການເງິນແບບເບົາໆ. ໃນບັນດາເສດຖະກິດດັ່ງກ່າວ, ບັນດາອັດຕາດອກເບັ້ຽຕົວຈິງສຳລັບເງິນຝາກ ແມ່ນເທົ່າກັບສູນ ຫລືເປັນບວກໜ້ອຍໜຶ່ງ ແລະໝັ້ນຄົງ ແຕ່ເນື່ອງຈາກວ່າການເກັບອອມບໍ່ສັ່ນສະເທືອນຍ້ອນການປ່ຽນແປງອັດຕາດອກເບັ້ຽຕົວຈິງ(ທີ່ເປັນບວກ),ເຈົ້າໜ້າທີ່ຂອງລັດສາມາດກຳນົດການປາບປາມດ້ານອັດຕາດອກເບັ້ຽເງິນຝາກ ໂດຍບໍ່ໃຫ້ມີການກະທົບໃສ່ເງິນອອມ,ແລ້ວໃຫ້ປະຕິບັດອັດຕາດອກເບັ້ຽດັ່ງກ່າວຕໍ່ຜູ້ມາກູ້ຢືມຜູ້ສຸດທ້າຍ , ຜົນສຸດທ້າຍ ກໍເປັນການຊ່ວຍໜູນບໍລິສັດ. ແຕ່ນະໂຍບາຍນັ້ນແຕກຕ່າງກັບ ບັນດາລະບອບ ປາບປາມດ້ານການເງິນທີ່ບັນດາປະເທດທີ່ມີລາຍໄດ້ສະເລັ່ຽຕ່ຳ ຫຼືປານກາງອື່ນໄດ້ນຳໃຊ້ ຢູ່ບ່ອນວ່າອັດຕາດອກເບັ້ຽຕົວຈິງນັ້ນ ຍັງໝັ້ນຄົງ ແລະເປັນບວກຢູ່ .

<u>**ຈັດສັນທຶນຢ່າງມີປະສິດທິພາບ**</u>

ແຕ່ ເຖິງວ່າ ມີທຶນວັດຖຸ ແລະທຶນມະນຸດໃນລະດັບສູງ ກໍບໍ່ເປັນອັນຄ້ຳປະກັນວ່າຈະບັນລຸຜົນສຳເລັດ . ຍັງຕ້ອງປ້ອງຊັບພະຍາກອນທີ່ສະສົມມານັ້ນໄປໃສ່ບັນດາກິດຈະກຳທີ່ໃຫ້ປະສິດທິຜົນສູງ. ໃນທີ່ນີ້ອີກ ບັນດາເສດຖະກິດເຫຼົ່ານັ້ນໄດ້ໃຊ້ ກົນໄກຕະຫລາດທັງໝົດ ແລະ ໃຊ້ການແຊກແຊງຂອງລັດ ເພື່ອແນະນຳການນຳໃຊ້ຊັບພະຍາກອນໃນຕະຫຼາດແຮງງານແລະໃນຕະຫຼາດທຶນ. ໃນຕະຫຼາດແຮງງານ,ນະໂຍບາຍຕົ້ນຕໍ ໂດຍທົ່ວໄປແມ່ນວ່າ ນຳໃຊ້ຕະຫລາດທັງເຮັດໃຫ້ບັນດາໂຄງສ້າງອ່ອນນ້ອມ.ໃນຕະຫລາດທຶນ,ລັດໄດ້ແຊກແຊງເຂົ້າຢ່າງເປັນລະບົບ ເພື່ອດັດສົມອັດຕາດອກເບັ້ຽແລະທັງຊີ້ແນະສິນເຊື່ອ,ແຕ່ກໍບໍ່ອຸດໜູນພວກກູ້

➡

ຍືນເກີນຄວນ,ໃຫ້ເຂົ້າສູ່ບັນດາຂະແໜງການທີ່ບໍ່ແມ່ນວ່າຈະອີງໃສ່ແຕ່ຕະຫລາດໄດ້ເທົ່ານັ້ນແລະທັງເອົາໃຈໃສ່ຕິດຕາມຢ່າງໃກ້ຊິດ .

*ປ່ອຍປະ ໃຫ້ໄປຕາມຕະຫຼາດ : ບັນດາຕະຫຼາດແຮງງານທີ່ອ່ອນມອນ*

ການແຊກແຊງຂອງລັດໃນຕະຫລາດແຮງງານ ໃນບັນດາເສດຖະກິດອາຊີ ແຕກຕ່າງຢ່າງເຫັນໄດ້ຊັດກັບຢູ່ບັນດາປະເທດພວມພັດທະນາອື່ນ.ໃນອາຊີຕາເວັນອອກ ບັນດາລັດຖະບານເວົ້າທົ່ວໄປ ສາມາດຕໍ່ຕ້ານກັບຄວາມຮຽກຮ້ອງຂອງບັນດາກຳມະບານໃນການກຳນົດອັດຕາເງິນເດືອນຕໍ່າສຸດ ແຕ່ໄດ້ເອົາໃຈໃສ່ອອກແຮງສ້າງວຽກເຮັດງານທຳແລະຈັດຄົນເຂົ້າເຮັດວຽກຫຼາຍກ່ວາ. ຈາກນັ້ນ ການມີວຽກເຮັດໄດ້ເພີ່ມຂື້ນແລ້ວໄດ້ມີການເພີ່ມເງິນເດືອນຕາມມາ ຍ້ອນກົນໄກຕະຫຼາດແລະຍ້ອນການເພີ່ມຂື້ນຂອງຜະລິດຕະພາບ ສາມາດໃຫ້ມີການດັດສົມດັ່ງກ່າວ.ຍ້ອນວ່າເພີ່ມສາມາດດັດແປງເງິນເດືອນຫຼືອັດຕາການເພີ່ມເງິນເດືອນໃຫ້ຕ່ຳລົງໄດ້ຕາມການສົມປ່ຽນຂອງອຸບປະສົງຕໍ່ແຮງງານ,ການປັບຕົວຫລັງຈາກມີການກະທົບແຮງດ້ານເສດຖະກິດມະຫາພາກເວົ້າທົ່ວໄປໃນອາຊີ ຈຶ່ງເຮັດໄດ້ຢ່າງໄວວາແລະຢ່າງບໍ່ມີຜົນສະທ້ອນຫລາຍໃນອາຊີອາຄະເນ ຖ້າທຽບໃສ່ບັນດາພາກພື້ນທີ່ພວມພັດທະນາອື່ນ.

*ຊ່ວຍເຫລືອຕະຫຼາດ:ບັນດາຕະຫຼາດການເງິນ:*

ເພີ່ມນຳໃຊ້ຕະຫຼາດການເງິນ ເພື່ອຈັດສັນຊັບພະຍາກອນລະຫວ່າງບັນດາການລົງທຶນທີ່ແຂ່ງຂັນກັນ. ທຸກເສດຖະກິດໃນອາຊີ ໄດ້ພະຍາຍາມປ້ອງການລົງທຶນໄປໃສ່ກິດຈະການຂັ້ນປະຖົມ ໃນລະດັບທີ່ແຕກຕ່າງກັນ . ທຸກໆເສດຖະກິດ ເວັ້ນແຕ່ຮົ່ງກົງ ໄດ້ອຳນວຍໃຫ້ການສົ່ງອອກໄດ້ຮັບສິນເຊື່ອຢ່າງອັດຕະໂນມັດ.ຢູ່ຮົງກົງແລະສິງກະໂປ ຂະແໜງການກໍ່ສ້າງເຮືອນຢູ່ ໄດ້ຮັບບູລິມະສິດ ແຕ່ວ່າຢູ່ ອິນໂດເນເຊຍ , ມາເລເຊຍ ແລະໄທ ເພີ່ມໃຫ້ຂະແໜງກະສິກຳ ແລະ ວິສາຫະກິດຂະໜາດນ້ອຍໄດ້ຮັບອະພິສິດຫຼາຍກ່ວາ.ໄຕ້ຫວັນ ໄດ້ເລີ່ມດ້ວຍການສົ່ງເສີມການພັດທະນາດ້ານເຕັກໂນໂລຍີ. ໃນເວລາ ທີ່ແຕກຕ່າງກັນ ຢູ່ເກົາຫລີ ແລະຍີ່ປຸ່ນເພີ່ມໄດ້ໃຊ້ສິນເຊື່ອ ເປັນເຄື່ອງມືນະໂຍບາຍອຸດສາຫະກຳ ເພື່ອສົ່ງເສີມການຕໍ່ກຳປັ່ນ, ອຸດສາຫະກຳເຄມີ ແລະອຸດສາຫະກຳຜະລິດລົດຍົນ.

ໃນບັນດາເສດຖະກິດຕາເວັນອອກ ການຊີ້ແນະສິນເຊື່ອທີ່ເປັນການອຸດໜູນໃນຕົວ ແມ່ນມີໜ້ອຍ ຖ້າທຽບໃສ່ບັນດາເສດຖະກິດພວມພັດທະນາອື່ນ,ແຕ່ການທີ່ລັດອຳນວຍຄວາມສະດວກໃນການຮັບສິນເຊື່ອ ແລະລັດອຸດໜູນຢ່າງເປີດເຜີຍຕໍ່ບາງຂະແໜງການ ແລະບັນດາວິສາຫະກິດທີ່ໄດ້ຮັບອະພິສິດຈຳນວນນຶ່ງນັ້ນ ແມ່ນມີຫຼາຍໃນຊຸມປີ70ຊຶ່ງສະແດງອອກຕາມຊ່ອງຫ່າງໃຫຍ່ ລະຫວ່າງອັດຕາດອກເບ້ຍຂອງທະນາຄານແລະອັດຕາດອກເບັ້ຍຂອງບັນດາອົງການທີ່ໃຫ້ສິນເຊື່ອສະເພາະ ແຕ່ໃນຊຸມປີໝັງນີ້ ຊ່ອງຫ່າງນັ້ນ ກໍໄດ້ຫຼຸດນ້ອຍ

ລົງຢ່າງຈະແຈ້ງ. ໃນປະເທດ ຍີ່ປຸ່ນ ການອຸດໜູນໃນຕົວ ແມ່ນມີໜ້ອຍ ແລະການຊີ້ແນະສິນເຊື່ອອາດມີຫລາຍກວ່າ ເພື່ອໃຊ້ເປັນສັນຍານ ແລະເປັນກົນໄກການຄ້ຳປະກັນ ແທນທີ່ຈະເປັນສິ່ງຈູງໃຈ.

ເຖິງວ່າໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອບັນລຸເປົ້າໝາຍຂອງນະໂຍບາຍເສດຖະກິດ , ການຊີ້ແນະສິນເຊື່ອ ໃນ ອາຊີຕາເວັນອອກກໍຍັງມີການຜູກມັດໃສ່ບັນດາບັນທັດຖານອັນເຂັ້ມງວດກ່ຽວກັບຜົນຕອບໄດ້ຮັບຕາມຄາດໝາຍ. ໃນ ປະເທດຍີ່ປຸ່ນ ບັນດາຜູ້ນຳຂອງບັນດາທະນາຄານຂອງລັດຕ້ອງປະຕິບັດຕາມບັນທັດຖານການປະເມີນດ້ານເສດຖະກິດ ແລະການເງິນທີ່ເຂັ້ມງວດ ໃນການອະນຸມັດເງິນກູ້ໃຫ້ບັນດາຂະແໜງການທີ່ລັດຢາກສົ່ງເສີມ. ໃນເກົາຫລີ , ບັນດາກຸ່ມບໍລິສັດໃຫຍ່ແຕ່ລະແຫ່ງ ຕ້ອງຢູ່ພາຍໃຕ້ບັນດາບັນທັດຖານຂອງຕະຫຼາດ ເຊັ່ນ ປະລິມານການສົ່ງອອກ ແລະປະສິດທິຜົນດ້ານກຳໄລ.ບັນດາບົດຄົ້ນຄ້ວາທີ່ໄດ້ດຳເນີນມາໃນໄລຍະມໍ່ໆຜ່ານມານີ້ ກ່ຽວກັບການຊີ້ແນະດັ່ງກ່າວ ໄດ້ນຳຜົນປະມາໃຫ້ບັນດາວິສາຫະກິດ ທີ່ສາມາດຮັບເອົາເຕັກໂນໂລຢີມາໃຊ້ຢ່າງຫລວງຫຼາຍ.

ແຕ່ບັນດາໂຄງການຊີ້ແນະສິນເຊື່ອ ໄດ້ປະລາໄຊ ໂດຍສະເພາະຖ້າວ່າບໍ່ໄດ້ຖືກຜູກມັດກັນກັບບັນດາເງື່ອນໄຂທີ່ເຂັ້ມງວດເວລາອະນຸມັດແລະຕິດຕາມການນຳໃຊ້ສິນເຊື່ອ-ຄືເຄີຍເຫັນໃນບັນດາເສດຖະກິດພວມພັດທະນາອື່ນ. ການພັດທະນາຂະແໜງການເງິນເປັນກ້າວໆແລະການໄຂປະຕູຢ່າງກວ້າງຂວາງຂອງບັນດາເສດຖະກິດດັ່ງກ່າວ ຕໍ່ກະແສເຂົ້າອອກຂອງທຶນສາກົນ ໄດ້ເຮັດໃຫ້ໂຄງການ ຊີ້ແນະ ສິນເຊື່ອເສັຽຄວາມສຳຄັນໄປ.

**ສົ່ງເສີມຜະລິດຕະພາບ**

ບັນດາເສດຖະກິດຂອງອາຊີຕາເວັນອອກໄດ້ນຳໃຊ້ຫຼາຍຍຸດທະສາດເພື່ອເລັ່ງຜະລິດຕະພາບ, ເປັນຕົ້ນໂດຍດູດຊຶມເອົາເຕັກໂນໂລຢີຂອງຕ່າງປະເທດ ,ໂດຍປະຕິບັດການຫັນເປັນອຸດສາຫະກຳຢ່າງມີການເອື້ອເຟື້ອ ແລະດ້ວຍການສົ່ງເສີມການສົ່ງອອກໃຫ້ເຕີບໂຕຢ່າງໄວວາ.

*ດູດຊຶມເອົາເຕັກໂນໂລຢີຂອງຕ່າງປະເທດ* : ເພິ່ນໄດ້ນຳເອົາກົນໄກຕ່າງໆມານຳໃຊ້ . ທຸກໆເສດຖະກິດທີ່ພວມພັດທະນາໄດ້ຮັບເອົາການຖ່າຍທອດເຕັກໂນໂລຢີ ພາຍໃຕ້ຮູບສິດທິບັດ,ການນຳເຂົ້າເຄື່ອງຈັກ ເຄື່ອງປະກອບຈາກຕ່າງປະເທດ ແລະສົ່ງຄົນໄປຮັບການຝຶກອົບຮົມຢູ່ຕ່າງປະເທດ. ການໄຂປະຕູເອົາການລົງທຶນໂດຍກົງຈາກຕ່າງປະເທດໄດ້ເຮັດໃຫ້ມີຄວາມເລັ່ງລັດຍາດແຍ່ງເອົາເຕັກໂນໂລຢີຢູ່ ຮົງກົງ, ມາເລເຊຍ ແລະສິງກະໂປແລະໃນມໍ່ໆມານີ້ ຢູ່ອິນໂດເນເຊຍແລະຢູ່ໄທ. ຢູ່ຍີ່ປຸ່ນ,ເກົາຫລີແລະຕາມຂະໜາດນ້ອຍກວ່າຢູ່ໄຕ້ຫວັນ ເພິ່ນໄດ້ຈຳກັດການລົງທຶນໂດຍກົງຂອງຕ່າງປະເທດ ແຕ່ຊ້ຳພັດປະຕິບັດການຍາດແຍ່ງເອົາຄວາມຮູ້ຈາກຕ່າງປະເທດຢ່າງແຂງແຮງ ໂດຍການຊື້ເອົາສິດທິບັດ,ສົ່ງຄົນໄປຮຽນຢູ່ຕ່າງປະເທດແລະນຳ

ເຂົ້າເຄື່ອງຈັກ , ເຄື່ອງປະກອບ
ແລະອຸປະກອນຈາກຕ່າງປະເທດ.

*ສົ່ງເສີມກິດຈະກຳຈຳນວນນຶ່ງ:*
ບັນດາລັດຖະບານອາຊີຕາເວັນ
ອອກສ່ວນຫຼາຍ ໄດ້ສົ່ງເສີມຂະ
ແໜງການສະເພາະຕາມລະດັບ
ທີ່ແຕກຕ່າງກັນ.ຕົວຢ່າງທີ່ຮູ້ຈັກດີ
ກວ່າເພື່ນ ແມ່ນປະເທດຍີ່ປຸ່ນໃນ
ຊຸມປີ 50 ໄດ້ສົ່ງເສີມອຸດສາຫະ
ກຳໜັກ ຊຶ່ງແມ່ນນະໂຍບາຍທີ່
ປະເທດເກົາຫລີຮຽນແບບໃນເວ
ລາຕໍ່ມາ. ພວກເຂົາເຈົ້າສາມາດ
ເຮັດໄດ້ໂດຍຕັ້ງກຳແພງສະກັດ
ກັ້ນການນຳເຂົ້າ ແລະອະນຸມັດ
ເງິນອຸດໜູນດ້ານທຶນ ແລະປັດ
ໃຈການຜະລິດອື່ນທີ່ນຳເຂົ້າມາ.
ມາເລເຊຍ ,ສິງກະໂປ ,ໄຕ້ຫວັນ
ແລະຈີນກະທັ່ງຮົ່ງກົງກໍໄດ້ນຳ
ໃຊ້ນະໂຍບາຍຄ້າຍຄືກັນນີ້ .ແຕ່
ວ່າໂດຍທົ່ວໄປ ເປັນການກະຕຸກ
ຊຸກຍູ້ໜ້ອຍກວ່າ-ເພື່ອເລັ່ງການ
ພັດທະນາບັນດາອຸດສາຫະກຳ
ປາຍແຫຼມ .ບໍ່ປະກົດວ່າສິ່ງດັ່ງ
ກ່າວ ບໍ່ໄດ້ສົ່ງຜົນສະທ້ອນຕໍ່ໂຄງ
ສ້າງຂອງຂະແໜງການອຸດສາ
ຫະກຳ ຫລືໃສ່ວິວັດທະນາການ
ຂອງຜະລິດຕະພາບຢ່າງໃດເລີຍ.

*ສົ່ງເສີມການສົ່ງອອກ :* ການ
ສົ່ງເສີມຢ່າງຂະຫຍັນຂັນແຂງຕໍ່
ການສົ່ງອອກການຜະລິດອຸດສາ
ຫະກຳໄດ້ປະກອບສ່ວນຢ່າງຫຼວງ
ຫຼາຍໃຫ້ຜະລິດຕະພາບເພີ່ມຂື້ນ
ຢ່າງໄວວາ .ທຸກເສດຖະກິດເວັ້ນ
ເສັຽແຕ່ ຮົງກົງໄດ້ຜ່ານຂັ້ນຕອນ
ການປ່ຽນແທນການນຳເຂົ້າໂດຍ
ນຳໃຊ້ອັດຕາພາສີປົກປ້ອງທີ່ສູງ
ແລະປ່ຽນແປງຕາມເວລາ , ແຕ່
ວ່າ ຂັ້ນຕອນດັ່ງກ່າວໄດ້ສີ້ນສຸດ
ລົງໄວກ່ວາຢູ່ແຫ່ງອື່ນ .ຮົ່ງກົງ,
ມາເລເຊຍ ແລະສິງກະໂປໄດ້ປະ
ຕິບັດລະບອບການຄ້າທີ່ໃກ້ຄຽງ
ກັບການແລກປ່ຽນໂດຍເສລີ .

ເກົາຫລີໃຕ້,ຍີ່ປຸ່ນ ແລະໄຕ້
ຫວັນ ໄດ້ສ້າງການປົກປ້ອງຄືນ
ເປັນຫຼາຍເທື່ອ ແລະກໍ່ເປັນໄລຍະ
ຍາວ ແລະສົ່ງເສີມການສົ່ງອອກ
ຢ່າງຂະຫຍັນຫ້າວຫັນທີ່ສຸດ,ຈີ່ງ
ວ່າ ບັນດາສິ່ງຊຸກຍູ້ໄດ້ຮັບການ
ຈັດແບ່ງຢ່າງສະເໝີກັນ , ມັນ
ແມ່ນຜົນມາຈາກການອຸດໜູນ
ສຳລັບຮ່ວງໜຸບທຶນ ແທນທີ່ຈະ
ແມ່ນລັກສະນະ ທາງການຄ້າ ;
ການສົ່ງເສີມການສົ່ງອອກ ໄດ້
ຮັບການປະຕິບັດ ໄປພ້ອມກັບ
ມາດຕະການ ປົກປ້ອງພາຍໃນ.
ກົງກັນຂ້າມ ໃນບັນດາເສດຖະ
ກິດຂອງອາຊີອາຄະເນ ອຳນາດ
ລັດບໍ່ໄດ້ຢຸດຢັ້ງໃນການປ່ອຍລະ
ບອບການຄ້າໃຫ້ເສລີເປັນກ້າວໆ
ທັງໃຫ້ການຊ່ວຍເຫຼືອດ້ານສະ
ຖາບັນແກ່ຜູ້ສົ່ງອອກ ເພື່ອຊຸກຍູ້
ການສົ່ງອອກ .ໃນທຸກເສດຖະກິດ
ດັ່ງກ່າວ ລະບອບການແລກປ່ຽນ
ເງິນຕາຕ່າງປະເທດໄດ້ຮັບການ
ປົດປ່ອຍ ແລະເງິນຕາແຫ່ງຊາດ
ໄດ້ຖືກຫຼຸດຄ່າເລື້ອຍໆ ເພື່ອອູ້ມຊູ
ໃຫ້ການສົ່ງອອກຂະຫຍາຍຕົວ,
ສິ່ງດັ່ງກ່າວບໍ່ໄດ້ຫລອດສາຍຕາ
ຂອງຜູ້ຜະລິດໄດ້ ລວມທັງຜູ້ຜະ
ລິດສຳລັບຕະຫຼາດພາຍໃນ ທີ່ມີ
ການປົກປ້ອງ,ເຮັດໃຫ້ພວກເຂົາ
ເຈົ້າຄິດວ່າ ບໍ່ໄວກໍ່ຊ້າຮອດຍາມ
ໃດຍາມນຶ່ງ ເຂົາເຈົ້າເອງ ກໍຈະ
ການເປັນຜູ້ສົ່ງອອກ.

ການຂະຫຍາຍຕົວ ຂອງ
ການສົ່ງອອກສິນຄ້າອຸດສາຫະ
ກຳໄດ້ເປັນກົນໄກທີ່ມີພະລັງສຳ
ລັບການພັດທະນາດ້ານເຕັກໂນ
ໂລຍີ.ເນື່ອງຈາກວ່າຕະຫຼາດເຕັກ
ໂນໂລຍີຂອງໂລກບໍ່ສົມບູນ,ບັນ

ດາວິສາຫະກິດ ທີ່ສົ່ງອອກທັງຫມົດ ໄດ້ສາມາດເຂົ້າສູ່ເຕັກໂນໂລຍີວ່າຍກ່ວາຜູ້ອື່ນທີ່ຜະລິດສິນຄ້າປ່ຽນແທນການນຳເຂົ້າ ຫລືຜະລິດສິນຄ້າທີ່ບໍ່ນຳເອົາໄປແລກປ່ຽນ .ການສົ່ງອອກຈະສ້າງຂໍ້ໄດ້ປຽບໃຫ້ແກ່ວິສາຫະກິດແຫ່ງນຶ່ງ ແລະມີຜົນກະທົບໃສ່ເສດຖະກິດເວົ້າລວມ ຊຶ່ງມີຜົນສະທ້ອນດ້ານລາຄາຈະບໍ່ສ່ອງແສງໃຫ້ເຫັນໄດ້.ບັນດາຜົນກະທົບດັ່ງກ່າວບອກກັບການໃຫ້ຂໍ້ມູນຂ່າວສານຈະປະກອບສ່ວນຢ່າງແຂງແຮງໃສ່ການຂະຫຍາຍຕົວຢ່າງໄວວາໃສ່ຜະລິດຕະພາບລວມຂອງບັນດາປັດໃຈການຜະລິດ.ຂໍ້ ສະຫຼຸບດັ່ງກ່າວ ໄດ້ຮັບການຢັ້ງຢືນຜ່ານການສັງເກດເບິ່ງບັນດາເສດຖະກິດໂດຣລວມ ແລະຈາກບັນດາຂໍ້ ສະຫຼຸບຂອງການຄົ້ນຄ້ວາທີ່ລະອຽດກ່ວາກ່ຽວກັບຜະລິດຕະພາບລວມຂອງບັນດາປັດໃຈການຜະລິດ ໃນບັນດາຂະແຫນງກິດຈະກຳ ໃນເກົາຫລີ ,ຍີ່ປຸ່ນ ແລະໄຕ້ຫວັນ.

**<u>ບັນດານາວະກຳ(ການປ່ຽນແປງໃໝ່)ດ້ານອື່ນໆ.</u>**

ບັນດາຜົນສຳເລັດຂອງບັນດາເສດຖະກິດ ໃນອາຊີຕາເວັນອອກ ດ້ານນຶ່ງ ມາຈາກບັນດານະໂຍບາຍທີ່ໄດ້ນຳມາປະຕິບັດ ແລະດ້ານນຶ່ງມາຈາກກົນໄກດ້ານສະຖາບັນທີ່ສ້າງຂຶ້ນມາເພື່ອປະຕິບັດບັນດານະໂຍບາຍດັ່ງກ່າວ.ບັນດານະໂຍບາຍກ່ຽວກັບການເຕີບໂຕໄດ້ຮັບການດຳເນີນໄປບົນຈິດໃຈທີ່ແຕກຕ່າງກັບທີ່ໄດ້ປະຕິບັດມາໃນປະເທດ ທີ່ມີລາຍໄດ້ສະເລັ່ຽຕ່ຳ ຫຼືປານກາງອື່ນ ໃນສອງດ້ານຄື : ກ່ອນອື່ນ, ແມ່ນບັນດາຜູ້ນຳໄດ້ວາງຫຼັກການວ່າ ຕ້ອງແບ່ງປັນຄຸນຄວາມດີຂອງການເຕີບໂຕເສດຖະກິດໃຫ້ທຸກຄົນນັ້ນ ເປັນເປົ້າຫມາຍຕົ້ນຕໍດ້ານສັງຄົມ ແລະຕໍ່ມາ ແມ່ນວ່າບັນດາລັດຖະບານໄດ້ໃຫ້ຄວາມໄວ້ເນື້ອເຊື່ອໃຈແກ່ພາກເອກະຊົນ .

***ການແບ່ງປັນຫມາກຜົນ ຂອງການເຕີບໂຕ :*** ເພື່ອຈະໄດ້ຮັບຄວາມເຫັນດີເຫັນພ້ອມຈາກສັງຄົມທັງຫມົດ,ບັນດາຜູ້ນຳໃນອາຊີຕາເວັນອອກ ເບິ່ງຄືໄດ້ໃຫ້ຄຳຫມັ້ນສັນຍາວ່າ ການຂະຫຍາຍຕົວດ້ານເສດຖະກິດຈະນຳຜົນປະໂຫຍດມາໃຫ້ທຸກກຸ່ມຄົນໃນສັງຄົມ ແຕ່ວ່າ ການແບ່ງປັນຄຸນປະໂຫຍດຂອງການເຕີບໂຕກ່ວາຈະດຳເນີນໄປໄດ້ ກໍຕ້ອງແກ້ໄຂຫລາຍບັນຫາສັບສົນດ້ານການປະສານງານ. ກ່ອນອື່ນ ຈະຕ້ອງລຸລ່ວງບັນຍາຊົນດ້ານເສດຖະກິດໃຫ້ສະຫນັບສະຫນູນນະໂຍບາຍການເຕີບໂຕ ແລ້ວຊັກຊວນໃຫ້ເຂົາເຈົ້າແບ່ງປັນຫມາກຜົນຂອງການເຕີບໂຕກັບບັນດາຊັ້ນຄົນປານກາງແລະທຸກຍາກ.ສຸດທ້າຍເພື່ອຈະໄດ້ຮັບການຮ່ວມມືຂອງ 2 ຊັ້ນຄົນຫລັງນີ້ ຈະຕ້ອງຊີ້ໃຫ້ເຫັນວ່າ ຄຳຫມັ້ນສັນຍານັ້ນບໍ່ໄດ້ເປັນລົມໆແລ້ງໆຊື່ໆ.

ບັນດາກົນໄກຕົວຈິງໄດ້ຮັບການສ້າງຕັ້ງຂຶ້ນເພື່ອປະຕິບັດຈຸດປະສົງດັ່ງກ່າວ , ຢູ່ເກົາຫລີແລະໄຕ້ຫວັນໄດ້ມີການປະຕິຮູບທີ່ດິນຢ່າງກວ້າງຂວາງ,ອິນໂດເນເຊຍໄດ້ນຳໃຊ້ລາຄາເຂົ້າ ແລະຝຸ່ນ ເພື່ອຍົກລະດັບລາຍໄດ້ຢູ່ຊົນນະບົດ,ມາເລເຊຍໄດ້ກຳນົດໂຄງການແບ່ງປັນຄວາມຮັ່ງມີ ເພື່ອ

ປ່ຽນແປງຖານະຂອງຊາວມາເລດັ້ງເດີມ ທີ່ມີລາຍໄດ້ໜ້ອຍກວ່າພົນລະເມືອງ ທີ່ມີເຊື້ອສາຍຈີນ, ຮົ່ງກົງແລະສິງກະໂປໄດ້ດຳເນີນໂຄງການສ້າງເຮືອນຢູ່ຂອງຫຼວງເປັນຈຳນວນຫລາຍ. ໃນຫລາຍເສດຖະກິດ ບັນດາເຈົ້າໜ້າທີ່ໄດ້ຊ່ວຍເຫຼືອບັນດາສະຫະກອນຄົນງານແລະໄດ້ຈັດຕັ້ງຫຼາຍໂຄງການເພື່ອສົ່ງເສີມວິສາຫະກິດຂະໜາດກາງ ແລະຂະໜາດນ້ອຍ. ເຖິງວ່າຈະເຮັດພາຍໃຕ້ຮູບການໃດກໍຕາມບັນດາອົງການອຳນາດລັດໄດ້ສະແດງວ່າຕົນຕັ້ງໃຈຈະແບ່ງປັນຄຸນປະໂຫຍດຂອງການເຕີບໂຕໃຫ້ແກ່ໝົດທຸກຄົນ.

*ບົດບາດຂອງເອກະຊົນ* :ໃນບັນດາເສດຖະກິດດັ່ງກ່າວ ຫົວຈັກຕົ້ນຕໍຂອງການເຕີບໂຕຢ່າງໄວວາແມ່ນການລົງທຶນຂອງລັດ . ລະຫວ່າງປີ1970ແລະ1990ຄວາມແຕກຕ່າງກັນລະຫວ່າງບໍລິມາດການລົງທຶນຂອງລັດ ແລະເອກະຊົນໃນບັນດາເສດຖະກິດດັ່ງກ່າວໄດ້ຂຶ້ນເຖິງລະດັບສູງກວ່າຫຼາຍຖ້າທຽບໃສ່ເສດຖະກິດທີ່ມີລາຍໄດ້ສະເລັ່ຍຕ່ຳ ແລະ ປານກາງ. (ເບິ່ງຮູບສະແດງເລກ 3).

ການຄຸ້ມຄອງມະຫາພາກທີ່ດີ ໂດຍສະເພາະການຕິດຕາມຢ່າງເຂັ້ມງວດອັດຕາເງິນເຟີ້ແລະການຂາດດຸນງົບປະມານໄດ້ສົ່ງເສີມໃຫ້ບັນດາວິສາຫະກິດວາງແຜນການແລະລົງທຶນສຳລັບໄລຍະຍາວແລະໄດ້ໃຫ້ຄຳອະທິບາຍວ່າ ເປັນຫຍັງອັດຕາເງິນອອມຢູ່ອາຊີ ຈຶ່ງສູງເປັນພິເສດ .ບັນດາຜູ້ນຳໄດ້ສ້າງບັນຍາກາດອັນເອື້ອອຳນວຍໃຫ້ແກ່ກິດຈະການຕ່າງໆ ໂດຍສະເພາະດ້ວຍການສ້າງຕັ້ງໂຄງສ້າງດ້ານກົດໝາຍ ແລະການວາງລະບຽບການທົ່ວໄປທີ່ເອື້ອອຳນວຍການລົງທຶນຂອງເອກະຊົນ . ນອກນັ້ນ ໃນບັນດາເສດຖະກິດດັ່ງກ່າວ ເພິ່ນໄດ້ເອົາໃຈໃສ່ສ້າງການຕິດຕໍ່ພົວພັນລະຫວ່າງອົງການທຸລະກິດແລະລັດໄດ້ເປັນຢ່າງດີ ບໍ່ຫລາຍກໍໜ້ອຍ. ໃນເກົາຫລີ,ຍີ່ປຸ່ນ,ມາເລເຊຍແລະສິງກະໂປເພິ່ນໄດ້ສ້າງກຸ່ມປຶກສາຫາລືກັນ ເພື່ອສ້າງໂອກາດໃຫ້ພາກເອກະຊົນສາມາດສົ່ງອິດທິພົນຕໍ່ການກຳນົດ ແລະການປະຕິບັດບັນດານະໂຍບາຍກ່ຽວກັບເຂົາເຈົ້າເອງ.ກົງກັນຂ້າມກັບກຸ່ມສ້າງຄວາມກົດດັນ ຊຶ່ງບໍ່ມີລະບຽບການດຳເນີນງານອັນຈະແຈ້ງ ແລະມີແຕ່ຊອກຮູ້ຄວາມລັບຂອງກັນເທົ່ານັ້ນ,ບັນດາກຸ່ມປຶກສາຫາລື ໄດ້ອະທິບາຍໃຫ້ສະມາຊິກທຸກຄົນທີ່ເຂົ້າຮ່ວມ ຮູ້ກ່ຽວກັບບັນຫາການຈັດສັນຊັບພະຍາກອນ.ໄປໄກກວ່ານັ້ນ ປະເທດຈຳນວນນຶ່ງໄດ້ຈັດຕັ້ງການສອບຊັດເລືອກເອົາຂໍ້ໄດ້ປຽບຂອງການແຂ່ງຂັນລວມເຂົ້າກັບຂໍ້ໄດ້ປຽບຂອງການຮ່ວມມືລະຫວ່າງບັນດາວິສາຫະກິດດ້ວຍກັນກໍຄືລະຫວ່າງພາກລັດແລະພາກເອກະຊົນ.ເພິ່ນອາດນຳໃຊ້ຕັ້ງແຕ່ຫຼັກການງ່າຍແຕ່ການຈັດສັນຊັບພະຍາກອນນອກຕະຫຼາດໄປເຖິງການປະສານງານທີ່ສັບສົນຂອງການລົງທຶນພາກເອກະຊົນໃນການປະຊຸມປຶກສາຫາລືກັນ ໂດຍມີຜູ້ຕາງໜ້າອຳນາດລັດແລະຜູ້ຕາງໜ້າອົງການທຸລະກິດ ຄືຢູ່ເກົາຫລີແລະຍີ່ປຸ່ນ. ແຕ່ວ່າຮູບການຕົ້ນຕໍຂອງແຕ່ລະວິທີການແມ່ນວ່າ ອຳນາດການປົກຄອງແຈກ "ລາງວັນ" -ໃຫ້

ໄດ້ຮັບສິນເຊື່ອ ຫລືເງິນຕາຕ່າງປະເທດ-ໂດຍອີງໃສ່ຜົນທີ່ໄດ້ຮັບທີ່ຢູ່ພາຍໃຕ້ການຕິດຕາມ ກວດກາຢ່າງໃກ້ຊິດຂອງອຳນາດລັດແລະຂອງຜູ້ແຂ່ງຂັນອື່ນ.

<u>ບັນດາບົດຮຽນຂອງຄວາມປະຕິທານ</u>

ບັນດາເສດຖະກິດທີ່ພວມພັດທະນາອື່ນສາມາດຖອດຖອນເອົາບົດຮຽນອັນໃດແດ່ຈາກສິ່ງທີ່ໄດ້ເວົ້າມາທັງໝົດນີ້ ? ໄດ້ມີຄວາມແຕກຕ່າງກັນຫຼາຍ-ດ້ານປະສົບການ,ດ້ານສະຖາບັນແລະດ້ານນະໂຍບາຍ-ຊຶ່ງບໍ່ສາມາດສະຫຼຸບເປັນແບບຈຳລອງອັນນຶ່ງອັນດຽວຂອງຜົນສຳເລັດໄດ້.ແຕ່ລະເສດຖະກິດໃນຈຳນວນ8ເສດຖະກິດທີ່ໄດ້ຮັບການຄົ້ນຄ້ວານີ້,ຕາມແຕ່ເວລາທີ່ແຕກຕ່າງກັນໄດ້ນຳໃຊ້ບັນດານະໂຍບາຍທີ່ແຕກຕ່າງກັນເພື່ອເຕົ້າໂຮມບັນດາເງື່ອນໄຂຈຳເປັນສຳລັບການເຕີບໂຕຄື:ການສະສົມທຶນຢ່າງໄວວາ,ການຈັດສັນຊັບພະຍາກອນຢ່າງມີປະສິດທິພາບ , ການຂະຫຍາຍຕົວຂອງຜະລິດຕະພາບ.

ເຖິງວ່າ ຈະແນະນຳໃຫ້ນຳໃຊ້ຢ່າງເຕັມທີ່ບັນດາກົດເກນພື້ນຖານເສດຖະກິດຕະຫລາດກໍຕາມ ປະສິດທິພາບຂອງບັນດາຍຸດທະສາດທີ່ຮຽກຮ້ອງໃຫ້ມີສະຖາບັນ ທີ່ເຂັ້ມແຂງ ກໍບໍ່ໄດ້ຮັບການຢັ້ງຢືນຢູ່ແຫ່ງອື່ນໃນໂລກ. ແຕ່ຊ້ຳເປັນອັນຈະແຈ້ງວ່າ ເປັນການຍາກ ທີ່ຈະລອກແບບເອົາຍຸດທະສາດມາປະຕິບັດ ຖ້າວ່າຕົວຫລັກຂອງກົງຈັກປະຕິບັດບໍ່ໄດ້ຮັບ ການຈັດວາງໄວ້ຢ່າງແໜ້ນໜາໄປພ້ອມ.ມີແຕ່ພະຍາຍາມເຂົ້າໃຈວ່າແມ່ນບັນດານະໂຍບາຍອັນໃດ ທີ່ໄດ້ປະກອບສ່ວນເຮັດໃຫ້ມີການເຕີບໂຕ ເທົ່ານັ້ນກໍຍັງບໍ່ພຽງພໍ ຍັງຕ້ອງເຂົ້າໃຈວ່າ ມີເງື່ອນໄຂດ້ານສະຖາບັນແລະດ້ານເສດຖະກິດອັນໃດ ທີ່ຮັບປະກັນໃຫ້ມີປະສິດທິຜົນນຳອີກ.

ບັນດາການຄົ້ນຄ້ວາໄດ້ຊີ້ໃຫ້ເຫັນວ່າໂດຍທົ່ວໄປຈະບໍ່ມີປະໂຫຍດທີ່ຈະຊອກສົ່ງເສີມແຕ່ຂະແໜງກິດຈະກຳຈຳນວນນຶ່ງເທົ່ານັ້ນ . ດັ່ງນັ້ນ ເພິ່ນຈະບໍ່ແນະນຳໃຫ້ປະຕິບັດນະໂຍບາຍດັ່ງກ່າວໃຫ້ບັນດາເສດຖະກິດທີ່ພວມພັດທະນາອື່ນ. ການປາບປາມດ້ານການເງິນແບບເບົາໆ ສົມທົບກັບນະໂຍບາຍຊີ້ແນະດ້ານສິນເຊື່ອສາມາດບັນລຸຜົນສຳເລັດໄດ້.ສ່ວນຍຸດທະສາດສົ່ງເສີມການສົ່ງອອກແລະການດັດແປງ ແລະປັບປຸງເຕັກໂນໂລຢີທີ່ນຳມາຈາກບັນດາປະເທດອຸສາຫະກຳນັ້ນ ຖືວ່າເປັນສິ່ງທີ່ມີປະສິດທິພາບຫຼາຍກ່ວາ ແລະຈາກນັ້ນກໍເປັນສິ່ງທີ່ໃຫ້ຄວາມຫວັງຫລາຍກ່ວາ ສຳລັບບັນດາເສດຖະກິດພວມພັດທະນາອື່ນໆ.

ການເຕີບໂຕສະເລ່ຍຂອງລວມຍອດຜະລິດພັນແຫ່ງຊາດຕໍ່ຫົວຄົນ, 1965-90

## Figure 1 Average Growth of GNP per Capita, 1965–90




ການເກັບອອມ ແລະ ການລົງທຶນ ຄິດໄລ່ເປັນ % ທຽບໃສ່ GDP

## Figure 2 Savings and Investment as a Percentage of GDP




*Note:* The regional averages are unweighted.

ໝາຍເຫດ:ບັນດາຈໍານວນສະເລ່ຍຂອງພາກພື້ນບໍ່ໄດ້ຄິດໄລ່ຕາມອັດຕາໜັກ

ການລົງທຶນຂອງລັດ ແລະ ຂອງເອກະຊົນ

**Figure 3 Public and Private Investment**




*Note:* LMIEs = low- and middle-income economies.

ໝາຍເຫດ: LMIEs=ບັນດາເສດຖະກິດທີ່ມີລາຍໄດ້ສະເລ່ຍຕ່ຳ ແລະປານກາງ

Figure 4 . Functional Approach to Growth ແນວຄວາມຄິດກ່ຽວກັບພາລະໜ້າທີ່ເພື່ອໃຫ້ມີການເຕີບໂຕ



## *ການຮ່ວມມືເສດຖະກິດລະຫວ່າງອິນດູຈີນກັບ ບັນດາປະເທດອາຊຽນ ແລະແງ່ຂະຫຍາຍຕົວຕ່າງໆ*

*(ຕໍ່ຈາກສະບັບກ່ອນ)*

**( ASEAN -INDOCHINA Economic Cooperation and Prospects )**

**ແປໂດຍ : ດຣ ຄຳເບົ້າ ສະຫງວນຕຣີຈັນ**

ເຊັ່ນດຽວກັນກັບຫວຽດນາມ, ລາວພວມທັນທີດກ່ຽວກັບຄູ່ການຄ້າຈາກປະເທດສະມາຊິກສະພາຊ່ວຍເຫລືອຊຶ່ງກັນແລະກັນທາງດ້ານເສດຖະກິດ ມາສູ່ປະເທດ ໃນອົງການ ເພື່ອການຮ່ວມມືດ້ານເສດຖະກິດ ແລະການພັດທະນາ( OECD ) ແລະບັນດາປະເທດຢູ່ໃນໂລກທີສາມ. ການສົ່ງອອກໃນປີ 1991ເພີ່ມຂຶ້ນຢ່າງແຂງແຮງ ແຕ່ບໍລິມາດການສົ່ງອອກໄປຍັງປະເທດຄູ່ຄ້າເກົ່າ ຫລຸດລົງ 63% .

ການນຳເຂົ້າຈາກກຸ່ມປະເທດຄູ່ຄ້າເກົ່າ ກໍຫລຸດລົງ 85% ໃນຄະນະທີ່ການນຳເຂົ້າຈາກກຸ່ມປະເທດຄູ່ຄ້າໃຫມ່ ເພີ່ມຂຶ້ນເກືອບ 26% .ການນຳເຂົ້າສິນຄ້າບໍລິໂພກຈາກໄທ ເພີ່ມຂຶ້ນຢ່າງແຮງ ເປັນຕົ້ນແມ່ນເຂົ້າ,ຜະລິດຕະພັນນ້ຳມັນ ແລະສະບຽງອາຫານຕົ້ນຕໍຕ່າງໆ ແຕ່ວ່າບໍ່ມີບັນຫາຫຍຸ້ງຍາກທາງດ້ານດຸ່ນການຊຳລະ ຍ້ອນມີ ການໂອນເງິນກູ້(Transfer)ເປັນຈຳນວນມະຫາສານ. ການຄ້າຕ່າງປະເທດຂອງລາວມາເຖິງປະຈຸບັນນີ້ສ່ວນໃຫຍ່ແມ່ນເຮັດກັບໄທ.

ປີ1990 80% ຂອງການຄ້າຕ່າງປະເທດຂອງກຳປູເຈັຍແມ່ນໄດ້ເຮັດກັບບັນດາປະເທດໃນກຸ່ມໂຊວຽດເກົ່າ .ສ່ວນທີ່ເຫຼືອໄດ້ເຮັດກັບຫວຽດນາມ . ການສົ່ງອອກຕົ້ນຕໍ ແມ່ນຢາງພາລາ ແລະໄມ້(ສິນຄ້າປຸງແຕ່ງເບື້ອງຕົ້ນ) ໃນຈຳນວນປະເທດອາຊຽນ

ນັ້ນ ສິງກະໂປເປັນຄູ່ຄ້າທີ່ໃຫຍ່ສຸດ ຂອງກຳປູເຈັຍ.ໃນປະຈຸບັນການພົວພັນການຄ້າ ມາເລເຊຍ -ກຳປູເຈັຍ ໄດ້ຂະຫຍາຍຕົວຢ່າງແຂງແຮງ ເພາະກຳປູເຈັຍຕ້ອງການເອົາມາເລເຊັຽເປັນຕົວແບບໃຫ້ແກ່ການພັດທະນາເສດຖະກິດ.

ວັນທີ15/4/94 ໃນເວລາຢ້ຽມຢາມກຳປູເຈັຍ,ນາຍົກມາເລເຊັຽ ໄດ້ປະກາດວ່າ ຈະອຳນວຍຄວາມສະດວກໃຫ້ແກ່ກຳປູເຈັຍໃນການສົ່ງອອກຜະລິດຕະພັນກະສິກຳ ແລະແຮ່ທາດໄປຍັງມາເລເຊັຽ .

ປະຈຸບັນຜະລິດຕະພັນປຸງແຕ່ງເບື້ອງຕົ້ນ ກໍຍັງມີອັດຕາສ່ວນໃຫຍ່ໃນໂຄງປະກອບສິນຄ້າຂາອອກຂອງບັນດາປະເທດອິນດູຈີນ. ປະເພດສິນຄ້າເຫຼົ່ານີ້ສ່ວນໃຫຍ່ກໍລ້ວນແຕ່ແມ່ນຜະລິດຕະພັນສົ່ງອອກຕົ້ນຕໍ ຂອງບັນດາປະເທດອາຊຽນເປັນຕົ້ນ ນ້ຳມັນດິບ,ຢາງພາລາເຄື່ອງປ່າຂອງດົງຢູ່ໃນປ່າພຸ່ມເຂດຮ້ອນ, ແຮ່ທາດ,ເຂົ້າ ແລະສະບຽງອາ

ທານອື່ນໆ . ສິງກະໂປເປັນສູນກາງທີ່ໃຫຍ່ສຳລັບສິນຄ້າປະເພດປຸງແຕ່ງເບື້ອງຕົ້ນແລະສະບຽງອາຫານເຫຼົ່ານີ້ .ບັນດາປະເທດອິນດູຈີນຕ້ອງເປັນປະເທດທີ່ຜະລິດລາຍໃຫຍ່ ແລະສິນຄ້າຂາອອກກໍ່ບໍ່ຕ່ຳກ່ວາລາຄາໃນຕະຫຼາດສາກົນ .ເພາະທັງສອງກຸ່ມປະເທດ ພວມຢູ່ໃນລະດັບພັດທະນາ ທີ່ແຕກຕ່າງກັນຢ່າງຈະແຈ້ງ,ບັນດາພື້ນຖານເສດຖະກິດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດຂອງເຂົາສາມາດເພີ່ມເຕີມໃຫ້ແກ່ກັນ .

ຫວຽດນາມພວມຫັນເປັນອຸດສາຫະກຳຕາມທິດສົ່ງອອກ,ແຮງງານຖືກ ແລະຜີມືດີສົມຄວນ ຈະເປັນປາຍແຫລມແກ່ງແຍ່ງອັນນຶ່ງ ໃນການສົ່ງອອກສິນຄ້າປະເພດ ທີ່ນຳໃຊ້ແຮງງານພັດຖະກຳເປັນສ່ວນໃຫຍ່ ໄປັງປະເທດອາຊຽນເຊັ່ນ ອິນໂດເນເຊຍ,ຟີລິປິນ ແລະໄທ.

ໃນການພົວພັນດ້ານການຄ້າລະຫວ່າງອາຊຽນແລະອິນດູຈີນ,ສິງກະໂປແລະໄທມີບົດບາດສຳຄັນແລະສ້າງເງື່ອນໄຂສະດວກໃຫ້ແກ່ການຫັນປ່ຽນຂອງອິນດູຈີນໄປສູ່ພື້ນຖານເສດຖະກິດຕະຫລາດ .ສິງກະໂປໃນຖານະເປັນສູນການຄ້າຢູ່ອາຊີຕາເວັນອອກສ່ຽງໄຕ້ ໄດ້ສະໜອງເສັ້ນທາງຂົນສົ່ງສິນຄ້າອັນຈຳເປັນ , ຖັນແຖວຊ່ຽວຊານນາກເກັດຕິງ ແລະທຶນການຄ້າໃຫ້ແກ່ອິນດູຈີນ. ການໃກ້ສິດທາງດ້ານພູມສາດແລະຄວາມຄ້າຍຄືກັນທາງດ້ານວັດທະນະທຳໄດ້ເຮັດໃຫ້ໄທມີທ່າດີຫລາຍກ່ວາປະເທດອາຊຽນອື່ນ ໃນການຄ້າຂາຍ ແລະຮ່ວມມືກັບອິນດູຈີນ .

**III. ການຮ່ວມມືລົງທຶນ**

**1. ບັນດາມາດຕະການສົ່ງເສີມການລົງທຶນຈາກຕ່າງປະເທດ.**

**ກ.ລະບົບກົດໝາຍ**

ບັນດາປະເທດອິນດູຈີນພວມປ່ຽນແປງກົດໝາຍແລະສະຖາບັນຕ່າງໆຂອງຕົນເພື່ອໃຫ້ສອດຄ່ອງກັບຫລັກການ ແລະພຶດຕິກຳຕົວຈິງທີ່ກຳລັງນຳໃຊ້ຢູ່ໃນໂລກປະຈຸບັນ .

ຫວຽດນາມແລະລາວໄດ້ປະກາດໃຊ້ກົດໝາຍລົງທຶນຕ່າງປະເທດ ໃນຊຸມປີ 1987-88 ຢູ່ໃນກຳປູເຈັຽໃນເດືອນ 7/1989,ອະນຸຍາດໃຫ້ຄົນຕ່າງປະເທດໄດ້ເຂົ້າຮ່ວມສຳພັນທຸລະກິດໃນວຽກງານເຮັດທຸລະກິດລວມໝູ່ ແລະເອກະຊົນກໍ່ຄືອະນຸຍາດໃຫ້ແກ່ການລົງທຶນຕ່າງປະເທດ 100% .ປີ 1991ລາວໄດ້ຮັບຮູ້ບົດບາດຂອງທຶນໃນການລົງທຶນຕ່າງປະເທດໃນລັດຖະທຳມະນູນໃໝ່ຂອງປະເທດ ແລະເພີ່ມເຕີມໃນກົດໝາຍທຸລະກິດ ແລະກົດໝາຍ ການລົງທຶນຕ່າງປະເທດ , ຫວຽດນາມກໍ່ມີບັນດາມາດຕາ ໃນກົດໝາຍທີ່ອະນຸຍາດໃຫ້ສ້າງບັນດາສາຂາທະນາຄານຕ່າງປະເທດຢູ່ຫວຽດນາມ . ລັດຖະສະພາກຳປູເຈັຽໃນໄລຍະມໍ່ໆຜ່ານມານີ້ ໄດ້ຜ່ານກົດໝາຍລົງທຶນຕ່າງປະເທດຢ່າງເສລີ,ອາງລະດັບອາກອນ 9%ສຳລັບບໍລິສັດ ຊຶ່ງເປັນລະດັບຕ່ຳສຸດຢູ່ທະວີບອາຊີ ແລະອະນຸຍາດໃຫ້ຜ່ອນຜັນອາກອນໃນ 8 ປີ .

➡

**ຂ. ຂໍ້ສົ່ງເສີມແລະອະພິສິດຕ່າງໆ**

- ນັກລົງທຶນຕ່າງປະເທດໄດ້ຮັບອະນຸຍາດໃຫ້ລົງທຶນ ເຂົ້າໃສ່ເກືອບທຸກາງ ຂະແໜງການ ແລະ ຂົງເຂດເສດຖະກິດ-ສັງຄົມໂດຍບໍ່ຈຳກັດອັດຕາສ່ວນປະກອບທຶນຂອງຝ່າຍຄູ່ສຳພັນຕ່າງປະເທດ.

- ບໍ່ຢຶດຮິບເຂົ້າຄັງຫລວງທຶນແລະຊັບສິນຂອງບັນດານັກລົງທຶນ ຈາກຕ່າງປະເທດ,ບໍ່ຫັນເປັນຂອງລັດບັນດາວິສາຫະກິດ ທີ່ນຳໃຊ້ທຶນໃນການລົງທຶນຈາກຕ່າງປະເທດ,ກໍ່ຄືຮັບປະກັນສິດໃນການຖອນທຶນ , ຊັບສິນຄືນ ແລະສົ່ງກຳໄລອອກສູ່ຕ່າງປະເທດ .

- ເພື່ອສ້າງເງື່ອນໄຂສະດວກໃຫ້ສິ່ງແວດລ້ອມການລົງທຶນ ແລະຈຳກັດບັນຫາຫຍຸ້ງຍາກຕ່າງໆ ເຊັ່ນ ໄພອາດຍາສິດ,ສໍ້ລາດບັງຫລວງ ແລະພື້ນຖານໂຄງລ່າງອ່ອນນ້ອຍ,ສະນັ້ນຫວຽດນາມ ແລະລາວພວມດຳເນີນການກໍ່ຕັ້ງເຂດປຸງແຕ່ງສຳລັບຂາອອກ .

- ອາພິສິດຕ່າງໆ ກໍ່ໄດ້ນຳອອກມາ ເພື່ອສົ່ງເສີມການກະຈາຍການລົງທຶນຕ່າງປະເທດໄປຕາມພູມສາດ ແລະຂົງເຂດຕາມຈຸດປະສົງຂອງປະເທດກ່ຽວຂ້ອງ. ການລົງທຶນເຂົ້າໃນເຂດບໍ່ສະດວກ ກໍໄດ້ຮັບອະພິສິດເປັນຢ່າງດີດ້ານອາກອນໂດຍໄດ້ຊົມໃຊ້ຄ່າເຊົ່າທີ່ດິນ ແລະຈ່າຍຄ່າພະລັງງານຖືກກວ່າ .

**ຄ.ດ້ານຖືກຈຳກັດຕ່າງໆ**

- ຫວຽດນາມຍັງບໍ່ທັນໄດ້ອະນຸຍາດໃຫ້ເອກະຊົນມີສິດຄອບຄອງທີ່ດິນ.ບັນຫານີ້ໄດ້ຮັບການແກ້ໄຂສ່ວນໃດສ່ວນໜຶ່ງ ດ້ວຍການມອບສິດນຳໃຊ້ທີ່ດິນ ແລະດ້ວຍສິດນີ້ ສາມາດມອບກຳມະສິດຢ່າງເສລີລະຫວ່າງຝ່າຍຕ່າງໆ .

ໂຄງລ່າງເສດຖະກິດລະຫວ່າງວຽດນາມ ແລະກຸ່ມອາຊຽນຍັງມີຫລາຍບັນຫາທີ່ແຕກຕ່າງກັນ.

-ວຽດນາມໄດ້ນຳລະບົບກວດກາ ເສລີເງິນຕາຕ່າງປະເທດ ແຕ່ວ່າຍັງມີຫລາຍຂົງເຂດທີ່ຍັງບໍ່ຈະແຈ້ງ ໂດຍສະເພາະແມ່ນກ່ຽວພັນກັບການຖອນກຳໄລຄືນ .

- ລາວຍັງມີຫລາຍອັນບໍ່ສະດວກ ເຊັ່ນຈຳນວນພົນລະເມືອງມີໜ້ອຍ ເຮັດໃຫ້ຕະຫລາດພາຍໃນປະເທດ ແລະແຫລ່ງກຳລັງຄົນກໍຖືກຈຳກັດ. ນອກຈາກນັ້ນພື້ນຖານໂຄງລ່າງວັດຖຸແລະການເງິນຍັງທຸກຈົນ ແລະຂາດເສັ້ນທາງອອກສູ່ທະເລ .

- ໂຄງລ່າງລົງທຶນເຂົ້າກຳປູເຈັຽ ກໍ່ຍັງຢຸດໆຢ່ອນໆ,ຂາດຄວາມໄວ້ເນື້ອເຊື່ອໃຈຈົນເຖິງມື້ນີ້ ທີ່ມີສະຖຽນລະພາບທາງການເມືອງ.

**2. ການລົງທຶນຈາກອາຊຽນ**

ຮູບການລົງທຶນທີ່ແຜ່ຫລາຍທົ່ວໄປ ຂອງບັນດາປະເທດອາຊຽນເຂົ້າອິນດູຈີນແມ່ນສຳພັນທຸລະກິດກັບບໍລິສັດ,ລັດວິສາຫະກິດຕ່າງໆ ຂອງປະເທດເຈົ້າພາບ ກວມ 40,43% ,27,66%ສຳພັນທຸລະກິດກັບເອກະຊົນ,21,28% ດ້ວຍຮູບການ

ທຶນຕ່າງປະເທດ 100% ,8,5%ຜູກພັນກັບຕ່າງປະເທດ. ປະຈຸບັນນັກລົງທຶນອາຊຽນຫລາຍຄົນສົນໃຈການລົງທຶນຜະລິດສິນຄ້າບໍລິໂພກສຳລັບຕະຫລາດພາຍໃນບ່ອນທີ່ເຂົາລົງທຶນແລະມີພຽງແຕ່ 20%ທີ່ມີແຜນການລົງທຶນເພື່ອສົ່ງອອກ.

- ຂະໜາດການລົງທຶນເຂົ້າໃສ່ ຫວຽດນາມຂອງກຸ່ມປະເທດອາຊຽນ ແມ່ນຍັງມີໜ້ອຍກ່ວາ ຖ້າສົມທຽບກັບການລົງທຶນຂອງປະເທດອຸດສາຫະກຳໃໝ່ເຊັ່ນ : ໄຕ້ຫວັນ,ຮົງກົງ ແລະເກົາຫລີໃຕ້ ໂດຍມີຍອດການລົງທຶນມາເຖິງງວດ 1/1995ເຂົ້າຫວຽດນາມ 5,58 ຕື້ໂດລາສະຫະລັດ ລວມມີ 465 ໂຄງການ,ສ່ວນຍອດການລົງທຶນ ຂອງ 5 ປະເທດອາຊຽນ ມີພຽງ 2,34 ຕື້ໂດລາສະຫະລັດ ລວມມີ 197 ໂຄງການ.ປະເດັນນີ້ກົງກັນຂ້າມກັນຢ່າງສິ້ນເຊີງ ກັບການຮ່ວມມືດ້ານການຄ້າ ຄືໄດ້ກ່າວມາຂ້າງເທິງ,ໃນນັ້ນບັນດາປະເທດອາຊຽນໃກ້ຄຽງ ແມ່ນຕັ້ງໜ້າກ່ວາປະເທດອຸດສາຫະກຳໃໝ່ຫລາຍເທົ່າ .ຂະໜາດການລົງທຶນຢ່າງເໝາະສົມ ເຂົ້າຫວຽດນາມ ກໍ່ສ່ອງແສງເຖິງຂະໜາດຍອດການລົງທຶນອັນເໝາະສົມ ອອກສູ່ຕ່າງປະເທດຂອງກຸ່ມປະເທດນີ້.

- ບ້ວງລົງທຶນຕ່າງປະເທດ ຂອງສິງກະໂປເຂົ້າຫວຽດນາມ ຕົ້ນຕໍ ແມ່ນສຸມເຂົ້າໃສ່ໂຄງການໃຫຍ່ໆ ກ່ຽວກັບການພັດທະນາໂຮງແຮມໂຮງງານຕໍ່ກຳປັ່ນ ແລະເຂດອຸສາຫະກຳຕ່າງໆ. ປະເດັນນີ້ ສະແດງທ່າໄດ້ປຽບ ໃນການແກ່ງແຍ້ງແລະການມີຊ່ຽວຊານທີ່ມີຝີມືດີໃນຂົງເຂດການພັດທະນາ ແລະການຄຸ້ມຄອງໂຄງລ່າງ ຂອງເຂົາລວມທັງໂຮງແຮມ ແລະການທ່ອງທ່ຽວອື່ນໆ. ມາຮອດເດືອນ 4/95 ສິງກະໂປຢູ່ອັນດັບ 3 ໃນຈຳນວນປະເທດທີ່ມາລົງທຶນໃນວຽດນາມດ້ວຍຍອດທຶນໃນສັນຍາເທົ່າກັບ 1,2ຕື້ໂດລາສະຫະລັດ. ສິງກະໂປເອົາໃຈໃສ່ຫລາຍຕໍ່ການລົງທຶນໃນກຳປູເຈັຽ ໂດຽສະເພາະເຂົ້າໃນການພັດທະນາທ່າເຮືອ ແລະຟື້ນຖານນ້ຳມັນເຊື້ອເພີງໃນເດືອນ12/1994 ລັດຖະບານພະນົມເປັນໄດ້ອອກໃບອະນຸຍາດໃຫ້ບໍລິສັດຕ່າງໆຂອງສິງກະໂປໃນມູນຄ່າ 200 ລ້ານໂດລາສະຫະລັດ ແຕ່ວ່າບ້ວງລົງທຶນຕ່າງໆຈະມີໜ້ອຍທີ່ສຸດ ຕາບໃດທີ່ຍັງບໍ່ມີສະຖຽນລະພາບດ້ານການເມືອງຢູ່ປະເທດນີ້ .

- ການຮ່ວມມືເສດຖະກິດ ຂອງໄທກັບອິນດູຈີນ ກໍ່ຍັງໜັກໄປທາງການຄ້າຫຼາຍກ່ວາການລົງທຶນ. ໃນການລົງທຶນ ໄທມັກສຸມໃສ່ລາວຫຼາຍກ່ວາຫວຽດນາມ ສາຍການບິນຕ່າງໆລະຫວ່າງໄທແລະບັນດາປະເທດອິນດູຈີນໄດ້ມີການປັບປຸງຢ່າງຫລວງຫລາຍ,ການລົງທຶນຂອງໄທເຂົ້າໃສ່ຫວຽດນາມສ່ວນໃຫຍ່ແມ່ນສຸມໃສ່ກະສິກຳ,ນອກນັ້ນໄທຍັງໄດ້ເອົາໃຈໃສ່ການລົງທຶນເຂົ້າໃນຂົງເຂດທະນາຄານ ແລະການເງິນ,ຂະຫຍາຍການທ່ອງທ່ຽວ,ເຂດອຸດສາຫະກຳ ແລະຂະຫຍາຍແຫລ່ງຂຸດພະຍາກອນຕ່າງໆ(ນ້ຳມັນເຊື້ອໄຟ , ການປະມົງ)ຢູ່ບັນດາເຂດນ່ານທະເລ ຊຶ່ງພວມມີຂໍ້ພິພາດ

➡

ກັນ . ໄທເປັນປະເທດທີ່ລົງທຶນຕົ້ນຕໍເຂົ້າໃນລາວ ຊຶ່ງມີຍອດມູນຄ່າການລົງທຶນເຖິງ 500 ລ້ານໂດລາລວມມີ 214ໂຄງການ.ນອກນັ້ນ ນັກລົງທຶນໄທຍັງສົນໃຈການພັດທະນາພື້ນຖານໂຄງລ່າງ, ເສັ້ນທາງຄົມມະນາຄົມ ຢູ່ປະເທດນີ້ .

- ມາເຖິງຕົ້ນປີ 1992 ມາເລເຊັຽແມ່ນປະເທດທີ່ລົງທຶນໃຫຍ່ທີ່ສຸດຈາກອາຊຽນ ກວມ1/3 ຂອງຍອດລົງທຶນຂອງອາຊຽນ ເຂົ້າຫວຽດນາມ ມາເລເຊຍແລະຫວຽດນາມໄດ້ຕົກລົງແລະເຫັນພ້ອມນຳກັນ ຂຸດຄົ້ນນ້ຳມັນເຊື້ອໄຟຢູ່ເຂດຕ່າງໆ ; ທັງສອງປະເທດມີນ່ານທະເລພົບກັນຢູ່ທະເລຈີນໃຕ້ ແລະອ່າວໄທ .ມາເລເຊຍຍັງໄດ້ເຊັນສັນຍາຊ່ວຍເຫລືອຫວຽດນາມໃນການຜະລິດຢາງພາລາ ທາງດ້ານການຄຸ້ມຄອງ ແລະເຕັກນິກ .

ມາຮອດປີ 1994 ການລົງທຶນຂອງມາເລເຊຍເຂົ້າກຳປູເຈັຽທາກໍ່ບັນລຸມູນຄ່າ 40 ລ້ານໂດລາ ດັ່ງນັ້ນ ຍັງມີຫລາຍຂົງເຂດລົງທຶນແລະການຄ້າທີ່ທັງສອງປະເທດສາມາດດຳເນີນຮ່ວມກັນ ເຊັ່ນ : ທະນາຄານ,ຂຸດຄົ້ນ,ກຳປັ່ນ ,ພັດທະນານ້ຳມັນເຊື້ອໄຟ ແລະການທ່ອງທ່ຽວ .

- ນັກລົງທຶນອິນໂດເນເຊຍມີຄວາມສົນໃຈຫລາຍຕໍ່ການລົງທຶນຢູ່ຫວຽດນາມ,ມາຮອດປະຈຸບັນນີ້ ບ່ວງລົງທຶນອັນໃຫຍ່ໆ ລ້ວນແຕ່ແນໃສ່ຂົງເຂດການເງິນ . ຮອດງວດ1/95 ການລົງທຶນຂອງອິນໂດເນເຊຍເຂົ້າຫວຽດນາມລວມມີ 12 ໂຄງການ ດ້ວຍມູນຄ່າພຽງແຕ່ 164 ລ້ານໂດລາສະຫະລັດ .

- ການລົງທຶນ ຂອງຟີລິບປິນເຂົ້າຫວຽດນາມຍັງຖືກຈຳກັດຫລາຍ ທາກໍ່ມີບ່ວງລົງທຶນໃຫຍ່ນຶ່ງເຂົ້າໃນໂຮງງານປະກອບອາໄລລົດເກ່ງ ຮອດງວດ1/95 ຟີລິບປິນ ມີ 9 ໂຄງການລົງທຶນລວມມູນຄ່າ 60 ລ້ານໂດລາສະຫະລັດ .

ເຖິງປະຈຸບັນນີ້ ບ່ວງລົງທຶນຕ່າງໆຂອງບັນດາປະເທດອາຊຽນເຂົ້າອິນດູຈີນ ລ້ວນແຕ່ບໍ່ເປັນໄປຕາມທ່າອ່ຽງຂອງລາຍຈ່າຍໝາຍຄວາມວ່າບໍ່ຍອມຖືກກຳລັງຫນີບ ຂອງລາຍຈ່າຍ ອັນທີ່ເຄີຍເຮັດໃຫ້ນັກລົງທຶນຮົງກົງ,ໄຕ້ຫວັນ ແລະເກົາຫຼີໃຕ້ ສ້າງສັນຄືນໃຫມ່ ຂະແຫນງການຜະລິດແລະການປະດິດຕ່າງໆ ຂອງເຂົາຢູ່ບັນດາປະເທດອາຊຽນທີ່ເຄີຍມີແຫລ່ງແຮງງານຖືກແລະອຸດົມສົມບູນມາກ່ອນນີ້ແລ້ວ .ບ່ວງລົງທຶນຕ່າງໆຂອງອາຊຽນເຂົ້າອິນດູຈີນ ສ່ວນໃຫຍ່ແມ່ນແນໃສ່ສະຫນອງໃຫ້ຕະຫລາດພາຍໃນ .ໄລຍະການພັດທະນາເສດຖະກິດປະຈຸບັນຂອງກຸ່ມອິນດູຈີນ, ບ່ວງລົງທຶນຕ່າງໆນັ້ນໄດ້ນຳກຳໄລມະຫາສານມາໃຫ້.

ຜ່ານການເພີ່ມທະວີການດູດດຶງເອົາການລົງທຶນຈາກກຸ່ມປະເທດອາຊຽນ,ກຸ່ມປະເທດອິນດູຈີນສາມາດຍາດແຍງເງິນທຶນພາກເອກະຊົນຈາກແຫລ່ງຕ່າງໆ ໂດຍສະເພາະ ແມ່ນເງິນຕາຕ່າງປະເທດ ຊຶ່ງສາມາດແລກປ່ຽນໄດ້,ສ້າງວຽກເຮັດງານທຳຕື່ມ,ຍູ້ແຮງການສົ່ງອອກແລະເພີ່ມລາຍໄດ້ຂອງລັດຖະບານພາຍໃຕ້ຮູບການ

ພາສີ ອາກອນ,ຄ່າສຳປະທານບໍ່ແຮ່,ພາສີທີ່ດິນແລະຄ່າບໍລິການອື່ນໆ .

**IV. ແງ່ຂະຫຍາຍການເຈືອຈານເສດຖະກິດອິນດູຈີນ ກັບອາຊຽນ**

ທັງຫມົດທີ່ກ່າວມາຂ້າງເທິງນີ້ໄດ້ສະແດງໃຫ້ເຫັນວ່າ ການຮ່ວມມື,ການຄ້າແລະການລົງທຶນລະຫວ່າງບັນດາປະເທດອາຊຽນ ແລະອິນດູຈີນໄດ້ຂະຫຍາຍຕົວໄປຢ່າງໄວວາ,ໂດຍສະເພາະແມ່ນພາຍຫລັງຂໍ້ສັນຍາປາຣີ ເດືອນ10/91ແລະການດູດດຶງຫມົດທຸກອົງການຈັດຕັ້ງແຫ່ງລັດທັງວິສາຫະກິດເອກະຊົນ ຢູ່ບັນດາປະເທດອາຊຽນ. ຍ້ອນແນວນັ້ນສາຍພົວພັນການຄ້າ ແລະການລົງທຶນໄດ້ຂະຫຍາຍຕົວຂື້ນ,ການແລກປ່ຽນພົບປະລະຫວ່າງຂັ້ນນຳ,ຜູ້ຊົງຄຸນນະວຸດ,ພໍ່ຄ້າ,ຜູ້ຊ່ຽວຊານ ແຂກທ່ອງທ່ຽວ ແລະກຳມະກອນນັບມື້ນັບຫລາຍຂື້ນກ່ວາເກົ່າ. ເດືອນ 7/92 ຫວຽດນາມແລະລາວໄດ້ເຊັນສັນຍາມິດຕະພາບແລະຮ່ວມມືເສດຖະກິດກັບອາຊ່ຽນ ແລະເຂົ້າຮ່ວມກອງປະຊຸມລັດຖະມົນຕີອາຊຽນໃນຖານະຜູ້ສັງເກດການຕະຫລອດມາ. ໃນກອງປະຊຸມຂັ້ນລັດຖະມົນຕີຕ່າງປະເທດຄັ້ງທີ 27,ລັດຖະມົນຕີຕ່າງປະເທດກຳປູເຈັຽ,ສີລິວຸດ ໄດ້ຢັ້ງຢືນຂໍ້ສະເຫນີຂອງກຳປູເຈັຽທີ່ຢາກເປັນຜູ້ສັງເກດການຂອງອົງການອາຊຽນໃນປີທີ່ຈະມາເຖິງນີ້ .ກຳປູເຈັຽມີເງື່ອນໄຂຕ່າງໆຢ່າງພຽງພໍເພື່ອກາຍເປັນພາຄີຂອງອາຊຽນຢ່າງສຍມບູນ.ປະຈຸບັນ ກຳປູເຈັຽມີລະບົບລັດຖະສະພາແລະລັດຖະບານຫນຶ່ງທີ່ໄດ້ປະກອບຂື້ນຜ່ານລະບອບການເລືອກຕັ້ງຢ່າງເສລີ , ຊຶ່ງສະຫະປະຊາຊາດຮັບຮອງ ແລະມີພື້ນຖານເສດຖະກິດຕະຫລາດເສລີ ລະບົບຫນຶ່ງທີ່ເຈືອຈານເຂົ້າກັບບັນດາປະເທດພາຄີອາຊຽນໄດ້ . ມີພຽງປັດໃຈດຽວເທົ່ານັ້ນ ທີ່ເຮັດໃຫ້ອາຊຽນເປັນຫ່ວງນັ້ນ ແມ່ນການບໍ່ມີສະຖຽນລະພາບ ທາງການເມືອງຢູ່ກຳປູເຈັຽ ຊຶ່ງນັບມື້ນັບຫນັກຫນ່ວງຂື້ນດ້ວຍໄພສໍ້ລາດບັງຫລວງແຜ່ລາມໄປທົ່ວແລະສົງຄາມພາຍໃນຍັງບໍ່ທັນຢຸດຕິເທື່ອ ;ເຖິງສະພາບມີແນວນີ້ກໍຕາມ ສາຍພົວພັນໄດ້ເພີ່ມທະວີຂື້ນແລະການຮ່ວມມືກໍນັບມື້ນັບມີປະສິດທິຜົນຊຶ່ງສຸດທ້າຍຈະຊ່ວຍໃຫ້ບັນດາປະເທດອິນດູຈີນກາຍເປັນພາຄີຂອງອາຊຽນ ແລະເຂົ້າຮ່ວມໃນເຂດການຄ້າເສລີອາຊຽນ.ສຳລັບຫວຽດນາມແລ້ວການເປັນພາຄີອາຊຽນ ກໍເປັນສິ່ງທ້າທາຍທົດສອບ ເພາະຫວຽດນາມຈະຕ້ອງປະຕິບັດນະໂຍບາຍຂອງອາຟຕາ( ເຂດເສລີທາງການຄ້າອາຊຽນ ) ໃນການຫລຸດຜ່ອນອັດຕາພາສີອາກອນຂາເຂົ້າໃຫ້ຍັງເຫລືອ 5%ຫລືຕ່ຳກວ່ານັ້ນໃນປີ 2003 .

**1.ບັນດາຜົນປະໂຫຍດທີ່ຈະໄດ້ຮັບໃນການເຈືອຈານອິນດູຈີນເຂົ້າກັບອາຊຽນ**

**ກ. ເບື້ອງບັນດາປະເທດອິນດູຈີນ :**

- ການທີ່ປະເທດໃນອິນດູຈີນເປັນສະມາຊິກອາຊຽນ ຈະເຮັດໃຫ້ມີການເພີ່ມທະວີກຳລັງແຮງທາງການເມືອງຂອງອາຊຽນຂື້ນຕື່ມກໍ່ເຊັ່ນດຽວກັນກັບບັນດາປະເທດອິນດູຈີນຢູ່ບົນເວທີສາ

ກີນ ແລະຢູ່ພາກພື້ນ .

- ການຮ່ວມມືແລະການເຈືອຈານເຂົ້າກັບອາຊຽນຈະຊ່ວຍໃຫ້ບັນດາປະເທດອິນດູຈີນໄດ້ໄກ້ສິດຕິດແທດກັບຕະຫລາດທຶນຍິ່ງກ່ວາເກົ່າ , ເຕັກໂນລໂຊີແລະຖັນແຖວຊ່ຽວຊານ ຂອງອາຊຽນ ກໍ່ຄືການຜູກພັນ ກັບພື້ນຖານເສດຖະກິດໂລກ ແລະເຂົ້າຮ່ວມການແບ່ງງານສາກົນ .

ບັນດາປະເທດອິນດູຈີນສາມາດສັງເກດຢ່າງລະອຽດທີ່ຖ່ວນແລະຖອດຖອນເອົາບົດຮຽນພັດທະນາຂອງບັນດາປະເທດອາຊຽນ(ຕາມຕົວແບບທີ່ເຫມາະສົມ ).

**ຂ. ເບື້ອງບັນດາປະເທດອາຊຽນ**

- ອິນດູຈີນໄດ້ນຳເອົາໂອກາດ ເພື່ອສ້າງສັນເສດຖະກິດຄືນໃຫມ່ ພ້ອມກັບໂອກາດທາງການຄ້າແລະການລົງທຶນມາໃຫ້ເຂົາເຈົ້າ . ປະເທດເຫຼົ່ານີ້ ມີຂໍ້ສະດວກຫລາຍຢ່າງ ຄືການໄກ້ຄຽງກັນທາງດ້ານພູມສາດແລະການຄ້າຍຄືກັນທາງວັດທະນະທຳ .

- ກຸ່ມປະເທດອິນດູຈີນຕ່າງກໍ່ນຳໃຊ້ລະບົບເສດຖະກິດຕະຫລາດ ຊຶ່ງພ້ອມມີການຂະຫຍາຍຕົວຢ່າງໄວວາ,ແຫລ່ງຊັບພະຍາກອນທຳມະຊາດຮັ່ງມີ ,ແຫລ່ງແຮງງານທີ່ອຸດົມສົມບູນ, ລາຄາຖືກແລະມີສີມືດີສົມຄວນ,ອັນນີ້ຈະເຮັດໃຫ້ບັນດາປະເທດກອາຊຽນໄດ້ສ້າງສັນຄືນໃຫມ່ຂະແຫນງການແລະແຜນງານຕ່າງໆທີ່ ສູນເສັຽຄວາມສາມາດໃນການແກ່ງແຍ່ງຢູ່ປະເທດພວກເຂົາຍ້ອນລາຄາທີ່ດີນ ແລະເງິນເດືອນເພີ່ມຂຶ້ນຢ່າງໄວວາ,ເຮັດໃຫ້ບັນດາວິສາຫະກິດມີໂອກາດສົ່ງທຶນອອກສູ່ຕ່າງປະເທດໃນຕໍ່ຫນ້າ .

- ການພົວພັນອິນດູຈີນ-ອາຊຽນສ່ວນສ່ວນໃຫຍ່ແມ່ນຮູບແບບເພີ່ມເຕີມເສດຖະກິດຫນຶ່ງ.ເຖິງວ່າແນວໃດກໍຕາມ ອິນດູຈີນກໍ່ຖືວ່າເປັນຄູ່ແຂ່ງກັບບາງປະເທດອາຊຽນໃນການຍາດແຍ່ງເອົາການລົງທຶນຈາກຕ່າງປະເທດ ເພາະພວກເຂົາລ້ວນແຕ່ແມ່ນປະເທດທີ່ຜະລິດສິນຄ້າປຸງແຕ່ງໃນເບື້ອງຕົ້ນແລະແມ່ນຂະແຫນງຜະລິດທີ່ນຳໃຊ້ແຮງງານຄົນສູງ.

**2 ດ້ານຈຳກັດຕ່າງໆ**

ການເຈືອຈານພື້ນຖານເສດຖະກິດຂອງອິນດູຈີນເຂົ້າກັບອາຊຽນ ຍັງອາດຈະພົບຄວາມສັບສົນຍ້ອນບັນຕ່າງໆດັ່ງລຸ່ມນີ້ :

- ຍັງມີການແຕກຕ່າງກັນລະຫວ່າງ ກະແສແນວຄິດ,ການເມືອງຕ່າງໆ .

- ຕ້ອງໄດ້ແກ້ໄຂບັນຫາຄົນຫລີ້ ໄພອິນດູຈີນຊຶ່ງພວມເປັນພາລະແບກຫາບຫນັກຫນ່ວງໃຫ້ແກ່ບາງປະເທດອາຊຽນ .

- ປະເທດອາຊຽນທັງຫມົດ(ຍົກເວັ້ນສິງກະໂປ)ລ້ວນແຕມີຂໍ້ຜິພາດກັນກຽວກັບບັນຫາດິນແດນກັບບັນດາປະເທດອິນດູຈີນ ຊຶ່ງບັນຫາທີ່ຫຍຸ້ງຍາກສຸດ ກໍ່ຄືບັນຫາຫມູ່ເກາະສະປາຣາດລີ ທີ່ຮັ່ງມີດ້ວຍຊັບພະຍາກອນ .

- ພື້ນຖານເສດຖະກິດອິນດູຈີນ ຕ້ອງມີເວລາໄລຍະຫນຶ່ງເພື່ອສຳເລັດການຂ້າມຜ່ານຈາກ

( ອ່ານຕໍ່ຫນ້າ 13 )

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ ເລກທີ 702 /ກງ

ວຽງຈັນ,ວັນທີ 20/07/1995

# ຂໍ້ກຳນົດ

ວ່າດ້ວຍທີ່ຕັ້ງ ພາລະບົດບາດ,ໜ້າທີ່,

ຂອບເຂດສິດ ແລະໂຄງປະກອບການຈັດຕັ້ງ

ຂອງກົມກວດກາການເງິນ

- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 104/ນຍ ລົງວັນທີ 6/7/93 ວ່າດ້ວຍການຈັດຕັ້ງ ຂອງກະຊວງການເງິນ .
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 171/ນຍ ລົງວັນທີ 11/11/93 ວ່າດ້ວຍກົດລະບຽບລັດຖະກອນ ແຫ່ງ ສ.ປ.ປ.ລ .
- ອີງຕາມການຄົ້ນຄ້ວາ ນຳສະເໜີ ຂອງຫົວໜ້າກົມກວດກາການເງິນ ແລະການຕົກລົງເຫັນດີເປັນເອກະພາບ ຂອງຄະນະນຳກະຊວງການເງິນ .

## ລັດຖະມົນຕີຕົກລົງອອກຂໍ້ກຳນົດ

## ໝວດທີ 1

ວ່າດ້ວຍທີ່ຕັ້ງ ແລະພາລະບົດບາດຂອງກົມກວດກາການເງິນ

**ມາດຕາ 1** . ກົມກວດກາການເງິນ (ອັກສອນຫຍໍ້ ກກງ) ເປັນກົມໜຶ່ງທີ່ຂຶ້ນກັບກະຊວງການເງິນ ເຊິ່ງໄດ້ສ້າງຕັ້ງຂຶ້ນ (ໃນໂຄງປະກອບ) ຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 104/ນຍ ລົງວັນທີ 6/7/93 ວ່າດ້ວຍການຈັດຕັ້ງກະຊວງການເງິນ .

**ມາດຕາ 2** . ກົມກວດກາການເງິນ ມີພາລະບົດບາດເປັນເສນາທິການ ໃຫ້ລັດຖະມົນຕີກະຊວງການເງິນ ກ່ຽວກັບວຽກງານກວດກາການເງິນ ໃນຂອບເຂດທົ່ວປະເທດ . ປະຕິບັດຕາມຂໍ້ກຳນົດ ກົດລະບຽບ ກົດໝາຍ ຂອງພັກ-ລັດ ແລະການຊີ້ນຳໂດຍກົງຈາກ ທ່ານລັດຖະມົນຕີໃນການເຄື່ອນໄຫວດຳເນີນການກວດກາຢ່າງເປັນປົກກະຕິ .

## ໝວດທີ II
## ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3** . ໜ້າທີ່ ຂອງີມກວດກາການເງິນ

1. ພະນັກງານກວດກາການເງິນ ກໍຄືໜ່ວຍງານກວດກາການເງິນ ທີ່ປະຈຳຢູ່ແຕ່ລະບ່ອນ ຕ້ອງສົມທົບແໜ້ນກັບຄະນະ ກວດກາພັກ-ລັດ , ອຳນາດການປົກແຕ່ລະຂັ້ນ ແລະອົງການ ທີ່ມີສິດອຳນາດກ່ຽວຂ້ອງໃນວຽກງານກວດກາ ໂດຍສະເພາະກັບໜ່ວຍງານກວດກາການເງິນພາຍໃນ ຂອງຂະແໜງການ ຊຶ່ງໄດ້ສ້າງຕັ້ງຂຶ້ນເປັນສະເພາະ (ຖ້າມີ) .

2. ເພື່ອຕິດຕາມການເຄື່ອນໄຫວວຽກງານ ການເງິນ-ການບັນຊີໄດ້ຢ່າງເປັນປົກກະຕິນັ້ນ ທຸກອົງການຈັດຕັ້ງ ຂອງລັດບໍລິຫານ-ວິຊາການ ທຸກຂັ້ນ ,ທຸກຂະແໜງການ ,ບັນດາວິສາຫະກິດຂອງລັດ,ລັດຖຸ້ນສ່ວນ-ເອກະຊົນ ,ຕ້ອງສົ່ງເອກະສານຕ່າງໆ ທີ່ມີສ່ວນກ່ຽວຂ້ອງ ເຖິງການເງິນ-ການບັນຊີ ປະຈຳງວດ ,ປະຈຳປີ ໃຫ້ກົມກວດກາການເງິນ ,ຖ້າຢູ່ທ້ອງຖິ່ນຕ້ອງສົ່ງໃຫ້ ໜ່ວຍກວດກາ ການເງິນປະຈຳທ້ອງຖິ່ນ (ຖ້າມີ) ;

3. ຄົ້ນຄ້ວາບັນດາຮ່າງກົດໝາຍ ,ຂໍ້ກຳນົດກົດລະບຽບຕ່າງໆກ່ຽວກັບນະໂຍບາຍກວດກາການເງິນ ;

4. ກວດກາ ການປະຕິບັດລາຍຮັບ-ລາຍຈ່າຍງົບປະມານຕາມຕົວເລກທີ່ໄດ້ຜ່ານສະພາແຫ່ງຊາດ ກວດກາ ການຮັບ-ການຈ່າຍເງິນ ແລະການຄຸ້ມຄອງຊັບສົມບັດຢູ່ຄັງເງິນແຫ່ງຊາດ, ກວດກາ ການປະຕິບັດວຽກງານເກັບລາຍຮັບເຂົ້າງົບປະມານ ຂອງບັນດາພາກສ່ວນ ທີ່ມີໜ້າທີ່ເກັບເງິນພາສີອາກອນ , ຄ່າທຳນຽມຕ່າງໆ ແລະຣ່ວງລາຍຮັບອື່ນໆທີ່ບໍ່ແມ່ນພາສີອາກອນ ;

5. ກວດກາການເຄື່ອນໄຫວວຽກງານການເງິນ-ການບັນຊີ ຂອງລັດວິສາຫະກິດ-ທຸລະກິດ ແລະພາກສ່ວນອື່ນໆທີ່ມີການພົວພັນ ແລະນຳໃຊ້ທຶນຂອງລັດ ແລະການປະຕິບັດພັນທະ ຂອງຕົນທີ່ມີຕໍ່ລັດ ;

6. ຈັດຕັ້ງເກັບກຳຂໍ້ມູນຂ່າວສານທາງກົງ ແລະທາງອ້ອມທີ່ມີການພົວພັນເຖິງວຽກງານກວດກາ

7. ສ້າງຂໍ້ກຳນົດ ກົດລະບຽບຕ່າງໆ ເພື່ອເປັນເຄື່ອງມືໃຫ້ແກ່ວຽກງານກວດກາໃນແຕ່ລະໄລຍະ;

8. ປະຕິບັດລະບອບລາຍງານ ແລະລະບຽບວິໄນຂອງພະນັກງານກວດກາ ຢ່າງເຂັ້ມງວດ ,ພ້ອມນຳສະເໜີບັນດາວິທີການປັບປຸງແກ້ໄຂໃນລະບອບລະບຽບການເງິນຕ່າງໆທີ່ກວດກາເຫັນວ່າ ບໍ່ສອດຄ່ອງກັບແນວທາງປ່ຽນແປງໃໝ່ຂອງພັກ ແລະລະບຽບຫລັກການຄຸ້ມຄອງການເງິນ ຂອງລັດ ໃນແຕ່ລະໄລຍະ ;

9. ກວດກາທຸກແຫລ່ງທຶນຊ່ວຍເຫລືອ ແລະກູ້ຢືມ ,ນັບທັງການລົງທຶນ ຂອງລັດ ທີ່ນຳໃຊ້ເຂົ້າໃນ

ເປົ້າໝາຍຂອງການພັດທະນາສ້າງສາປະເທດຊາດ .

10. ຄົ້ນຄ້ວາແຕ່ງບົດສອນ ແລະຂື້ນຫ້ອງບັນຍາຍວິຊາການກວດກາການເງິນ ຕາມໂຮງຮຽນການເງິນພາຍໃນປະເທດ ;

11. ຂື້ນແຜນການ ຄຸ້ມຄອງການນຳໃຊ້ທຶນງົບປະມານ ເພື່ອຮັບໃຊ້ວຽກງານວິຊາສະເພາະ ຕາມສາຍຕັ້ງ ເຊັ່ນ : ເງິນສົດ, ວັດຖຸ ອຸປະກອນປະກອບຄົງທີ່, ເຄື່ອງມືອັນຈຳເປັນ ແລະພາຫະນະຮັບໃຊ້ .

**ມາດຕາ 4** . ຂອບເຂດສິດ ຂອງກົມກວດກາການເງິນ :

1. ເພື່ອເຮັດໃຫ້ວຽກງານກວດການເງິນ ໄດ້ເຄື່ອນໄຫວ ໃນຂອບເຂດທົ່ວປະເທດຢ່າງມີປະສິດທິຜົນ ລັດຖະມົນຕີກະຊວງການເງິນ ມີສິດແຕ່ງຕັ້ງ ພະນັກງານກວດກາການເງິນ ໄປປະຈຳຢູ່ທ້ອງຖິ່ນຕ່າງໆ, ຢູ່ບັນດາອົງການຈັດຕັ້ງ ຂອງລັດບໍລິຫານ-ວິຊາການ ທຸກຂັ້ນ, ທຸກຂະແໜງການ, ວິສາຫະກິດຂອງລັດ, ລັດຫຸ້ນສ່ວນ-ເອກະຊົນ ບ່ອນທີ່ເຫັນວ່າມີຄວາມຈຳເປັນ ;

2. ກົມກວດກາການເງິນ ມີສິດກວດກາ ການເຄື່ອນໄຫວດ້ານການເງິນ-ການບັນຊີຂອງທຸກເປົ້າໝາຍກວດກາ ເຊັ່ນ : ວິສາຫະກິດ ລ້ວນແລ້ວແຕ່ຢູ່ພາຍໃຕ້ການກວດກາການເງິນ ;

3. ມີສິດກວດກາທຸກການປະຕິບັດແຜນການການເງິນ, ທຶນຮອນ ເອກະສານການບັນຊີ,ຈຳນວນເງິນສົດ,ພັນທະບັດ ,ວັດຖຸມີຄ່າ ແລະເອກະສານຕ່າງໆທີ່ມີຄຸນຄ່າຄືກັບເງິນ ;

4. ມີສິດກວດກາລາຍຮັບ-ລາຍຈ່າຍຂອງງົບປະມານລວມທັງທຶນຊ່ວຍເຫລືອ ແລະກູ້ຢືມ.ສຳລັບລາຍຈ່າຍ ທຸກການອະນຸມັດສັ່ງຈ່າຍ ຕ້ອງໄດ້ກວດກາພາຍຫລັງເບີກຈ່າຍແລ້ວ ,ແຕ່ໃນກໍລະນີເຫັນວ່າມີຄວາມຈຳເປັນ ກໍມີສິດກວດກາກ່ອນການອະນຸມັດ ຫລືໄລຍະພວມປະຕິບັດ ກໍກວດກາໄດ້;

5. ຕໍ່ກັບເປົ້າໝາຍກວດກາ ທີ່ມີສິດອຳນາດສູງກວ່າ, ກໍມີສິດສະເໜີຂັ້ນເທິງເພື່ອແຕ່ງຕັ້ງຄະນະກວດກາສະເພາະຂື້ນທຳການກວດກາ ;

6. ມີສິດພົວພັນເພື່ອຊອກຫາຂໍ້ມູນຂ່າວສານຈາກພາກສ່ວນອື່ນໆທີ່ເຫັນວ່າມີຄວາມຈຳເປັນ;

7. ມີສິດນຳໃຊ້ງົບປະມານສະເພາະ ລວມທັງພາຫະນະ ແລະອຸປະກອນເຄື່ອງມື, ມີສິດໄດ້ຮັບອັດຕາຄ່າບຳເນັດ-ນະໂຍບາຍຕາມຜົນງານການກວດກາ ທີ່ໄດ້ພົບເຫັນຈາກການສໍ້ໂກງເຊື່ອງອຳຊັບສົມບັດຂອງລັດ ລວມທັງລາຍຮັບ-ລາຍຈ່າຍຂອງງົບປະມານ, ທີ່ເກັບຄືນໄດ້ໃຫ້ລັດ ;

8. ຄຸ້ມຄອງຄອງຈຳນວນພົນ ແລະຄົ້ນຄ້ວາ ຮ່ວມກັບກົມຈັດຕັ້ງ ກໍ່ສ້າງພະນັກງານ ເພື່ອນຳສະເໜີໃຫ້ການຈັດຕັ້ງຂັ້ນເທິງ ແລະພາກສ່ວນກ່ຽວຂ້ອງ ປະຕິບັດນະໂຍບາຍຕໍ່ພະນັກງານລັດຖະກອນຜູ້ທີ່ມີຜົນງານດີເດັ່ນ :ຍົກລະດັບ,ເລື່ອນຊັ້ນ,ເລື່ອນຂັ້ນເງິນເດືອນ,ຍ້ອງຍໍສັນລະເສີນ ແລະປະຕິບັດວິໄນ ຕໍ່ຜູ້ກະທຳຜິດລະບຽບກົດໝາຍຢ່າງເຂັ້ມງວດ .

## ໝວດ III

### ວ່າດ້ວຍໂຄງປະກອບການຈັດຕັ້ງ ຂອງກົມກວດກາ ການເງິນ

**ມາດຕາ 5.** ໂຄງປະກອບການຈັດຕັ້ງ ແລະການແບ່ງງານ

- ກົມກວດກາການເງິນໄດ້ຈັດຕັ້ງມີ 6 ພະແນກ ລາຍລະອຽດມີດັ່ງນີ້:

1. ພະແນກຄຸ້ມຄອງບໍລິຫານ ຈັດຕັ້ງນະໂຍບາຍ ແລະສັງລວມລາຍງານ ມີໜ້າທີ່ :

- ເຮັດໜ້າທີ່ສັງລວມ,ເກັບກຳສະພາບການເຄື່ອນໄຫວວຽກງານພະແນກພາຍໃນກົມ;
- ສຶກສາອົບຮົມ,ຈັດຕັ້ງບຳລຸງກໍ່ສ້າງພະນັກງານ,ປະຕິບັດນະໂຍບາຍຕໍ່ພະນັກງານ,
- ຄຸ້ມຄອງຊັບສິນບັດ, ວັດຖຸອຸປະກອນຕ່າງໆຂອງກົມ ແລະຫ້ອງຖິ່ນ;
- ວຽກງານຂາອອກ-ຂາເຂົ້າ ເກັບມ້ຽນເອກະສານ ແລະຕິດຕໍ່ພົວພັນພາຍນອກ.

2. ພະແນກຄົ້ນຄ້ວາ,ວິໃຈ ແລະວາງແຜນກວດກາ ມີໜ້າທີ່ :

- ຄົ້ນຄ້ວາກົດໝາຍ;
- ເກັບກຳຂໍ້ມູນຂ່າວສານ ແລະຮັບການຮ້ອງຟ້ອງ;
- ຄົ້ນຄ້ວາເຕັກນິກກ່ຽວກັບການກວດກາ;
- ວິໃຈບັນດາເອກະສານ ແລະວາງແຜນການກວດກາ;
- ໄກເກັ່ຍແກ້ໄຂບັນຫາ ກ່ຽວກັບການກວດກາ;
- ປະສານສົມທົບກັບອຳນາດຕຸລາການ .

4. ພະແນກກວດກາ ຄັງເງິນແຫ່ງຊາດ ມີໜ້າທີ່ :

- ກວດກາການປະຕິບັດ ແຜນການລາຍຮັບ-ລາຍຈ່າຍງົບປະມານ;
- ກວດກາລາຍຮັບ-ລາຍຈ່າຍຂອງຄັງເງິນແຫ່ງຊາດ
- ກວດກາການຄຸ້ມຄອງຊັບສິນບັດອື່ນໆຢູ່ຄັງເງິນ;
- ຕິດຕາມລະດົມ,ແຫລ່ງທຶນ,ເງິນແຮລັດຖະບານ,ເງິນກູ້ຢືມ ແລະເງິນສະສົມ.

5. ພະແນກ ກວດກາທຶນຊ່ວຍເຫລືອ-ກູ້ຢືມ ແລະພົວພັນກັບຕ່າງປະເທດ ມີໜ້າທີ່ :

- ກວດກາການນຳໃຊ້ທຶນຊ່ວຍເຫລືອຈາກຕ່າງປະເທດ ແລະອົງການຈັດຕັ້ງສາກົນ ;
- ກວດກາການນຳໃຊ້ທຶນກູ້ຢືມຈາກຕ່າງປະເທດ.

6. ພະແນກ ກວດກາຂົງເຂດວິສາຫະກິດ-ທຸລະກິດ ມີໜ້າທີ່ :

- ກວດກາບັນດາທຶນຮອນ,ການເຄື່ອນໄຫວການເງິນ-ການບັນຊີຂອງວິສາຫະກິດ-ທຸລະກິດ;
- ເກັບກຳເອົາຄຳອະທິບາຍ ແລະການຢັ້ງຢືນບັນຫາຕ່າງໆທີ່ເກີດຂຶ້ນໃນເວລາດຳເນີນການກວດ

ການກວດກາ.

## ໝວດທີ IV

### ວ່າດ້ວຍມາດຖານເງື່ອນໄຂພະນັກງານວິຊາການຢູ່ກົມກວດກາການເງິນ

**ມາດຕາ 6.** ມາດຖານເງື່ອນໄຂຂອງພະນັກງານວິຊາການ ຢູ່ກົມກວດກາການເງິນ :

1. ຕ້ອງແມ່ນຜູ້ທີ່ຮຽນຈົບວິຊາສະເພາະ ມີໃບປະກາດສະນີຍະບັດ ວິຊາການເງິນ,ການບັນຊີ ທະນາຄານ;

2. ມີຄວາມຈົງຮັກພັກດີ ແລະເປັນເອກະພາບກັບແນວທາງນະໂຍບາຍ,ລະບຽ-ກົດໝາຍ ຂອງພັກ-ລັດ;

3. ມີແນວຄິດຫລັກໝັ້ນ ຮູ້ຈຳແນກມິດ ສັດຕູຢ່າງຈະແຈ້ງ, ມີຄວາມເຊື່ອໝັ້ນ,ຕໍ່ສູ້ເດັດດ່ຽວ,ປີ້ນນອນ ແລະເດັດຂາດ, ປະຫວັດປອດໃສ,ຊື່ສັດບໍລິສຸດ,ທ່ຽງທຳ,ຖືຜົນປະໂຫຍດຂອງລັດ,ຂອງລວມໝູ່ສູງກ່ວາຜົນປະໂຫຍດສ່ວນຕົວຢູ່ສະເໝີ ;

4. ມີຄວາມສາມັກຄີຢູ່ພາຍໃນໝູ່ຄະນະ,ໃກ້ຊິດເພື່ອນສະຫາຍ, ເປັນຫ່ວງເປັນໃຍນຳຊີວິດການເປັນຢູ່ ຂອງຕົນເອງ ແລະຜູ້ອື່ນຢ່າງສົມເຫດສົມຜົນ ;

5. ມີສຸກຂະພາບແຂງແຮງ, ໄດ້ຮັບການຢັ້ງຢືນຈາກແພດໝໍຢ່າງສົມບູນ : ບໍ່ມີພະຍາດຊ້ຳເຮື້ອຕິດແປດ ອື່ນໆ ;

6. ມີຄວາມຫ້າວຫັນ,ຊອກຮູ້ຮໍ່າຮຽນສະແຫວງຫາຄວາມກ້າວໜ້າ, ມີຄວາມຖະນອມຖ່ອມຕົວ ແລະສະດຸ້ງໄວ ໃນພາລະກິດປ່ຽນແປງໃໝ່ຂອງພັກ ແລະລັດເພື່ອເຮັດຫລ້ອນໜ້າທີ່ ທີ່ໄດ້ມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ .

## ໝວດທີ V

### ວ່າດ້ວຍລະບອບແບບແຜນວິທີເຮັດວຽກ ຂອງກົມກວດກາການເງິນ

**ມາດຕາ 7.** ລະບອບແບບແຜນວິທີເຮັດວຽກ

1. ແບບແຜນ ແລະວິທີເຮັດວຽກ

- ເຮັດວຽກ ຕາມຫລັກການລວມສູນປະຊາທິປະໄຕ ເຮດວຽກເປັນໝູ່ຄະນະ ແລະມອບວຽກໃຫ້ແຕ່ລະບຸກຄົນຮັບຜິດຊອບ ທັງຈັດຕັ້ງປະຕິບັດຕາມການແບ່ງງານຂັ້ນພະແນກ, ໜ່ວຍງານ ແລະຈຸຊຶ່ງມີການປະສານສົມທົບຊຶ່ງກັນ ແລະກັນ ລະຫວ່າງພະແນກທີ່ຢູ່ພາຍໃນກົມ ແລະພາກສ່ວນລັດ ທີ່ກ່ຽວຂ້ອງ ທັງພາຍໃນ ແລະນອກກະຊວງການເງິນ ທີ່ມີການພົວພັນເຖິງວຽກງານກວດກາການເງິນ;
- ແຕ່ລະໄລຍະຕ້ອງມີການແຜນການແຜນງານ ແລະໂຄງການດຳເນີນງານລະອຽດ ເພື່ອຈັດຕັ້ງ

ປະຕິບັດຕົວຈິງ ຢ່າງເປັນປະຈຳປົກກະຕິ ມີການສະຫລຸບ ແລະຖອດຖອນບົດຮຽນ ໄປພ້ອມໆກັນ.

- ປະຕິບັດ ລະບອບລາຍງານສະພາບການເຄື່ອນໄຫວວຽກງານ ຂອງຕົນໃຫ້ຫົວໜ້າກົມ ແລະຜ່ານຄະນະກົມ ເພື່ອລາຍງານໃຫ້ທ່ານລັດຖະມົນຕີກະຊວງການເງິນຢ່າງເປັນປະຈຳປົກປະຕິ;

2. ການຈັດຕັ້ງແບ່ງງານ ແລະກຳນົດຄວາມຮັບຜິດຊອບ ດັ່ງນີ້ :

- ຫົວໜ້າ ກົມກວດກາການເງິນ : ເປັນຜູ້ຊີ້ນຳລວມ ກ່ຽວກັບວຽກງານກວດກາໂດຍກົງ ຮອບດ້ານ ໃນຂອບເຂດທົ່ວປະເທດ ແລະຂື້ນກັບການຊີ້ບັນຊາໂດຍກົງ ຈາກທ່ານລັດຖະມົນຕີກະຊວງການເງິນ ທັງລົງເລິກວຽກງານຄົ້ນຄ້ວາ,ວິໄຈ ແລະວາງແຜນກວດກາການເງິນ .

- ບັນດາຜູ້ຮອງຫົວໜ້າກົມກວດກາການເງິນ : ເປັນຜູ້ຊ່ວຍວຽກຫົວໜ້າກົມ, ຮັບຜິດຊອບວ່າການແທນເວລາຫົວໜ້າກົມບໍ່ຢູ່ ແລະແບ່ງງານລົງເລິກແຕ່ລະຂົງເຂດວຽກເຊັ່ນ :

+ ຮອງຜູ້ທີ່ໜື່ງ ລົງເລິກວຽກງານຄຸ້ມຄອງບໍລິຫານ ,ຈັດຕັ້ງນະໂຍບາຍ ແລະສັງລວມລາຍງານຄັງເງິນແຫ່ງຊາດ ແລະກວດກາແຫລ່ງທຶນຊ່ວຍເຫລືອ-ກູ້ຢືມ .

+ ຮອງຜູ້ໜື່ງອີກ ລົງເລິກວຽກງານກວດກາການເງິນ ຂົງເຂດບໍລິຫານ-ວິຊາການ ແລະຂົງເຂດວິສາຫະກິດ-ທຸລະກິດ .

## ໝວດທີ VI

## ວ່າດ້ວຍຂໍ້ ກຳນົດສຸດທ້າຍ

**ມາດຕາ 8.** ກົມກວດກາການເງິນ ມີກາປະທັບຂອງຕົນ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9.** ພະນັກງານກວດກາຕ້ອງມີເຄື່ອງແບບ,ກາໝາຍ,ບັດກວດກາສະເພາະ , ພາຫະນະ ແລະອຸປະກອນເຄື່ອງມືອັນຈຳເປັນໃນການເຄື່ອນໄຫວປະຕິບັດວຽກງານທາງລັດຖະການ .

**ມາດຕາ 10.** ມອບໃຫ້ຫ້ອງການກະຊວງ,ກົມກວດກາການເງິນ, ບັນດາກົມ ທີ່ຂື້ນກັບກະຊວງ,ພະແນກການເງິນປະຈຳແຂວງ,ກຳແພງນະຄອນ,ເຂດພິເສດ ແລະຫ້ອງການ ການເງິນປະຈຳເມືອງຈົ່ງຮັບຊາບ ແລະຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ11.** ຂໍ້ ກຳນົດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ,ຂໍ້ ກຳນົດທີ່ປະກາດໃຊ້ໃນເມື່ອກ່ອນ ຫາກມີບາງເນື້ອໃນ,ຂໍ້ ຄວາມທີ່ຂັດກັບຂໍ້ ກຳນົດສະບັບນີ້ລ້ວນແຕ່ຖືກລົບລ້າງ .

ລັດຖະມົນຕີ

ເຊັນແລະປະທັບຕາ:ໄຊສົມພອນ ພົມວິຫານ

# ສະພາບການພັດທະນາເສດຖະກິດ-ສັງຄົມ ຂອງຍີ່ປຸ່ນໂດຍສັງເຂບ.

ແປ ແລະສັງລວມໂດຍ :ບົວລິດ ຂຸນສີ

(ຂໍ້ມູນຄັດຈາກປື້ມສະຖິຕິແຫ່ງຊາດຂອງຍີ່ປຸ່ນ ປີ 1995 )

1. <u>ພາກສະເໜີລວມ</u> :

ເສດຖະກິດ-ສັງຄົມຂອງຍີ່ປຸ່ນ ຊຶ່ງມີຂໍ້ມູນບາງຢ່າງດັ່ງຕໍ່ລົງໄປນີ້ :

ດັ່ງທີ່ພວກເຮົາໄດ້ຮັບຮູ້ວ່າ ປະເທດຍີ່ປຸ່ນ ແມ່ນປະເທດໜຶ່ງ ທີ່ນຳໜ້າທາງດ້ານອຸດສາຫະກຳຂອງໂລກ ອີງໃສ່ສະຖິຕິປີ 1992 ແລ້ວ ຍອດຜະລິດຕະພັນທັງໝົດຂອງໂລກ ມີມູນຄ່າເຖິງ 23 526,2 ຕື້ໂດລາສະຫະລັດ ໃນນັ້ນຍີ່ປຸ່ນກວມເອົາ 15,6%, ອາເມລິກາກວມເອົາ 25,7%, ປະຊາຄົມເອີຣົບກວມເອົາ 29,1%. ເຫລືອນັ້ນ ແມ່ນບັນດາປະເທດອື່ນໆໃນໂລກ .

ອີງໃສ່ສະຖິຕິຂອງ **O E C D** ລາຍໄດ້ແຫ່ງຊາດສະເລັ່ຍຕໍ່ຫົວຄົນສຳລັບປີ 1992 ແລ້ວແມ່ນມີຈຳນວນ 22 847 ໂດລາສະຫະລັດ ຖ້າທຽບໃສ່ຂອງໂລກແມ່ນຢູ່ໃນອັນດັບທີ 3 ຖັດຈາກປະເທດສະວິສ ແລະລຸກຊຳບວກ ຊຶ່ງມີມູນຄ່າຍອດຜະລິດພັນລວມທັງໝົດ ແມ່ນປະມານ 2 839 ຕື້ໂດລາສະຫະລັດ.

2. <u>ໂຄງຮ່າງງົບປະມານແຫ່ງຊາດ ຂອງຍີ່ປຸ່ນ</u> ,

ນັບແຕ່ປີ 1960 ເປັນຕົ້ນມາ ຮອດປີ 1990 ເຫັນວ່າງົບປະມານຂອງລັດຖະບານຍີ່ປຸ່ນ ເພີ່ມຂຶ້ນໃນຈັງວະສູງ ເຊັ່ນ 1960 ງົບປະມານແຫ່ງຊາດມີຈຳນວນປະມານ 1,0 ຕື້ໂດລາສະຫະລັດ. ພ້ອມກັນນັ້ນ ງົບປະມານສຳຮອງມີປະມານ 1,8 ຕື້ໂດລາ,ໃນປີ 1990 ເພີ່ມຂຶ້ນເປັນ 66 ຕື້ໂດລາສະຫະລັດ ໃນນັ້ນງົບປະມານສຳຮອງແມ່ນມີຈຳນວນປະມານ 70 ຕື້ໂດລາສະຫະລັດ. ໃນປີ 1984 ເພີ່ມຂຶ້ນເຖິງ 73 ຕື້ໂດລາສະຫະລັດ ໃນປີນີ້ງົບປະມານສຳຮອງແມ່ນບໍ່ມີເລີຍ .

- <u>ເບື້ອງລາຍຮັບ</u> .

ໃນປີ 1994 ລາຍຮັບທັງໝົດຂອງລັດຖະບານຍີ່ປຸ່ນ ມີຈຳນວນປະມານ 73 ຕື້ໂດລາສະຫະລັດ

1) ລາຍຮັບທີ່ບໍ່ແມ່ນພາສີອາກອນ.

- ໄດ້ຮັບຈາກການຈຳນ່າຍຫຸ້ນກູ້ຂອງລັດຖະບານເຂົ້າໃນການກໍ່ສ້າງ ກວມເອົາ 18,7%
- ລາຍຮັບອື່ນໆນອກຈາກພາສີອາກອນ - " - " - 7,7%

- ລາຍຮັບຈາກການຂາຍໂທລະສັບ,ອຸປະກອນສື່ສານຕ່າງໆ ......... ກວມເອົາ 0,2%

2) ລາຍຮັບຈາກການເກັບພາສີອາກອນ:

| | |
|---|---|
| - ລາຍຮັບຈາກອາກອນກຳໄລ ສ່ວນບຸກຄົນ -"-"- | 29,4% |
| - ລາຍຮັບຈາກອາກອນຕົວເລກທຸລະກິດ | 18,9% |
| - ລາຍຮັບຈາກການສືບທອດມູນມໍລະດົກ | 3,8% |
| - ລາຍຮັບຈາກອາກອນເຄື່ອງດື່ມຂອງມືນເມົາ | 2,9% |
| - ລາຍຮັບຈາກອາກອນນ້ຳມັນ | 2,5% |
| - ລາຍຮັບຈາກພາສີ-ອາກອນອື່ນໆ | 2,5% |
| - ລາຍຮັບຈາກການເກັບສະແຕມ | 2,2% |
| - ລາຍຮັບຈາກການເກັບອາກອນຢາດູດ | 1,4% |
| - ພາສີຂາເຂົ້າ | 1,3% |
| - ລາຍຮັບຈາກການຂາຍດິນ | 0,7% |
| - ລາຍຮັບພິເສດຈາກທຸລະກິດ | 0,02% |
| **ລວມ :** | 100,0% |

- ເບື້ອງລາຍຈ່າຍ :

ປີ 1994 ລາຍຈ່າຍຂອງລັດຖະບານຍີ່ປຸ່ນ ມີຈຳນວນປະມານ 73 ຕື້ໂດລາສະຫະລັດ

| | |
|---|---|
| - ລາຍຈ່າຍເພື່ອສຳລະຫນີ້ພາຍໃນປະເທດ ກວມເອົາ | 19,6% |
| - ລາຍຈ່າຍເພື່ອປະກັນໄພສັງຄົມ -"- | 18,4% |
| - ລາຍຈ່າຍເພື່ອຊ່ວຍການຈັດສັນພາສີທ້ອງຖິ່ນ | 17,5% |
| - ລາຍຈ່າຍໃຊ້ເຂົ້າໃນວຽກງານບໍລິຫານ | 10,6% |
| - ລາຍຈ່າຍໃຊ້ເຂົ້າໃນວຽກງານສຶກສາ ແລະວິທະຍາສາດ | 8,2% |
| - ລາຍຈ່າຍອື່ນໆ | 6,5% |
| - ລາຍຈ່າຍເພື່ອໃຊ້ເຂົ້າໃນການປ້ອງກັນ | 6,5% |
| - ລາຍຈ່າຍເພື່ອໂອນເຂົ້າບັນຊີສຳຮອງເພື່ອລົງທຶນດ້ານອຸດສາຫະກຳ | 4,9% |
| - ລາຍຈ່າຍເພື່ອໃຊ້ເຂົ້າໃນການຊົດເຊີຍ | 2,4% |
| - ລາຍຈ່າຍເພື່ອໃຊ້ເຂົ້າໃນການພົວພັນເສດຖະກິດ | 1,4% |

- ລາຍຈ່າຍເພື່ອເອົາໄວ້ເປັນທຶນສຳຮອງໃຫ້ພາກສ່ວນພະລັງງານ ກວມເອົາ 0,9%
- ລາຍຈ່າຍໄວ້ເປັນເງິນແຮ 0,5%
- ລາຍຈ່າຍໃຊ້ເຂົ້າໃນການຄວບຄຸມສະບຽງອາຫານ 0,4%
- ລາຍຈ່າຍເອົາເປັນທຶນສຳຮອງ ໃຫ້ບ/ສຂະໜາດກາງແລະນ້ອຍ 0,3%

ລວມ : 100%

3. <u>ຮຸ້ນກູ້ຂອງລັດຖະບານ</u>:

ການພິມຈຳໜ່າຍຮຸ້ນກູ້ຂອງລັດຖະບານຍີ່ປຸ່ນ ມີຢູ່ 2 ເປົ້າໝາຍໃຫຍ່ ຄື :

1) ການພິມຈຳໜ່າຍຮຸ້ນກູ້ເຂົ້າໃນໂຄງການກໍ່ສ້າງ ຊຶ່ງແຕ່ປີ 1970 ຊຶ່ງມີມູນຄ່າ 430 ລ້ານໂດລາສະຫະລັດ.ຮອດປີ 1994 ມີມູນຄ່າເພີ່ມຂຶ້ນເຖິງ 10,5 ຕື້ໂດລາສະຫະລັດ .

2) ການພິມຈຳໜ່າຍຮຸ້ນກູ້ ເພື່ອຖົມຂຸມການຂາດດຸ່ນຂອງງົບປະມານ ຮຸ້ນດັ່ງກ່າວ ໄດ້ເລີ່ມໃຊ້ແຕ່ປີ 1980 ຊຶ່ງມີມູນຄ່າ 7 ຕື້ໂດລາສະຫະລັດ ຮອດປີ 1985 ຫລຸດລົງ 5 ຕື້ໂດລາສະຫະລັດ ແຕ່ປີ 1986 ເຖິງປີ 1993 ລັດຖະບານຍີ່ປຸ່ນ ສາມາດດຸ່ນດ່ຽງງົບປະມານໄດ້ ໝາຍຄວາມວ່າ ບໍ່ໄດ້ພິມຮຸ້ນກູ້ອອກເພື່ອຖົມຂຸມງົບປະມານແຫ່ງຊາດອີກ .ແຕ່ປີ 1994 ລັດຖະບານ ຍີ່ປຸ່ນໄດ້ພິມຮຸ້ນກູ້ອອກຈຳໜ່າຍອີກຈຳນວນ 3 ຕື້ ໂດລາສະຫະລັດ .

4. ພາລະບົດບາດ ຂອງຄັງເງິນແຫ່ງຊາດ ພາກການກູ້ຢືມແລະການລົງທຶນ .

ຄັງເງິນແຫ່ງຊາດ ຂອງຍີ່ປຸ່ນ ແມ່ນອົງການສຳຄັນອັນໜຶ່ງ ຊຶ່ງມີແຫລ່ງທຶນມາຈາກການຝາກເງິນປະຫຍັດຂອງປະຊາຊົນ ຕາມຫ້ອງການໄປສະນີ(Postal saving ) ທົ່ວປະເທດ ນອກນັ້ນຍັງໄດ້ມາຈາກທຶນປະກັນໄພສັງຄົມ,ທຶນປະກັນໄພເສັຽຊີວິດ.ກ້ອນທຶນດັ່ງກ່າວນີ້ ແມ່ນໄດ້ປ່ອຍໃຫ້ບັນດາຂະແໜງການຕ່າງໆຂອງລັດ ແລະເອກະຊົນຢືມຕໍ່ ຈຸດປະສົງແມ່ນແນໃສ່ ການກໍ່ສ້າງທີ່ພັກອາໃສ ຂອງປະຊາຊົນ,ກໍ່ສ້າງໂຄງລ່າງຂອງເສດຖະກິດແຫ່ງຊາດ ການພົວພັນເສດຖະກິດ ແລະອື່ນໆ ຫລືເຮົາອາດເອີ້ນວ່າ ແມ່ນງົບປະມານລະດັບທີ່ສອງ .

ການກູ້ຢືມແລະລົງທຶນຂອງຄັງເງິນແຫ່ງຊາດຍີ່ປຸ່ນ ໄດ້ເລີ່ມມາຈາກປີ 1960 ຊຶ່ງເວລານັ້ນ ການລະດົມສະສົມທຶນໃຫ້ພຽງແຕ່ 600 ຮ້ອຍກ່ວາລ້ານໂດລາສະຫະລັດ ຮອດປີ 1994 ໄດ້ເພີ່ມຂຶ້ນເຖິງ 48 ຕື້ໂດລາສະຫະລັດ .

- ລາຍລະອຽດຂອງການກູ້ຢືມ ແລະລົງທຶນຂອງຄັງເງິນແຫ່ງຊາດໃນສົກງົບປະມານປີ 1994 .
- ການລົງທຶນໃສ່ການກໍ່ສ້າງທີ່ພັກພາອາໃສໃຫ້ແກ່ປະຊາຊົນ ກວມເອົາ 27,6%

- ໃຊ້ເຂົ້າໃນການລິຫານ ( Fund Management ) ກວມເອົາ 17,1%
- ໃຊ້ເຂົ້າໃນການປົວແປງສະພາບແວດລ້ອມ ແລະຊີວິດການເປັນຢູ່ຂອງປະຊາຊົນ 13,5%
- ປ່ອຍໃຫ້ບໍລິສັດຂະໜາດນ້ອຍ-ຂະໜາດກາງກູ້ຢືມ 12,3%
- ໃຊ້ເຂົ້າໃນການກໍ່ສ້າງທາງຫລວງແຫ່ງຊາດ 7,3%
- ໃຊ້ເຂົ້າໃນການກໍ່ສ້າງລະບົບຂົນສົ່ງ ແລະໂທລະຄົມມະນາຄົມ 4,6%
- ໃຊ້ເຂົ້າໃນການຄົ້ນຄວ້າ ແລະພົວພັນເສດຖະກິດ 4,2%
- ໃຊ້ເຂົ້າໃນການຂະຫຍາຍອຸດສະຫະກຳ ແລະເຕັກໂນໂລຊີ 2,7%
- ໃຊ້ເຂົ້າໃນການພັດທະນາທ້ອງຖິ່ນ 2,2%
- ໃຊ້ເຂົ້າໃນການປົວແປງດ້ານກະສິກຳ -ປ່າໄມ້ແລະການປະມົງ 2,1%
- ໃຊ້ເຂົ້າໃນການກໍ່ສ້າງແລະພັດທະນາໂຄງລ່າງຂອງການສຶກສາ 1,7%
- ໃຊ້ເຂົ້າໃນການກໍ່ສ້າງລະບົບປ້ອງກັນດິນເຈື່ອນ 1,1%

5. <u>ການລົງທຶນຂອງຍີ່ປຸ່ນ ຢູ່ຕ່າງປະເທດ</u> .

ນັບແຕ່ປີ 1972 ເປັນຕົ້ນມາ ເງິນເຢັນໄດ້ເລີ່ມແຂງຕົວຂື້ນ , ຊຶ່ງຊຸກດັນໃຫ້ບໍລິສັດຂອງຍີ່ປຸ່ນຕ້ອງໄດ້ອອກໄປລົງທຶນທີ່ຕ່າງປະເທດ ຮອດປີ 1980 ມູນຄ່າຊັບສິນທີ່ຍີ່ປຸ່ນ ໄດ້ລົງທຶນຢູ່ຕ່າງປະເທດລວມມີ 36,5 ຕື້ໂດລາສະຫະລັດ ຮອດປີ 1993 ໄດ້ເພີ່ມຂື້ນເປັນ 422,5ຕື້ໂດລາສະຫະລັດ ໃນນັ້ນ ;

- ຢູ່ທະວີບອະເມລິກາເໜືອ ກວມເອົາ 43,8% ສະເພາະຢູ່ໃນປະເທດອະເມລິກາ 41,9%
- ຢູ່ທະວີບອາຊີ - " - 15,7%
- ບັນດາປະເທດອະເມລິກາລາຕິນ 11,8%
- ອາຟຣິກາ 1,7%
- ຕາເວັນອອກໄຕ້ ແລະຕາເວັນອອກກາງກວມ 1,1%

6. <u>ລະບົບເງິນຝາກ ແລະເງິນກູ້ ຂອງທະນາຄານຍີ່ປຸ່ນ</u>

ໃນປີ 1993 ທະນາຄານທັງໝົດຂອງຍີ່ປຸ່ນ ໄດ້ປ່ອຍສິນເຊື່ອໃນຈຳນວນ 477,6 ຕື້ໂດລາສະຫະລັດ ໃນນັ້ນ ປ່ອຍໃຫ້ :

- ປ່ອຍເພື່ອການຂາຍຍົກຂາຍຍ່ອຍ ໃນຂະແໜງທັນຍາຫານ ແລະການບໍລິໂພກ 16,9%
- ປ່ອຍໃຫ້ພາກເອກະຊົນ 16,1%
- ປ່ອຍໃຫ້ບັນດາອຸດສາຫະກຳປຸງແຕ່ງ 16,0%

- ປ່ອຍໃຫ້ຂະແໜງບໍລິການ 15,4%
- ປ່ອຍໃຫ້ ພາກສ່ວນຄຸ້ມຄອງບໍລິຫານຊັບສິນ ຂອງລັດ 11,4%
- ປ່ອຍເຂົ້າໃນວຽກງານການເງິນ ແລະປະກັນໄພ 10%
- ປ່ອຍເຂົ້າໃນວຽກງານກໍ່ສ້າງ 6,2%
- ປ່ອຍເຂົ້າໃນວຽກງານອື່ນໆ 3,5%
- ປ່ອຍເຂົ້າໃນກິດຈະການຄົມມະນາຄົມ ແລະໂທລະຄົມມະນາຄົມ 3,4%
- ປ່ອຍເຂົ້າໃນກິດຈະການ ການໄຟຟ້າ,ອາຍແກ໊ດ,ນ້ຳປະປາ 1,4%

ລວມ : 100%

ນັບແຕ່ປີ 1970 ເປັນຕົ້ນມາເຖິງປີ 1993 ເຫັນວ່າບັນຊີເງິນຝາກ ຢູ່ທະນາຄານຍີ່ປຸ່ນ ແມ່ນເພີ່ມຂຶ້ນ ຊຶ່ງມີລາຍລະອຽດໃນຕາຕະລາງລຸ່ມນີ້ :

ຕາຕະລາງສົມທຽບແຫລ່ງເງິນຝາກ

| ປີ / ແຫລ່ງເງິນຝາກ | 1970 | 1993 |
|---|---|---|
| (1)ເງິນຝາກຈາກບັນດາຫົວໜ່ວຍທຸລະກິດຕ່າງໆ | 19 ຕື້ | 165 ຕື້ |
| (2)ເງິນຝາກຈາກພາກສ່ວນບຸກຄົນ | 13 ຕື້ | 208 ຕື້ |
| (3)ເງິນຝາກຈາກແຫລ່ງອື່ນໆ | 4,4ຕື້ | 52 ຕື້ |

7. ສະພາບເງິນເດືອນ

+ ເງິນເດືອນສຳລັບຂັ້ນນຳ

ເງິນເດືອນສຳລັບຜູ້ນຳ ອີງຕາມສະຖິຕິ 1994 ມີລະດັບເງິນເດືອນດັ່ງຕໍ່ລົງໄປນີ້ :

(ຄິດໄລຫົວໜ່ວຍສະເລັ່ຽ 1 ໂດລາສະຫະລັດ = 100 ເຢັນ)

- ນາຍົກລັດຖະມົນຕີ ໄດ້ເດືອນລະ 22.080 ໂດລາ
- ໂຄສົກຂອງຜູ້ແທນລາດສະດອນ - " - " - 22.080 ໂດລາ
- ປະທານສະພາແຫ່ງຊາດ 22.080 ໂດລາ
- ຫົວໜ້າສານສູງສຸດ 22.080 ໂດລາ
- ບັນດາລັດຖະມົນຕີ 16.110 ໂດລາ

- ທີ່ວຫນ້າຄະນະເລຂາທິການປະຈຳສຳນັກງານນາຍົກ 16.110 ໂດລາ
- ຮອງໂຄສົກຂອງຜູ້ແທນລາດສະດອນ 16.110 ໂດລາ
- ຮອງປະທານສະພາແຫ່ງຊາດ 16.110 ໂດລາ
- ສະມາຊິກສະພາຜູ້ແທນລາດສະດອນ 13.170 ໂດລາ
- ສະມາຊິກສະພາແຫ່ງຊາດ 13.170 ໂດລາ
- ບັນດາເຈົ້າແຂວງຕ່າງໆ ສະເລັ່ຽ 12.500 ໂດລາ

+ ເງິນເດືອນສຳລັບພະນັກງານບໍລິຫານ.

- ເງິນເດືອນຂອງພະນັກງານສັງກັດລັດບໍລິຫານ ຂອງລັດຖະບານກາງ. ສະເລັ່ຽແລ້ວ ໄດ້ເດືອນລະ 3.230 ໂດລາສະຫະລັດ

- ເງິນເດືອນຂອງພະນັກງານສັງກັດລັດບໍລິຫານ ຂອງລັດຖະບານທ້ອງຖິ່ນ ຄິດເປັນໂດລາ .

| | ພະນັກງານບໍລິຫານທົ່ວໄປ | ຄູສອນໂຮງຮຽນອຸດົມສາມັນ | ຄູສອນໂຮງຮຽນປະຖົມ-ມັດທະຍົມ | ກຳມະກອນດັບເພີງ | ຕຳຫລວດ |
|---|---|---|---|---|---|
| ສະເລັ່ຽ | 3.500 | 3.470 | 3.300 | 2.980 | 3.290 |
| ຂັ້ນແຂວງ | 3.100 | 3.460 | 3.320 | 3.380 | - " - |
| ຂັ້ນເມືອງໃຫຍ່ | 3.200 | 3.570 | 3.250 | 3.050 | - " - |
| ຂັ້ນເມືອງ | 3.140 | 3.560 | 3.100 | 3.100 | - " - |
| ຂັ້ນບ້ານ | 2.820 | 3.000 | 2.700 | 2.650 | - " - |

+ ເງິນເດືອນສຳລັບຜູ້ເລີ່ມເຮັດວຽກໃຫມ່ ບໍ່ວ່າບໍລິຫານຂອງລັດ ກໍ່ຄືທຸລະກິດເອກະຊົນ ອີງຕາມສະຖິຕິ ປີ 1993 ຄິດໄລ່ທົ່ວຫນ່ວຍ 1 ໂດລາສະຫະລັດ =100 ເປັນ.

| | ຈົບຊັ້ນມັດທະຍົມສຶກສາ | | ຈົບຊັ້ນອຸດົມສຶກສາ | | ຈົບມະຫາວິທະຍາໄລ | |
|---|---|---|---|---|---|---|
| | ຜູ້ຊາຍ | ຜູ້ຍິງ | ຜູ້ຊາຍ | ຜູ້ຍິງ | ຜູ້ຊາຍ | ຜູ້ຍິງ |
| ຈຳນວນໄດ້ຮັບ | 1.315 | 1.200 | 1.500 | 1.420 | 1.900 | 1.810 |

+ ຂັ້ນເງິນເດືອນ ຂອງພະນັກງານໃນຂະແຫນງອຸດສາຫະກຳ -ບໍລິການ

- ພະນັກງານເຮັດວຽກຢູ່ໃນຂະແຫນງໄຟຟ້າ,ອາຍແກ໊ດ,ນ້ຳປະປາ ໄດ້ເງິນເດືອນ 5.690ໂດລາ
- ພະນັກງານເຮັດວຽກໃນຂະແຫນງກໍ່ສ້າງ 4.400ໂດລາ
- ພະນັກງານບໍ່ແຮ່ 4.270ໂດລາ
- ພະນັກງານອຸດສາຫະກຳປຸງແຕ່ງ 3.700ໂດລາ

- ພະນັກງານຂາຍຍົກ ຂາຍຍ່ອຍ ຮ້ານອາຫານຕ່າງໆ 3.260 ໂດລາ

- ສະເລັ່ຽທັງໝົດໃນຂະແໜງອຸດສາຫະກຳ ແລະບໍລິການ 3.900 ໂດລາ

8. ກ່ຽວກັບພະນັກງານບໍລິຫານໃນກົງຈັກລັດ.

ພະນັກງານບໍລິຫານຂອງລັດ ແບ່ງອອກເປັນສອງປະເພດ ຄື :

ພະນັກງານສັງກັດຢູ່ກົງຈັກບໍລິຫານ ຂອງລັດຖະບານກາງ ແລະພະນັກງານສັງກັດຢູ່ກົງຈັກລັດບໍລິຫານທ້ອງຖິ່ນ;ຊຶ່ງທັງໝົດແລ້ວມີພະນັກງານທົ່ວໄປ ແລະພະນັກງານທີ່ຖືກຄັດເລືອກ(ລັດຖະມົນຕີ, ເຈົ້າແຂວງ,ເອກອັກຄະຣາດສະທູດ...)

ຈຳນວນພະນັກງານສັງກັດລັດບໍລິຫານ( ອີງໃສ່ສະຖິຕິປີ 1992)

| | |
|---|---|
| ຈຳນວນລວມ | 4.492.726 ຄົນ |
| + ພະນັກງານສັງກັດຢູ່ໃນລັດຖະບານກາງ | 1.167.961 ຄົນ |
| ພະນັກງານທົ່ວໄປ | 838.700 ຄົນ |
| ພະນັກງານພິເສດ( ສະມາຊິກສະພາ...) | 329.261 ຄົນ |
| + ພະນັກງານສັງກັດລັດຖະບານທ້ອງຖິ່ນ | 3.324.765 ຄົນ |
| ພະນັກງານທົ່ວໄປ | 3.244.600 ຄົນ |
| ພະນັກງານພິເສດ | 80.165 ຄົນ |

**ສະພາບດ້ານການຄ້າ ຂອງຍີ່ປຸ່ນ**

1. ພາກສະເໜີລວມ

ອີງຕາມສະຖິຕິແຫ່ງຊາດ ຂອງຍີ່ປຸ່ນໃນປີ 1993 ການຂາດດຸນທາງການຄ້າຂອງຍີ່ປຸ່ນມີຈຳນວນ 120,2 ຕື້ ໂດລາສະຫະລັດ ສາຍເຫດຍ້ອນວ່າ ນັບແຕ່ລະຫວ່າງປີ 1975 ເປັນຕົ້ນມາ ເງິນເຢັນເລີ່ມແຂງຕົວຂຶ້ນ ຍ້ອນວ່າລະບົບອັດຕາແລກປ່ຽນເງິນຕາລະຫວ່າງຊາດ ຊຶ່ງເອີ້ນວ່າ (Bretton Woods).ແມ່ນລະບົບອັດຕາແລກປ່ຽນລະຫວ່າງຊາດ ຊຶ່ງສ້າງຂຶ້ນພາຍຫລັງສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ ການແລກປ່ຽນເງິນຕາຈາກປະເທດທີ່ໜຶ່ງ ຫາເງິນຕາອີກປະເທດທີ່ສອງ ຕ້ອງໄດ້ຜ່ານເງິນໂດລາສະຫະລັດອາເມລິກາເສັຽກ່ອນ ຈຶ່ງມີຜົນໃຊ້ໄດ້,ຢ່າງໃດກໍດີ ມາຮອດປີ 1971 ສະພາບການຄ້າຂອງໂລກ ນັບມື້ນັບຂະຫຍາຍຂຶ້ນ ມັນຮຽກຮ້ອງເຖິງຄວາມວ່ອງໄວ ສະດວກສະບາຍຂຶ້ນ ລະບົບການແລກປ່ຽນເງິນຕາດັ່ງກ່າວ ຈຶ່ງບໍ່ແທດເໝາະ ຮອດປີ 1973 ຈຶ່ງໄດ້ຖືກລົ້ມລະລາຍໄປ. ຈາກນັ້ນ ອັດຕາແລກປ່ຽນເງິນຕາລະຫວ່າງສອງປະເທດ ແມ່ນລັດຖະບານສອງປະເທດ ເປັນຜູ້ຕົກລົງ ອີງຕາມບໍລິມາດຂອງສິນຄ້າ ຂາອອກ-ຂາເຂົ້າເປັນພື້ນຖານ ແລະກົດເກນຂອງຕະຫລາດ ເປັນສິ່ງວັດແທກອັດຕາແລກປ່ຽນ ຊຶ່ງມັນປະ

ກໍດອອກເປັນສອງແບບຄື (dirty float) ແລະ (Clean float ).

ຢ່າງໃດກໍດີໃນເມື່ອຍີ່ປຸ່ນໄດ້ມີນະໂຍບາຍສົ່ງສິນຄ້າຂາອອກຫລາຍເທົ່າໃດ ສະກຸນເງິນເຢັນກໍນັບມື້ນັບມີຄຸນຄ່າ ຫລືແຂງຕົວຂື້ນ. ເມື່ອເປັນເຊັ່ນນັ້ນ ມັນຈຳເປັນໃຫ້ບໍລິສັດຂອງຍີ່ປຸ່ນຈຳຕ້ອງໄດ້ມີນະໂຍບາຍ ໄປລົງທືນຕ່າງປະເທດ ເພື່ອຫລຸດຜ່ອນຕົ້ນທືນລົງ ໂດຍໃຊ້ຈ່າຍຄ່າແຮງງານດ້ວຍລາຄາຖືກ(ລາຍລະອຽດການລົງທືນ ຂອງຍີ່ປຸ່ນ ຢູ່ຕ່າງປະເທດ ໄດ້ລາຍງານໄປໃນ ຂໍ້ທີ 5 ຂ້າງເທິງນີ້ )ດ້ວຍເຫດນີ້ເອງ ຍີ່ປຸ່ນຈິ່ງຍັງມີການຂາດດຸນທາງການຄ້າກັບຕ່າງປະເທດ ຄືດັ່ງນີ້ :

- ການຂາດດຸນທາງການຄ້າກັບສະຫະລັດອາເມລິກາ ມີມູນຄ່າ : 50,1 ຕື້ໂດລາ
- ການຂາດດຸນທາງດ້ານການຄ້າກັບບັນດາປະເທດໃນທະວີບອາຊີມູນຄ່າ 53,5 ຕື້ໂດລາ
- ການຂາດດຸນທາງດ້ານການຄ້າກັບບັນດາປະຊາຄົມເອີລົບ 26,2 ຕື້ໂດລາ

( ອ່ານຕໍ່ສະບັບໜ້າ )



แลภป่รมถวามเข้ม.

## บึดธรม เม้ภฐิโภในภาม ป้อງภัม และแภ้ไຂວິภึดภาม ทาງภามเງິม

โดย: สิลา วຽງແກ້ວ

เພື່ອเป็มบ่อมອີງໃຫ້ແກ່ภามแลภป่รมถำเข้ม , ທັງเป็มภามปับถวามเຂົ້າใจ ต่บัมຫາภามป้อງภัม และแภ้ไຂວິภึดภาม ทาງภามเງິม,ผู้ຂຽມຂໍທົບທວมถวามเป็มมาทาງທິດสะดี ທີ່ຕິດພັນກັບสายเຫດ ຂອງວິภึดภามเຊັ່ນภามวาງมะโยบายทาງດ້ານภามเງິม ທີ່บ่สอดถ่อງ ກັບสะພາວະถวามเป็มຈິງ ຂອງປະເທດ. มะโยบายภามเງິมໝາຍເຖິງภามກຳນົດมาดตะภามຕ່າງໆ ຂອງລັດຖະບານປະເທດໃດໜຶ່ງ ເພື່ອຄວບຄຸມປັດໃຈທາງດ້ານภามເງິນ ເຊັ່ນ : ປະລິມານภามເງິນ,ภามປ່ອຍສິນເຊື່ອ ແລະອັດຕາດອກເບ້ຍເປັນຕົ້ນ. ນະໂຍບາຍภามເງິນສ່ອງແສງຄວາມສຳພັນ ຂອງມາດຕະภามຕ່າງໆຕໍ່ປັດໃຈທາງภามເງິນ ແລະຜົນກະທົບຕໍ່ປັດໃຈອື່ນ ໃນເບື້ອງภามຜະລິດ. ภามກຳນົດມາດຕະภาม ແລະภามຄວບຄຸມປັດໃຈດັ່ງກ່າວ ແມ່ນແນໃສ່ເພື່ອບັນລຸ ເປົ້າໝາຍທາງເສດຖະກິດທີ່ຕ້ອງภาม,ຈາກທີ່ກ່າວມານີ້ ຈຶ່ງເຫັນໄດ້ວ່າ ເປົ້າໝາຍຂອງນະໂຍບາຍภามເງິນມີຢູ່ສອງອັນຄື : ເປົ້າໝາຍທຳອິດ ເພື່ອຄວບຄຸມປັດໃຈທາງດ້ານภามເງິນ ເອີ້ນວ່າເປົ້າໝາຍຂັ້ນກາງ( Intermediate Targets ) , ເປົ້າໝາຍທີສອງເພື່ອບັນລຸເປົ້າໝາຍທາງເສດຖະກິດ ຫລືອັດຕາภามຂະຫຍາຍຕົວທາງເສດຖະກິດທີ່ຕ້ອງภามເອີ້ນວ່າເປົ້າໝາຍຂັ້ນສຸດທ້າຍ (Ultimate Targets ).

ເປົ້າໝາຍທາງເສດຖະກິດຈະບັນລຸຫລືບໍ່ນັ້ນ,ສ່ວນນຶ່ງແມ່ນຂຶ້ນກັບຄວາມຄ່ອງຕົວຂອງภามນຳໃຊ້ເຄື່ອງມືຂອງນະໂຍບາຍภามເງິນເປັນຕົ້ນภามຊື້ຂາຍຫລັກຊັບ,ภามປ່ຽນແປງອັດຕາສ່ວນຫລຸດ ແລະภามປ່ຽນແປງເງິນສົດສຳຮອງ ແລະອີກດ້ານນຶ່ງ ກໍຂຶ້ນກັບທາງເລືອກປະຕິບັດນະໂຍບາຍภามເງິນຮັດກຸມ ຫຼືນະໂຍບາຍภามເງິນແບບຜ່ອນຄາຍ,ທະນາຄານກາງຈະດຳເນີນນະໂຍບາຍແບບໃດ ຂຶ້ນຢູ່ກັບພາວະເສດຖະກິດ ແລະภามເງິນ .ໃນເວລາທີ່ເກີດເງິນຝືດຫລືມີຄວາມກົດດັນຢ່າງແຂງແຮງຈາກເງິນຝືດ,ທະນາຄານກາງກໍຈະໃຊ້ນະໂຍບາຍภามເງິນຜ່ອນຄາຍ,ກົງກັນຂ້າມເວລາທີ່ເກີດເງິນເຟີ້ ຫຼືມີຄວາມກົດດັນຈາກເງິນເຟີ້ຢ່າງແຂງແຮງ,ທະນາຄານກໍຈະໃຊ້ນະໂຍບາຍຮັດກຸມ ແນ່ໃສ່ຫລຸດປະລິມານເງິນ ຫຼືຢ່າງນ້ອຍກໍບໍ່ໃຫ້ປະລິມານເງິນເພີ່ມຂຶ້ນ.

ແນ່ນອນອັນນີ້ແມ່ນເບື້ອງທິດສະດີ ,ສ່ວນພາກປະຕິບັດຍັງມີຫລາຍປັດໃຈ ເຊັ່ນຄວາມສາມາດຂອງທະນາຄານກາງໃນภามຄຸ້ມຄອງໂດຍທາງອ້ອມກ່ຽວກັບບໍລິມາດເງິນຕາໃນภามຈໍລະ

ຈອນ ແລະຄຸ້ມຄອງລະບົບທະນາຄານ .

ສັງລວມແລ້ວ ເວົ້າໄດ້ວ່າການບັນລຸຜົນສຳເລັດທາງດ້ານເສດຖະກິດ ກໍຄືດ້ານການເງິນກ່ອນອື່ນໝົດແມ່ນຂື້ນກັບນະໂຍບາຍການເງິນໃນແຕ່ລະໄລຍະ ແຕ່ລະສະພາບການ , ຊຶ່ງຕ້ອງດຳເນີນການຄົ້ນຄ້ວາ ແລະວາງນະໂຍບາຍດັ່ງກ່າວຢ່າງລະມັດລະວັງ,ບໍ່ດັ່ງນັ້ນກໍຈະເກີດວິກິດການອັນໃດອັນນຶ່ງ .

ເພື່ອເປັນການປະກອບຄຳເຫັນ ແລະຖອດຖອນບົດຮຽນ ຜູ້ຂຽນຂໍຍົກເອົາບາງອັນຈາກປະສົບການ ແລະບົດຮຽນ ຂອງເມັກຊີໂກ ໃນການປ້ອງກັນ ແລະແກ້ໄຂວິກິດການທາງດ້ານການເງິນຄືດັ່ງນີ້ : ນັບແຕ່ເມັກຊີໂກໄດ້ເລີ່ມປະຕິບັດໂຄງການປະຕິຮູບເສດຖະກິດຕາມກົນໄກເສດຖະກິດແບບຕະຫລາດເປັນຕົ້ນມາ,ລັດຖະບານເມັກຊິກໂກໄດ້ຮັບຜົນສຳເລັດເປັນຢ່າງດີ ,ແຕ່ປີ1998 ຮອດປີ 1993 ດ້ວຍການສະໜັບສະໜູນຢ່າງເປັນເຈົ້າການ ຂອງກອງທຶນເງິນຕາສາກົນ ,ປະເທດເມັກຊິກໂກ ໄດ້ປັບປຸງໃຫ້ມີຄວາມເຂັ້ມແຂງໃນຂະບວນວິວັດແຫ່ງການສ້າງສະຖຽນລະພາບທາງດ້ານເສດຖະກິດມະຫາພາກ .ຈຸດໝາຍຍຸດທະສາດຂອງເມັກຊິກໂກ ແມ່ນເພື່ອບັນລຸໃຫ້ມີຄວາມເຊື່ອໝັ້ນຈາກພາຍນອກ ,ຊຸກຍູ້ໃຫ້ພາກເອກະຊົນມີການຂະຫຍາຍຕົວ. ໃນເວລານັ້ນ ນະໂຍບາຍການເງິນຂອງເມັກຊິກໂກ ແມ່ນອີງໃສ່ນະໂຍບາຍຮັດກຸມ,ການນຳໃຊ້ອັດຕາແລກປ່ຽນເປັນປັດໃຈດັດສົມ ແລະການດຳເນີນການປະຕິຮູບທາງດ້ານໂຄງປະກອບ ນັບທັງການຫັນເປັນກຳມະສິດອື່ນ,ການຄ້າ,ແລະເປີດເສລີການແລກປ່ຽນ ແລະດັດແກ້ໜີ້ສິນຕ່າງປະເທດຕົ້ນຕໍ .ຜົນສຳເລັດແມ່ນເຫັນໄດ້ຢ່າງເດັ່ນຊັດໃນຫລາຍຂົງເຂດ. ການຫລຸດຜ່ອນການຂາດດຸນງົບປະມານໄດ້ບັນລຸເປົ້າໝາຍ ,ອັດຕາເງິນເຟີ້ໄດ້ຫລຸດລົງຈາກ 160% ໃນປີ 1987 ມາເປັນ 8%ໃນປີ93 ຊຶ່ງທຽບໃສ່ຊຸມປີ1985-88ມີພຽງສູງກວ່າ 0% ເລັກໜ້ອຍ .ໃນປີ 1994 ປະເທດເມັກຊິກໂກໄດ້ເຂົ້າເປັນສະມາຊິກ ຂອງສັນຍາການຄ້າເສລີ ອາເມລິກາເໜືອ(NAFTA)ດ້ວຍພາວະເສດຖະກິດທີ່ເຂັ້ມແຂງ .

ແຕ່ມີອັນໃດດຳເນີນຜິດພາດ ? ເຫັນວ່າມີຫລາຍປັດໃຈ . ກ່ອນອື່ນຍັງສັງເກດວ່າ ຖານະທາງເສດຖະກິດຂອງເມັກຊິກໂກ ເວລາເລີ້ມຕົ້ນຂອງປີ 1994 ຍັງມີແນວພັນຂອງວິກິດການ ທີ່ໄດ້ເກີດຂື້ນໂດຍສະເພາະແລ້ວ ແມ່ນການຂາດດຸນບັນຊີເດີນສະພັດ ຊຶ່ງກວມເຖິງ 6,5% ຂອງ GDP ໃນປີ1993 ທີ່ນຳໃຊ້ກະແສເງິນທຶນໄລຍະສັ້ນມາຖົມ. ເກີດມີການປັ່ນປ່ວນເບື້ອງການສະສົມທຶນຂອງພາກເອກະຊົນ ຍິ່ງເຮັດໃຫ້ການຂາດດຸນໜັກໜ່ວງ. ເມື່ອເປັນແນວນັ້ນ ຄຳວ່າສະຖຽນລະພາບໄດ້ກາຍເປັນຄຳຖາມເສັຽແລ້ວ.ໃນເດືອນກຸມພາ 1995 ຕາມການສະຫລຸບຕີລາຄາຂອງຄະນະກອງທຶນສາກົນ ທີ່ປະສານສົມທົບ ແລະໃຫ້ການປຶກສາແກ່ ເມັກຊິກໂກຈຶ່ງຫຼຸດຜ່ອນ

ການຂາດດຸນນັ້ນໃຫ້ຕ່ຳລົງ . ສະຖານະການຢູ່ເມັກຊິກໂກ ໃນປີ 1994 ແມ່ນມີຫລາຍເຫດການທີ່ບໍ່ເປັນຜົນດີຈາກພາຍໃນແລະພາຍນອກ,ຈາກນັ້ນ ຕົ້ນປີ 1994 ເມັກຊິກໂກກໍໄດ້ປະສົບກັບບັນຫາການຍົກອັດຕາດອກເບັ້ຍຂອງໂລກ ເຮັດໃຫ້ນັກລົງທຶນຕ່າງປະເທດ ຕ້ອງໄດ້ທົບທວນຄືນທຸນຂອງເຂົາເຈົ້າໃນຕະຫລາດການເງິນ .ຈາກສະພາບດັ່ງກ່າວເຮັດໃຫ້ຄ່າຂອງເງິນ ເປໂຊ ອ່ອນລົງ,ຊ້ຳບໍ່ພໍນະໂຍບາຍທີ່ແກ້ໄຂຍັງບໍ່ສອດຄ່ອງ . ການຂາດດຸນບັນຊີບໍລິຫານນັບມື້ນັບຂະຫຍາຍຂື້ນຮອດ 8% ຂອງ GDP ສຳລັບ 1994.

ບັນດາປັດໃຈຕ່າງໆເຫລົ່ານີ້ ປະກອບສ່ວນເຮັດໃຫ້ເກີດວິກິດການ ໃນເດືອນທັນວາ 1994. ວິກິດການເມັກຊິກໂກໄດ້ຖືກແກ້ໄຂດ້ວຍວິທີໃດ? ແມ່ນຍ້ອນປະຕິບັດແຜນການດັດແກ້ພາຍໃຕ້ການຮ່ວມມືກັບກອງທຶນສາກົນ ແລະການສະຫນັບສະຫນູນທາງດ້ານການເງິນຢ່າງຫລວງຫລາຍໃຫ້ແກ່ແຜນດັດແກ້ ຊຶ່ງກວມເອົາ 3 ປັດໃຈ :ກອງທຶນສາກົນ(IMF)ໄດ້ອະນຸມັດໃນເດືອນກຸມພາ ປີ 1995 ສິນເຊື່ອ ທີ່ບໍ່ໄດ້ຖອນໃຊ້ ຈຳນວນເງິນ 17,8 ຕື້ໂດລາ ເພື່ອຊຸກຍູ້ແຜນດັດແກ້ ຂອງເມັກຊິກໂກສຳລັບ 1995-96,ຊຶ່ງໃນນັ້ນຈຳນວນ7,8 ຕື້ໂດລາ ແມ່ນເງິນໃຫ້ໄດ້ໃນທັນທີໂລດ.ນອກນີ້ສອງປັດໃຈອື່ນ ແມ່ນການປະຕິບັດນະໂຍບາຍທີ່ເຂົ້າອົກເຂົ້າໃຈກັບ IMF,ໄດ້ຮັບການຄ້ຳປະກັນຈາກກອງທຶນຮັກສາ ສະຖຽນລະພາບ ອັດຕາແລກປ່ຽນເງິນໂດລາ ຈຳນວນ 20 ຕື້ໂດລາແລະອີກ 10 ຕື້ໄດ້ຈາກກຸ່ມທະນາຄານກາງ 10 ແຫ່ງສຳລັບການສະຫນັບສະຫນູນໄລຍະສັ້ນ. ເວົ້າໄດ້ການອະນຸມັດທຶນຂອງ IMF ໃຫ້ແກ່ເມັກຊິກໂກແມ່ນຫລວງຫລາຍທີ່ບໍ່ເຄີຍມີມາກ່ອນ ແລະກໍ່ແມ່ນກໍລະນີພິເສດທີ່ສຸດ .ບົດຮຽນຊີ້ໃຫ້ເຫັນວ່າການເພີ່ມທະວີການຮ່ວມກຸ່ມສາກົນ ທາງດ້ານການເງິນ ຈະເປັນຜົນປະໂຫຍດອັນໃຫຍ່ຫລວງແກ່ບັນດາປະເທດທີ່ເຂົ້າຮ່ວມ ທັງສາມາດຊ່ວຍກັນຫາວິທີປ້ອງກັນ ແລະແກ້ໄຂວິກິດການດ້ານການເງິນໄດ້ .ການປ້ອງກັນວິກິດການດ້ວຍການຄວບຄຸມອັດຕາແລກປ່ຽນ ແລະເປີດສູ່ຕະຫລາດແບບແຄບໆ ແມ່ນຄວາມພະຍາຍາມ ທີ່ບໍ່ສອດຄ່ອງ.ຈະແກ້ໄຂສິ່ງທ້າທາຍຂອງວິກິດການທາງດ້ານການເງິນແນວໃດ? ສັງລວມແລ້ວບົດຮຽນຈາກເມັກຊິກໂກ ໃນການດຳເນີນນະໂຍບາຍດ້ານເສດຖະກິດມີຫຍັງແດ່? ບົດບາດຂອງກອງທຶນສາກົນ ແລະການຮ່ວມມືສາກົນ ມີແນວໃດປະກອບສ່ວນຕໍ່ການປ້ອງກັນ ແລະແກ້ໄຂ .

ກ່ຽວກັບນະໂຍບາຍທາງດ້ານເສດຖະກິດເຫັນວ່າ 4 ບົດຮຽນທີ່ຄວນເອົາໃຈໃສ່ :

1. ການເປີດປະຕູສູ່ຕະຫລາດການເງິນສາກົນອັນນີ້ ແມ່ນບັງຄັບໃຫ້ເຮັດພັນທະດ້ານວິໄນຕໍ່ນະໂຍບາຍເສດຖະກິດ .

2. ການຂາດດຸນບັນຊີບໍລິຫານພາຍນອກຢ່າງຫລວງຫລາຍແມ່ນເປັນອັນຕະຫລາຍໂດຍສະເພາະເມື່ອຖືກນຳໃຊ້ ເພື່ອຊຸກຍູ້ການຊົມໃຊ້

➡

ພາຍໃນ ແລະດ້ວຍກະແສທຶນໄລຍະສັ້ນ .

3. ການຫລຸດຄຸ່ນຄ່າຂອງເງິນເມັກຊິກໂກ ໃນເດືອນທັນວາ ຈະສ້າງຄວາມຫຍຸ້ງຍາກໃນການຟື້ນຄືນ ແລະດັດສົມອັດຕາແລກປ່ຽນ .

4. ວິກິດການເມັກຊິກໂກເກີດຂື້ນ ຍ້ອນບໍ່ໄດ້ເອົາໃຈໃສ່ຕິດຕາມຢ່າງສະຫມ່ຳສະເຫມີແລະພິມເຜີຍແຜ່ຂໍ້ມູນຊື້ບອກທາງດ້ານເສດຖະກິດຕົ້ນຕໍໃນເວລາອັນສົມຄວນ.

ສຳລັບເບື້ອງກອງທຶນສາກົນສາມາດຊ່ວຍປ້ອງກັນວິກິດການ ບົນພື້ນການປະຕິບັດງານຮ່ວມກັນກັບປະເທດທີ່ກ່ຽວຂ້ອງໂດຽສະເພາະຄວາມຮັບຜິດຊອບຕໍ່ຫນ້າທີ່ການຕິດຕາມກວດກາ( Surveillance ) ຕໍ່ລະບົບເງິນຕາສາກົນ ແລະນະໂຍບາຍອັດຕາແລກປ່ຽນ ຂອງບັນດາປະເທດສະມາຊິກ .

ສຳລັບ ສປປລາວເຮົາຈະວາງນະໂຍບາຍການເງິນແນວໃດ?ຈຶ່ງຈະສອດຄ່ອງແລະຮັບປະກັນການຂະຫຍາຍຕົວທາງດ້ານເສດຖະກິດຢ່າງຕໍ່ເນື່ອງ ແລະເພີ່ມຂື້ນເພື່ອບັນລຸເປົ້າຫມາຍທາງດ້ານເສດຖະກິດ ກໍຄືແຜນການພັດທະນາເສດຖະກິດ-ສັງຄົມຮອດປີ 2000. ຕາມຄວາມເຫັນວິຊາການແລ້ວ ການເພີ່ມຄວາມເຂັ້ມແຂງໃຫ້ຂະແຫນງການເງິນ ແມ່ນມີຄວາມສຳຄັນແລະຈຳເປັນເພື່ອລະດົມແຫລ່ງທຶນປະຫຍັດແລະບໍລິການເປັນສື່ກາງທີ່ມີຄຸນນະພາບ,ສືບຕໍ່ຫັນໄປເປັນເສລີທາງດ້ານນະໂຍບາຍການຄ້າແລະການລົງທຶນສົ່ງເສີມຂາອອກ.ຢາກເຮັດໄດ້ແນວນັ້ນ ອີງໃສ່ສະພາບຕົວຈິງ ຂອງປະເທດເຮົາ , ໃນສົກປີ 1996-97 ຈະໄດ້ສືບຕໍ່ປະຕິບັດນະໂຍບາຍຮັດກຸມທາງດ້ານການເງິນ,ຄວບຄຸມລາຍຈ່າຍໄປຕາມບູລິມມະສິດເປົ້າຫມາຍແລະເຫນັ້ນຫນັກປະສິດທິຜົນ ຂອງການນຳໃຊ້ງົບປະມານ .ສຳລັບອັດຕາແລກປ່ຽນເງິນຕາ ບົນພື້ນຖານອັດຕາປະຈຸບັນ ແລະອີງໃສ່ປັດໃຈນອກຕົວເຫັນວ່າ ການປະຕິບັດອັດຕາແລກປ່ຽນແບບລອຍຕົວ ແມ່ນມີຄວາມຄ່ອງຕົວກ່ວາ ເພາະສາມາດປັບໃຫ້ສອດຄ່ອງກັບຄວາມຕ້ອງການ ແລະການສະຫນອງໃນສະເພາະຫນ້າແມ່ນແນໃສ່ຮັກສາອັດຕາແລກປ່ຽນໃຫ້ຫມັ້ນຄົງແບບທຣບຖານຈື່ງຈະສາມາດຮັກສາລະດັບເງິນເຟີ້ ແລະດັດສະນີລາຄາການບໍລິໂພກກໍຄື ຄວາມສາມາດຊື້ຂອງສັງຄົມດີຂື້ນ .



# ກົດໝາຍ

# ສ່ວຍສາອາກອນ

## ພາກທີ I

## ບົດບັນຍັດທົ່ວໄປ

**<u>ມາດຕາ 1</u> :** ໜ້າທີ່ຂອງກົດໝາຍຊ່ວຍສາອາກອນ

ກົດໝາຍສ່ວຍສາອາກອນ ມີໜ້າທີ່ກຳນົດ ລະບົບສ່ວຍສາອາກອນ ໃຫ້ທຸກພາກສ່ວນເສດຖະກິດ,ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ,ພົນລະເມືອງລາວ,ຊາວຕ່າງດ້າວ ,ຊາວຕ່າງປະເທດລວມທັງຜູ້ບໍ່ມີສັນຊາດທີ່ດຳເນີນທຸລະກິດ ຊຶ່ທຳມາຫາກິນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ຕ້ອງປະກອບສ່ວນເຂົ້າໃນພາລະກິດຂອງຊາດ; ສົ່ງເສີມການດຳເນີນທຸລະກິດ ໃນທຸກຂະແໜງການ,ກະຕຸກຊຸກຍູ້ການຈໍລະແຈກຢາຍສິນຄ້າ ໃຫ້ຂະຫຍາຍຕົວ,ເຮັດໃຫ້ເງິນຕາ ແລະລາຄາຢູ່ໃນທ້ອງຕະຫຼາດມີຄວາມສະຫງົບ ເປັນປົກກະຕິ,ດັດສະເລັ່ຽລາຍໄດ້ ລະຫວ່າງທຸກຊັ້ນຄົນຢ່າງຍຸດຕິທຳ ແລະຮັບປະກັນລາຍຮັບໃຫ້ແກ່ງົບປະມານຂອງລັດ,ເຮັດໃຫ້ເສດຖະກິດຊາດມີການຂະຫຍາຍຕົວຕາມຈັງຫວະຕໍ່ເນື່ອງ ແລະປົກກະຕິ .

**<u>ມາດຕາ 2</u>** : ສ່ວຍສາອາກອນ

ສ່ວຍສາອາກອນ ແມ່ນພັນທະຂອງທຸກຄົນ ທີ່ດຳເນີນກິດຈະການ ຊຶ່ທຳມາຫາກິນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງໄດ້ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ .

**<u>ມາດຕາ 3</u>** : ລະບົບສ່ວຍສາອາກອນ

ລະບົບສ່ວຍສາອາກອນຂອງ ສາທາະລນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍສ່ວຍສາອາກອນທາງອ້ອມ ແລະສ່ວຍສາອາກອນທາງກົງ .

ສ່ວຍສາອາກອນທາງອ້ອມມີ:

- ອາກອນຕົວເລກທຸລະກິດ;

- ອາກອນຊົມໃຊ້.

ສ່ວຍສາອາກອນທາງກົງມີ :

- ອາກອນກຳໄລ;
- ອາກອນລາຍໄດ້;
- ອາກອນຕ່ຳສຸດ;
- ຄ່າທຳນຽມຕ່າງໆ .

**ມາດຕາ 4** : ການນຳໃຊ້ກົດໝາຍສ່ວຍສາອາກອນ

ກົດໝາຍ ສ່ວຍສາອາກອນນຳໃຊ້ຕໍ່ບຸກຄົນ ຫຼືນິຕິບຸກຄົນທີ່ຊົມໃຊ້ ສິນຄ້າເຄື່ອງຂອງ ຫຼືການບໍລິການ,ດຳເນີນທຸລະກິດ,ປະກອບອາຊີບອິດສະລະ ແລະມີລາຍໄດ້ຕ່າງໆຢູ່ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ .

## ພາກທີ II

## ອາກອນຕົວເລກທຸລະກິດ

### ໝວດທີ 1

### ລະບຽບການກ່ຽວກັບອາກອນຕົວເລກທຸລະກິດ

**ມາດຕາ 5** : ອາກອນຕົວເລກທຸລະກິດ

ອາກອນຕົວເລກທຸລະກິດ ແມ່ນອາກອນທາງອ້ອມ ເຊິ່ງຜູ້ຊົມໃຊ້ສິນຄ້າເຄື່ອງຂອງ ຫຼືການບໍລິການທົ່ວໄປ ມອບເຂົ້າງົບປະມານແຫ່ງລັດ ຜ່ານຜູ້ດຳເນີນກິດຈະການຕ່າງໆທີ່ບົ່ງໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້ .

**ມາດຕາ 6** : ເຂດແດນຂອງອາກອນຕົວເລກທຸລະກິດ

ອາກອນຕົວເລກທຸລະກິດ ແມ່ນໃຫ້ເກັບຈາກການນຳເຂົ້າ , ການຂາຍສິນຄ້າເຄື່ອງຂອງ ແລະການບໍລິການທົ່ວໄປທີ່ໄດ້ດຳເນີນຢູ່ໃນດິນແດນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 7** : ກິດຈະການທີ່ຕ້ອງເສັຽອາກອນຕົວເລກທຸລະກິດ

ກິດຈະການຕ່າງໆດັ່ງຕໍ່ໄປນີ້ ລ້ວນແຕ່ຕ້ອງເສັຽອາກອນຕົວເລກທຸລະກິດ :

1. ການນຳເຂົ້າສິນຄ້າເຄື່ອງຂອງຈາກຕ່າງປະເທດ ເຊິ່ງແມ່ນການນຳເອົາສິນຄ້າເຄື່ອງຂອງ ເຂົ້າມາໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ;
2. ການຂາຍເທື່ອທີ່ໜຶ່ງ ສິນຄ້າເຄື່ອງຂອງທີ່ນຳເຂົ້າມາຈາກຕ່າງປະເທດ ຫລື ທີ່ຜະລິດຢູ່

ພາຍໃນປະເທດ ໂດຍຜູ້ນຳເຂົ້າ ຫລືຜູ້ຜະລິດ ເຊິ່ງແມ່ນການໂອນມອບກຳມະສິດສິນຄ້າ ເຄື່ອງຂອງເທື່ອທີໜຶ່ງໃຫ້ແກ່ຜູ້ອື່ນຈາກຜູ້ນຳເຂົ້າ ຫລືຜູ້ຜະລິດໂດຍໄດ້ຮັບຄ່າຕອບແທນ ເປັນເງິນ ຫລືຜົນປະໂຫຍດຢ່າງອື່ນໂດຍບໍ່ຈຳແນກການຂາຍຍົກ,ຂາຍຍ່ອຍ,ຂາຍເປັນເງິນ ສົດ,ຂາຍເປັນເງິນເຊື່ອ,ຂາຍຝາກ ຫລືແລກປ່ຽນ .

3. ການບໍລິການທົ່ວໄປ ຊຶ່ງແມ່ນກິດຈະການເສດຖະກິດ ທີ່ບໍ່ແມ່ນການນຳເຂົ້າຫລືການຜະລິດ,ການຂາຍສິນຄ້າ ແຕ່ເປັນການສະໜອງແຮງງານ ໃຫ້ແກ່ຜູ້ອື່ນ ໂດຍໄດ້ຮັບ ຄ່າບໍລິການ ເປັນສິ່ງຕອບແທນ ເຊັ່ນ : ກິດຈະການຂົນສົ່ງໄປສະນີ,ໂທລະຄົມມະນາຄົມ,ກໍ່ສ້າງ, ສ້ອມແປງ,ການຮັບເໝົາຄຸ້ມຄອງຕະຫລາດ , ການພັດທະນາທີ່ດິນ ເພື່ອຂາຍສິດນຳໃຊ້ , ກິດຈະການໂຮງແຮມ,ທ່ອງທ່ຽວ,ກິນດື່ມ,ກິດຈະການສະແດງສິນລະປະວັນນະຄະດີ,ກິລາ ກິດຈະການບັນເທີງ,ກິດຈະການການແພດ,ການເປັນນາຍໜ້າ ຫລືຕົວແທນ ແລະກິດຈະການອື່ນໆ ທີ່ມີການສະໜອງແຮງງານ ແລະໄດ້ຮັບຄ່າຕອບແທນ .

**<u>ມາດຕາ 8 :</u>** ຜູ້ທີ່ມີໜ້າທີ່ເສັຽພາສີອາກອນຕົວເລກທຸລະກິດ

ບຸກຄົນ ຫລືນິຕິບຸກຄົນທີ່ດຳເນີນກິດຈະການ ເຊິ່ງໄດ້ກຳນົດໄວ້ໃນມາດຕາ 7 ຂອງ ກົດໝາຍສະບັບນີ້ ລ້ວນແຕ່ຕ້ອງເສັຽອາກອນຕົວເລກທຸລະກິດ ໂດຍບໍ່ຈຳແນກວ່າການ ເຄື່ອນໄຫວ ຈະເຮັດຕໍ່ເນື່ອງ ຫລືເປັນບາງຄັ້ງຄາວ,ຈະມີລັກສະນະທຸລະກິດຫລືບໍ່ກໍ່ຕາມ .

**<u>ມາດຕາ 9 :</u>** ການຍົກເວັ້ນອາກອນຕົວເລກທຸລະກິດ

ກິດຈະການທີ່ຖືກຍົກເວັ້ນອາກອນຕົວເລກທຸລະກິດ ມີດັ່ງນີ້ :

- ການນຳເຂົ້າແນວພັນພືດ,ແນວພັນສັດ ແລະຢາປາບສັດຕູພືດ;
- ການນຳເຂົ້າວັດຖຸ ອຸປະກອນ ແລະເຄມີສຳລັບການຄົ້ນຄ້ວາແລະວິໄຈວິທະຍາສາດ;
- ການນຳເຂົ້າຄຳ ເພື່ອສະຖາບັນພິມຈຳໜ່າຍທະນາບັດ;
- ການນຳເຂົ້າທະນະບັດເປັນເຈັ້ຽ ຫລືເປັນໂລຫະ;
- ການນຳເຂົ້າ ຫລືກິດຈະການກ່ຽວກັບສະແຕມອາກອນ ຫລືສະແຕມໄປສະນີ;
- ການນຳເຂົ້າເຮືອບິນ ແລະອຸປະກອນການຮັບໃຊ້ການຂົນສົ່ງສາກົນ ທາງອາກາດ;
- ການນຳເຂົ້າສິນຄ້າເຄື່ອງຂອງ ເພື່ອປະກອບໃສ່ເຮືອບິນ ທີ່ດຳເນີນການຂົນສົ່ງສາກົນ;
- ການນຳເຂົ້າສິນຄ້າເຄື່ອງຂອງ ເພື່ອຈຳໜ່າຍໃຫ້ແກ່ນັກການທູດ,ສະຖານທູດ ແລະອົງການຈັດຕັ້ງສາກົນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມການອະນຸຍາດຂອງກະຊວງການຕ່າງປະເທດ ;

- ການນຳເຂົ້າສິນຄ້າເຄື່ອງຂອງ ທີ່ໄດ້ຮັບການຍົກເວັ້ນ ຫລືວິດເກັບພາສີຂາເຂົ້າຊົ່ວຄາວ;

- ການນຳເຂົ້າ ແລະການຂາຍຢາປົວສັດ ;

- ການຂາຍຜະລິດຕະຜົນກະສິກຳ ໂດຍຊາວກະສິກອນທີ່ຜະລິດດ້ວຍຕົນເອງ;

- ການຂາຍຜະລິດຕະຜົນກະສິກຳ,ຜະລິດຕະພັນຫັດຖະກຳໂດຍລັດຖະກອນ ຫລືສະມາຊິກ ສະຫະກອນ ທີ່ຢູ່ໃນຂອບເຂດ ຂອງເສດຖະກິດຄອບຄົວ ;

- ກິດຈະການກ້າເບັ້ຍໄມ້,ປູກຕົ້ນໄມ້ເປັນປ່າ ,ຕົ້ນໄມ້ອຸດສາຫະກຳ,ຕົ້ນໄມ້ກິນໝາກ; ການຂາຍສິນຄ້າເຄື່ອງຂອງອອກນອກປະເທດລວມທັງຄ່າບໍລິການທີ່ຕິດພັນກັບການສົ່ງອອກ;

- ການຂົນສົ່ງສາກົນແລະການບໍລິການທີ່ຕິດພັນໂດຍກົງກັບການຂົນສົ່ງດັ່ງກ່າວ .

ການສົ່ງອອກສາກົນ ໝາຍເຖິງການຂົນສົ່ງຄົນໂດຍສານ ຫລືສິ່ງຂອງມາຈາກຕ່າງປະເທດ ໂດຍບໍ່ຈຳແນກທາງບົກ,ທາງນ້ຳ ແລະທາງອາກາດ;

- ການຂົນສົ່ງດ້ວຍແຮງງານຄົນ,ແຮງງານສັດທຸກປະເພດ ແລະເຮືອທີ່ບໍ່ມີເຄື່ອງຈັກ;

- ການໃຫ້ເຊົ່າຊັບຄົງທີ່ ເຊັ່ນ :ທີ່ດິນ,ເຮືອນ ຫຼືຊັບອື່ນໆຂອງຜູ້ທີ່ບໍ່ໄດ້ດຳເນີນທຸລະກິດ ;

- ການບໍລິການສົ່ງອອກໄປຕ່າງປະເທດ;

- ການເຄື່ອນໄຫວອາຊີບອິດສະລະດ້ວຍຕົນເອງ ;

- ກິດຈະການກ່ຽວກັບການສຶກສາເຊັ່ນ: ໂຮງຮຽນອະນຸບານ,ປະຖົມ,ມັດທະຍົມ,ອຸດົມ,ມະຫາວິທະຍາໄລ ແລະໂຮງຮຽນວິຊາຊີບທົ່ວໄປ ;

- ກິດຈະການຫາລາຍໄດ້ ເພື່ອການກຸສົນ ເຊິ່ງຈັດຂຶ້ນໂດຍອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງສັງຄົມ ທີ່ໄດ້ຮັບການອະນຸຍາດຢ່າງຖືກຕ້ອງ ;

- ກິດຈະການທະນາຄານ ແລະການປະກັນໄພ ;

## ໝວດທີ 2

## ເວລາຄິດໄລ່ເກັບອາກອນ ແລະ ພື້ນຖານການຄິດໄລ່ອາກອນຕົວເລກທຸລະກິດ

**<u>ມາດຕາ10 :</u>** ເວລາຄິດໄລ່ເກັບອາກອນ ແລະພື້ນຖານການຄິດໄລ່ອາກອນຕົວເລກທຸລະກິດ

ເວລາຄິດໄລ່ເກັບອາກອນ ແລະພື້ນຖານການຄິດໄລ່ອາກອນຕົວເລກທຸລະກິດໄດ້ກຳນົດໄວ້ດັ່ງນີ້ :

1. ສຳລັບການນຳເຂົ້າສິນຄ້າເຄື່ອງຂອງ ຈາກຕ່າງປະເທດ ອາກອນແມ່ນຄິດໄລ່ເອົາເມື່ອ

ເວລາແຈ້ງເສັຽພາສີຂາເຂົ້າ.ພື້ນຖານການຄິດໄລ່ ແມ່ນມູນຄ່າແຈ້ງ ພາສີຂາເຂົ້າ ຂອງສິນຄ້າເຄື່ອງຂອງທີ່ນຳເຂົ້າບວກກັບຄ່າພາສີຂາເຂົ້າ,ອາກອນຊົມໃຊ້(ຖ້າມີ)ແລະຄ່າທຳນຽມອື່ນໆ .

ມູນຄ່າແຈ້ງພາສີຂາເຂົ້າ ແມ່ນມູນຄ່າຕົວຈິງຂອງສິນຄ້າເຄື່ອງຂອງບວກຄ່າປະກັນໄພ ແລະຄ່າຂົນສົ່ງຮອດຊາຍແດນບ່ອນນຳເຂົ້າ ;

2. ສຳລັບການຂາຍເພື່ອທີ່ຫນຶ່ງ ສິນຄ້າເຄື່ອງຂອງທີ່ນຳເຂົ້າຈາກຕ່າງປະເທດ ຫລືທີ່ຜະລິດຢູ່ພາຍໃນປະເທດ ອາກອນແມ່ນຄິດໄລ່ເອົາເວລາຂາຍ ຫລືເວລາສົ່ງມອບເພື່ອທີ່ຫນຶ່ງສິນຄ້າເຄື່ອງຂອງດັ່ງກ່າວຈາກຜູ້ນຳເຂົ້າ ຫລືຜູ້ຜະລິດ .ພື້ນຖານການຄິດໄລ່ແມ່ນລາຄາຂາຍຕົວຈິງ ນອກອາກອນຕົວເລກທຸລະກິດ;

3. ສຳລັບການບໍລິການ ອາກອນແມ່ນຄິດໄລ່ເອົາເມື່ອ ເວລາສຳເລັດກິດຈະການທັງຫມົດ ຫລື ບາງສ່ວນ.ພື້ນຖານການຄິດໄລ່ ແມ່ນຄ່າບໍລິການຕົວຈິງ ນອກອາກອນຕົວເລກທຸລະກິດທີ່ໄດ້ຮັບ .

<u>**ມາດຕາ 11**</u> : ການຊົມໃຊ້ດ້ວຍຕົນເອງ ແລະການນຳເຂົ້າຊົ່ວຄາວ

ສິນຄ້າເຄື່ອງຂອງທີ່ນຳເຂົ້າມາຈາກຕ່າງປະເທດ ຫລືທີ່ຜະລິດຢູ່ພາຍໃນປະເທດ,ສິ່ງປຸກສ້າງ ຫຼືການບໍລິການ ເຊິ່ງຜູ້ດຳເນີນທຸລະກິດນຳມາໃຊ້ເອງລ້ວນແຕ່ຕ້ອງເສັຽອາກອນຕົວເລກທຸລະກິດຕາມຫລັກການລວມ ຍົກເວັ້ນສິ່ງທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດຫມາຍສະບັບນີ້ ,ພື້ນຖານການຄິດໄລ່ແມ່ນລາຄາສິນຄ້າເຄື່ອງຂອງດັ່ງກ່າວ ທີ່ໄດ້ປະຕິບັດກັນຢູ່ບ່ອນນັ້ນ ແລະໃນເວລານັ້ນ .

ສິນຄ້າເຄື່ອງຂອງທີ່ນຳເຂົ້າ ຈາກຕ່າງປະເທດ ຕາມລະບົບງົດເກັບພາສີຂາເຂົ້າ ຫລືຕາມນະໂຍບາຍພິເສດອື່ນໆ ເມື່ອເວລາຂາຍສິນຄ້າເຄື່ອງຂອງດັ່ງກ່າວ ກໍລ້ວນແຕ່ຕ້ອງໄດ້ແຈ້ງເສັຽອາກອນຕົວເລກທຸລະກິດ ເຊັ່ນດຽວກັນ. ພື້ນຖານການຄິດໄລ່ ແມ່ນລາຄາຊື້ຂາຍຕົວຈິງໃນເວລານັ້ນ ;

## ຫມວດທີ 3
## ອັດຕາອາກອນຕົວເລກທຸລະກິດ

<u>**ມາດຕາ 12**</u> : ອັດຕາອາກອນຕົວເລກທຸລະກິດ

ອັດຕາອາກອນຕົວເລກທຸລະກິດ ໄດ້ກຳນົດໄວ້ດັ່ງນີ້ :

**ກ. ອັດຕາ 3% ສຳລັບທຸລະກິດ :**

**1. ການນຳເຂົ້າ,ການຂາຍ**

- ຜະລິດຕະພັນກະສິກຳ ເຊັ່ນ : ເຂົ້າສານ,ຣຳ,ແປ້ງເຂົ້າ,ແປ້ງມັນ ແລະແປ້ງສາລີເປັນຕົ້ນ;

- ຜະລິດຕະພັນອາຫານ;

- ວັດຖຸດິບ,ຜະລິດຕະພັນເຄິ່ງສຳເລັດຮູບ,ເຄມີຮັບໃຊ້ການຜະລິດກະສິກຳ,ອຸດສາຫະກຳ ແລະຫັດຖະກຳ ;

- ປຸຍ ແລະອາຫານສັດ ;

- ເຄື່ອງຈັກ,ເຄື່ອງມື ແລະອຸປະກອນຮັບໃຊ້ການປູກຝັງ,ການລ້ຽງສັດແລະການຜະລິດ(ກະສິກຳ,ອຸດສາຫະກຳ ແລະຫັດຖະກຳ);

- ເຄື່ອງຈັກ ຫຼືພາຫະນະຮັບໃຊ້ການບຸກເບີກ,ລາກແກ່,ການຂຸດຄົ້ນບໍ່ແຮ່,ນ້ຳມັນ,ອາຍແກ๊ດ ການກໍ່ສ້າງພື້ນຖານວັດຖຸເຕັກນິກ ເຊັ່ນ : ຂົວທາງ,ຊົນລະປະທານ,ເຂື່ອນ,ທ່າເຮືອ , ເດີ່ນບິນ ລວມທັງເຄື່ອອາໄຫຼ່ຂອງພາຫະນະດັ່ງກ່າວ ;

- ແຮ່ທາດຕ່າງໆ ເຊັ່ນ: ແຮ່ເຫຼັກ,ແຮ່ກົ່ວ,ແຮ່ຊືນ,ແຮ່ຂາວ,ແຮ່ທອງແດງ ແລະອື່ນໆທີ່ຄ້າຍຄຽງ;

- ນ້ຳປະປາ;

- ຢາປົວຄົນ,ອຸປະກອນການແພດ ແລະການສຶກສາ ;

- ລິດພະຍາບານ,ລົດດັບເພີງ ແລະລົດວິຊາສະເພາະອື່ນໆ;

- ລົດຖີບ ແລະລົດສາມລໍ້ຖີບ,

- ເສັ້ນຝ້າຍ,ເສັ້ນໄໝ,ເສັ້ນໃຍຕ່າງໆ;

- ຜະລິດຕະພັນວິຈິດຕະກຳ,ສິນລະປະກຳ ແລະຫັດຖະກຳ;

- ເຄື່ອງຫຼິ້ນເດັກນ້ອຍ;

- ອຸປະກອນການກິລາ ແລະກາຍຍະກຳ.

**2. ການບໍລິການ** :

- ການບໍລິການດ້ານກະວິກຳດ້ວຍເຄື່ອງຈັກ;

- ການວິໄຈດິນປູກຝັງ,ດິນກໍ່ສ້າງ,ປ່າໄມ້ ແລະວິໄຈແຮ່ທາດຕ່າງໆ;

- ການອະນາໄມຕົວເມືອງ;

- ໂຮງຂ້າສັດ ແລະການຂ້າສັດທົ່ວໄປ;

- ການບໍລິການຕັດຜົມ ແລະເສີມສວຍ;

- ກິດຈະການປິ່ນປົວຄົນ ແລະສັດ ;
- ກິດຈະການສະແດງລະຄອນ,ລຳເລື່ອງ,ສິນລະປະວັນນະຄະດີ,ກິລາເຊັ່ນ:ບານເຕະ,ບານສົ່ງ,ບານບ້ວງ,ຕີມວຍ,ເຕັ້ນບົດ ແລະກາຍຍະກຳ;
- ກິດຈະການກາຍຍະບຳບັດ;
- ການຕີເງິນ ແລະຄຳ;
- ການເຈຍລະໄນນິນ,ເພັດ,ພອຍ ແລະແກ້ວ .

ຂ. ອັດຕາຫ້າສ່ວນຮ້ອຍ(5%) ສຳລັບທຸລະກິດ :

1. ການນຳເຂົ້າ , ການຂາຍ :
- ກະແສໄຟຟ້າ,ເຄື່ອງມື ແລະອຸປະກອນໄຟຟ້າ;
- ນ້ຳມັນເຊື້ອໄຟທຸກຊະນິດ ;
- ຖ່ານໄມ້ ແລະຟືນ ;
- ວັດສະດຸ ແລະອຸປະກອນກໍ່ສ້າງທົ່ວໄປ ລວມທັງຫີນ ແລະຊາຍ;
- ຜະລິດຕະພັນປຸງແຕ່ງໄມ້,ຫວາຍ;
- ຜະລິດຕະພັນປຸງແຕ່ງຈາກຊາ,ກາເຟ;
- ນ້ຳດື່ມບໍລິສຸດ,ນ້ຳກ້ອນ,ກະແລ້ມ;
- ນ້ຳຫວານ,ນ້ຳອັດລົມ ແລະເຄື່ອງດື່ມອື່ນໆ ທີ່ບໍ່ມີເຫລົ້າ;
- ເຄື່ອງຮັບໃຊ້ຫ້ອງການທົ່ວໄປລວມທັງຈັກພິມດີດ,ຈັກໂຣເນໂອ,ຈັກອັດສຳເນົາເອກະສານ ຈັກຄິດໄລ່,ເຄື່ອງຄອມພິວເຕີລວມທັງອຸປະກອນຂອງເຄື່ອງດັ່ງກ່າວ ;
- ອຸປະກອນສື່ສານ ແລະໂທລະຄົມມະນາຄົມ;
- ເຄື່ອງເຮືອນ ເຊັ່ນ : ຊຸດຮັບແຂກ,ໂຕະ,ຕັ່ງ,ຕູ້,ຕຽງ,ເສື່ອ,ໝອນ ແລະອື່ນໆ ;
- ເຄື່ອງໃຊ້ໃນເຮືອນທີ່ໃຊ້ດ້ວຍໄຟຟ້າ ເຊັ່ນ: ຕູ້ເຢັນ,ເຕົາໄຟຟ້າ,ເຕົາຣີດ,ເຄື່ອງຕູ້ນ້ຳເຢັນ,ໝໍ້ຕົ້ມນ້ຳ,ພັດລົມ,ວິທະຍຸ,ເຄື່ອງດູດຝຸ່ນ,ເຄື່ອງຈັກຊັກຜ້າ,ເຄື່ອງບົດຊີ້ນ,ເຄື່ອງບົດໝາກໄມ້ ແລະອື່ນໆ .

( ອ່ານຕໍ່ສະບັບໜ້າ )

PEPSI

ບໍລິສັດນ້ຳຫວານລາວ
ຈຳກັດ ,ທີ່ຢູ່ ຫລັກ 17
ຖະໜົນ ທ່າເດື່ອ , ນະ
ຄອນຫລວງວຽງຈັນ ;
ໂທຣ: 81 2007 ,
41 2558
ໂທລະສານ: 81 2006

*ລົດຊາດ ຂອງຄົນລຸ້ນໃຫມ່*



24 / VII
ຫ້າມຈຳໜ່າຍ







# ໂຮງງານຜະລິດຢາ ເລກ 2

**PHARMACEUTICAL FACTORY No 2**




**ຢາດີ**
**ມີຄຸນນະພາບ**
**ມາດຕະຖານສາກົນ**

ຖ້າທ່ານຕ້ອງ ການເຊີນຕິດຕໍ່ໄດ້ ທີ່ໂຮງງານ ຜະລິດຢາ ເລກ 2 ຫລື ສາຂາຕົວແທນ ຈຳໜ່າຍ ທີ່ກຳແພງນະຄອນວຽງຈັນ ຫລື ສາຂາຕົວແທນຈຳໜ່າຍ ທີ່ຕ່າງແຂວງ.

ໂສກປ່າຫລວງ, ວຽງຈັນ ສ.ປ.ປ.ລ
ຕູ້ ປ.ນ. 2580
ໂທ: 3400, 16-9711
312271-314722

Sokpaluanq, vientiane
L.P.D.R
P.o.Box: 2580
Tel: 3400, 18-9711
312271-314722


- ພິມທີ່ໂຮງພິມຊາວໜຸ່ມ ຖະໜົນຫລວງພະບາງ ໂທ : 216338 - 215721 ຕູ້ ປ.ນ 2536